ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---==00000==---

ກະຊວງກະສິກຳ ແລະ ປ່າໄມ້

# ເອກະສານປະກອບການຮຽນ ການສອນ ວິຊາ

# ການປູກໄມ້ໃຫ້ໝາກ

# Fruit Tree Production

ຫຼັກສູດສຳລັບໂຮງຮຽນ ກະສິກຳ ແລະ ປ່າໄມ້ ຊັ້ນກາງ

ກະຊວງກະສິກຳ ແລະ ປ່າໄມ້

ສະໜັບສະໜູນໂດຍອົງການຮ່ວມມືສາກົນເພື່ອການພັດທະນາ ແລະ ສາມັກຄີ

ທີ່ປຶກສາດ້ານວິຊາການໂດຍ: ສະຖາບັນເທັກໂນໂລຢີລາຊະມົງຄົນ ກາລະສິນ

# ສາລະບານ


| | | ໜ້າ |
|---|---|---|
| **ສາລະບານ** | | A |
| **ສາລະບານຕາຕະລາງ** | | C |
| **ບົດທິດສະດີທີ 1.** | ຄວາມສຳຄັນຂອງການປູກໄມ້ໃຫ້ໝາກ | 1 |
| | 1.1 ສະພາບລວມ | 1 |
| | 1.2 ຄວາມສຳຄັນຂອງໄມ້ໃຫ້ໝາກ | 2 |
| **ບົດທິດສະດີທີ 2.** | ການເລືອກເນື້ອທີ່ປູກໄມ້ໃຫ້ໝາກ | 4 |
| | 2.1 ການເລືອກເນື້ອທີ່ປູກໄມ້ໃຫ້ໝາກ | 4 |
| **ບົດທິດສະດີທີ 3.** | ການຈຳແນກໄມ້ໃຫ້ໝາກ | 7 |
| | 3.1 ການຈຳແນກໄມ້ໃຫ້ໝາກ | 7 |
| **ບົດທິດສະດີທີ 4.** | ການກຽມເນື້ອທີ່ເພື່ອປູກໄມ້ໃຫ້ໝາກ | 9 |
| | 4.1 ສະພາບເນື້ອທີ່ປູກໄມ້ໃຫ້ໝາກ | 9 |
| | 4.2 ລະບົບການປູກໄມ້ໃຫ້ໝາກ | 11 |
| | 4.3 ການຄິດໄລ່ຈຳນວນຕົ້ນຕໍ່ເນື້ອທີ່ | 12 |
| | 4.4 ການປູກຕົ້ນໄມ້ເພື່ອກັນລົມ | 13 |
| | 4.5 ການໃຊ້ວັດຖຸຄຸມດິນ | 15 |
| | 4.6 ການປກູພືດຄຸມດິນ | 16 |
| **ບົດທິດສະດີທີ 5.** | ການຂະຫຍາຍພັນໄມ້ໃຫ້ໝາກ | 16 |
| | 5.1 ການຂະຫຍາຍພັນດ້ວຍແກ່ນ | 16 |
| | 5.2 ການຂະຫຍາຍພັນແບບບໍ່ໃຊ້ເພດ | 19 |
| **ບົດທິດສະດີທີ 6.** | ການບົວລະບັດຮັກສາສວນໄມ້ໃຫ້ໝາກ | 23 |
| | 6.1 ການໃຫ້ນ້ຳແກ່ໄມ້ໃຫ້ໝາກ | 23 |
| | 6.2 ການຕັດແຕ່ງກິ່ງ | 25 |
| | 6.3 ຝຸ່ນ ແລະ ການໃຫ້ຝຸ່ນແກ່ຕົ້ນໄມ້ໃຫ້ໝາກ | 28 |

# ສາລະບານ ( ຕໍ່ )


| | | |
|---|---|---|
| | | **ໜ້າ** |
| | 6.4 ການໃຊ້ຮໍໂມນພືດກັບໄມ້ໃຫ້ໝາກ | 33 |
| | 6.5 ພະຍາດ, ແມງໄມ້ສັດຕູທີ່ມັກທຳລາຍໄມ້ໃຫ້ໝາກ ແລະ ວິທີປ້ອງກັນກຳຈັດ | 34 |
| **ບົດທີດສະດີທີ 7.** | ການເກັບໝາກ ແລະ ການປະຕິບັດຫລັງການເກັບໝາກ | 48 |
| | 7.1 ການເກັບໝາກ | 48 |
| | 7.2 ການປະຕິບັດຫລັງຈາກການເກັບໝາກ | 50 |
| **ບົດທີດສະດີທີ 8** | ເທັກນິກກະສິກຳຍືນນານໃນການປູກໄມ້ກິນໝາກ | 52 |
| | 8.1 ຝຸ່ນຊີວະພາບ | 52 |
| | 8.2 ການຄວບຄຸມສັດຕູພືດແບບກະສິກຳຍືນນານ | 53 |
| | 8.3 ການຄວບຄຸມສັດຕູພືດໂດຍຊີວະວິທີ | 54 |
| | 8.4 ການໃຊ້ຝຸ່ນ ຫຼື ວັດຖຸທຳມະຊາດໃນໄມ້ໃຫ້ໝາກ | 54 |
| | 8.5 ການອະນຸລັກ ແລະ ນຳໃຊ້ປະໂຫຍດໄມ້ໃຫ້ໝາກພື້ນເມືອງ | 56 |
| **ເອກະສານອ້າງອີງ** | | 58 |

# ສາລະບານຕາຕະລາງ


ໜ້າ

ຕາຕະລາງທີ

1. ໄລຍະປູກທີ່ເໝາະສົມສຳລັບໄມ້ໃຫ້ໝາກທົ່ວໄປ 13
2. ຄວາມເໝາະສົມໃນການເກັບເມັດ ແລະ ເວລາ ໃນການງອກຂອງເມັດ 18
3. ພະຍາດທີ່ສຳຄັນຂອງໄມ້ໃຫ້ໝາກບາງຊະນິດ ແລະ ການປ້ອງກັນກຳຈັດ 36
4. ແມງສັດຕູໄມ້ໃຫ້ໝາກບາງຊະນິດແລະການປ້ອງກັນກຳຈັດ 42

ກະຊວງກະສິກຳ ແລະ ປ່າໄມ້

# ເອກະສານປະກອບການຮຽນ ການສອນ ວິຊາ

# ການປູກໄມ້ໃຫ້ໝາກ

# Fruit Tree Production

ຫຼັກສູດສຳລັບໂຮງຮຽນ ກະສິກຳ ແລະ ປ່າໄມ້ ຊັ້ນກາງ

ກະຊວງກະສິກຳ ແລະ ປ່າໄມ້

ສະໜັບສະໜູນໂດຍອົງການຮ່ວມມືສາກົນເພື່ອການພັດທະນາ ແລະ ສາມັກຄີ

ທີ່ປຶກສາດ້ານວິຊາການໂດຍ: ສະຖາບັນເທັກໂນໂລຢີລາຊມົງຄົນ ກາລະສິນ

# ບົດທົດສະດີທີ 1
# ຄວາມສຳຄັນຂອງການປູກໄມ້ໃຫ້ໝາກ

**ຈຸດປະສົງການສອນ**

1. ບອກເຖິງສະພາບລວມກ່ຽວກັບການກະສິກຳ ແລະ ປ່າໄມ້ຢູ່ໃນ ສປປ ລາວ

2.ອກເຖິງຄວາມສຳຄັນຂອງໄມ້ໃຫ້ໝາກຕໍ່ກັບການປະກອບເປັນອາຊີບ

3.ອະທິບາຍຄວາມສຳຄັນຂອງໄມ້ໃຫ້ໝາກຕໍ່ທາງດ້ານສະບຽງອາຫານ

4. ອະທິບາຍຄວາມສຳຄັນຂອງໄມ້ໃຫ້ໝາກຕໍ່ກັບສະພາບແວດລ້ອມ

5. ອະທິບາຍຄວາມສຳຄັນຂອງໄມ້ໃຫ້ໝາກຕໍ່ກັບທາງດ້ານໂພຊະນາການ.

## ເນື້ອໃນ

### 1.1 ສະພາບລວມ

ປະເທດຂອງພວກເຮົາ ມີດິນດອນຕອນຫຍ້າອັນກ້ວາງຂວາງ ທີ່ເໝາະສົມຕໍ່ການປູກຝັງ ມີແມ່ນ້ຳລຳເຊ, ຫ້ວຍຮ່ອງຄອງບຶງ ຢ່າງຫລວງຫລາຍ ເຊິ່ງໄດ້ອຳນວຍຄວາມສະດວກໃຫ້ແກ່ການຜະລິດ. ເນື້ອທີ່ປູກຝັງສຳລັບພືດຕ່າງໆ ທົ່ວປະເທດມີ 800.000 ເຮັກຕາ, ໃນນັ້ນມີນາປີ 45.000 ເຮັກຕາ, ນາແຊງ 17.000 ເຮັກຕາ ແລະ ພືດອື່ນໆ 110.400 ເຮັກຕາ (ຂໍ້ມູນຈາກ ກົມປູກຝັງ ແລະ ສົ່ງເສີມການກະສິກຳ ກະຊວງກະສິກຳປ່າໄມ້ ປີ 1995), ທົ່ງຫຍ້າ ມີປະມານ 750.000 ເຮັກຕາ, ເນື້ອທີ່ສຳລັບການລ້ຽງປາມີປະມານ 50.000 ເຮັກຕາ, ເນື້ອທີ່ປ່າໄມ້ມີ ປະມານ 11.200.000 ເຮັກຕາ (ແຜນພັດທະນາເສດຖະກິດສັງຄົມພາກເໜືອ ປີ 1994) ປ່າໄມ້ທີ່ຖືກທຳລາຍແຕ່ລະປີ (ແຕ່ຊ່ວງປີ 1982 ຫາ1989) ປະມານ 67.000 ເຮັກຕາ/ປີ (ໂຄງການຊີດາ ບາດກ້າວທີ່ 4 ກົມປ່າໄມ້).

ວຽກງານກະສິກຳ ແລະ ປ່າໄມ້ ພວກເຮົາສາມາດເວົ້າໄດ້ວ່າວຽກປູກຝັງນອກຈາກການຜະລິດເຂົ້າໃຫ້ເປັນສະບຽງແລ້ວ ກິດຈະການໄມ້ໃຫ້ໝາກ ກໍ່ເປັນວຽກງານໜຶ່ງທີ່ມີຄວາມສຳຄັນ ເຊິ່ງຈັດເຂົ້າເປັນວຽກງານຕົ້ນຕໍ ໃນວິທີການຫາລ້ຽງຊີບຂອງປະຊາຊົນບັນດາເຜົ່າ. ປະຈຸບັນ, ການປະກອບສ່ວນ ຂອງຂະແໜງປູກຝັງ ເຂົ້າໃນການຮັບປະກັນທາງດ້ານສະບຽງອາຫານ ແມ່ນຍັງບໍ່ທັນສາມາດເຮັດໄດ້ ຢ່າງເຕັມເມັດເຕັມໜ່ວຍ, ປະຊາຊົນບັນດາເຜົ່າໃນບາງທ້ອງຖິ່ນທີ່ຖືກໄພທຳມະຊາດຄຸກຄາມ ຍັງໄດ້ເອື່ອຍອີງໃສ່ທຳມະຊາດ ຫລາຍສົມຄວນ ເຊັ່ນ : ໃນການລ່າສັດ, ການເກັບໝາກໄມ້ ແລະ ຜັກຈາກປ່າ. ນອກນັ້ນ ໃນເຂດຫ່າງໄກສອກຫລີກ ແລະ ບ່ອນທີ່ມີເງື່ອນໄຂໃນ

ການຫາເອົາເຄື່ອງປ່າຂອງດົງມາແລກປ່ຽນເພື່ອດຳລົງຊີວິດຂອງເຂົາເຈົ້າ. ດັ່ງນັ້ນ, ການເຕີບໃຫຍ່ຂະຫຍາຍຕົວດ້ານການກະສິກຳຕໍ່ຫົວຄົນ ແມ່ນເປັນຂໍກຸນແຈສູ່ການຫລຸດຜ່ອນຄວາມກົດດັນຕໍ່ປ່າໄມ້ ໂດຍການສ່າວຖາງປ່າເພື່ອເຮັດໄຮ່.ອັດຕາການຂະຫຍາຍຕົວຂອງມູນຄ່າເພີ່ມຂຶ້ນໃນຂະແໜງກະສິກຳດ້ວຍການປູກເຂົ້າໄດ້ເພີ່ມຂຶ້ນ ປີລະ 9,2 ເປີເຊັນ ແລະ ພືດອື່ນໆໂດຍສະເລ່ຍ 10 ເປີເຊັນ ຕໍ່ປີ.

## 1.2 ຄວາມສຳຄັນຂອງໄມ້ໃຫ້ໝາກ

### 1.2.1 ຄວາມສຳຄັນຕໍ່ກັບທາງດ້ານສະບຽງອາຫານ

ປະຈຸບັນ ປະຊາຊົນລາວບັນດາເຜົ່າແມ່ນຍຶດຖືເອົາເຂົ້າເປັນອາຫານຫລັກໃນການດຳລົງຊີວິດ. ພະລັງງານ ທີ່ໄດ້ຈາກເຂົ້າໄດ້ກວມເອົາປະມານ 80 ເປີເຊັນ, ພະລັງງານນຳໃຊ້ ເຊິ່ງນອນ ຢູ່ໃນອັດຕາສະເລ່ຍ 300 ກິໂລກຼາມ/ ຄົນ/ປີ ຫລືໄດ້ຮາກເຂົ້າສານຕົວຈິງປະມານ 180 ກິໂລກຼາມ/ຄົນ/ປີ. ສະນັ້ນ, ການດຸ່ນດ່ຽງທາງດ້ານທາງດ້ານພະລັງງານແມ່ນຍັງຂາດຢູ່ຈຳນວນໜຶ່ງ. ດັ່ງນັ້ນ, ເພື່ອໃຫ້ຄາບເຂົ້າມີຄວາມອຸດົມສົມບູນຈະຕ້ອງໄດ້ເສີມຂະຫຍາຍທາງດ້ານວຽກງານການກະສິກຳ ໂດຍສະເພາະ ແມ່ນການຜະລິດເຂົ້າ, ໄມ້ໃຫ້ໝາກຫລາຍຊະນິດ ແມ່ນມີຄວາມສຳຄັນຕໍ່ທາງດ້ານເສດຖະກິດ.ໄມ້ໃຫ້ໝາກຊະນິດຕ່າງໆທີ່ປູກນັ້ນ ໄດ້ມີການຄັດພັນໃຫ້ເປັນໄມ້ໃຫ້ໝາກພັນດີ ເປັນທີ່ນິຍົມຂອງຕະຫລາດຈຶ່ງສາມາດຂາຍໄດ້ລາຄາດີທັງຕະຫລາດພາຍໃນ ແລະ ຕ່າງປະເທດ ເຊິ່ງເປັນການສ້າງລາຍຮັບແກ່ຊາວສວນໄດ້ເປັນຢ່າງດີ.

### 1.2.2 ຄວາມສຳຄັນຂອງໄມ້ໃຫ້ໝາກຕໍ່ສະພາບແວດລ້ອມ

ການປູກໄມ້ໃຫ້ໝາກ ເປັນການປູກປ່າຢ່າງໜຶ່ງ ທີ່ໄດ້ເຮັດໃຫ້ສະພາບແວດລ້ອມມີຄວາມຮົ່ມເຢັນອາກາດສົດໃສ ເພາະຕົ້ນໄມ້ໃຫ້ໝາກ ສ່ວນໃຫຍ່ເປັນໄມ້ຢືນຕົ້ນທີ່ມີສີຂຽວຕະຫລອດປີ ເປັນແຫລ່ງຜະລິດອົກຊີເຈນທີ່ສຳຄັນ. ນອກຈາກນີ້, ຍັງມີການປູກໄມ້ໃຫ້ໝາກ ເພື່ອເປັນການປະດັບອາຄານສະຖານທີ່ ໃຫ້ມີຄວາມສວຍງາມອີກດ້ວຍ.

### 1.2.3 ຄວາມສຳຄັນຂອງໄມ້ໃຫ້ໝາກຕໍ່ກັບທາງດ້ານໂພສະນາການ

ໝາກໄມ້ ເຖິງວ່າຈະບໍ່ເປັນອາຫານຫລັກ ແຕ່ກໍ່ເປັນອາຫານເສີມທີ່ດີມີຄຸນຄ່າທາງໂພສະນາການສູງ ມີວິຕາມິນຕ່າງໆ ຫາກໄດ້ຮັບປະທານໝາກໄມ້ວັນລະ 80-100 ກຼາມ ຈະເຮັດໃຫ້ມີສຸຂະພາບແຂງແຮງດີ. ໝາກໄມ້ແຕ່ລະຊະນິດມີປະລິມານຂອງວິຕາມິນໃນປະລິມານທີ່ແຕກຕ່າງກັນເຊັ່ນ :

- ວິຕາມິນເອ ມີຫລາຍໃນໝາກມ່ວງ 4.800 ມີລີກຼາມ /100 ກຼາມ
- ວິຕາມິນ ເອ ໃນໝາກຫຸ່ງ 2.000 ມີລີກຼາມ /100 ກຼາມ
- ວິຕາມິນບີ ມີຫລາຍໃນໝາກກ້ວຍ 50 ມີລີກຼາມ/100 ກຼາມ
- ວິຕາມິນ ບີ ໃນໝາກກ້ຽງ 120 ມີລີກຼາມ/100 ກຼາມ

- ວິຕາມິນ ຊີ ມີຫລາຍໃນໝາກສີດາ 70 ມີລີກຼາມ/100 ກຼາມ
- ວິຕາມິນ ຊີ ມີຫລາຍໃນໝາກນາວ 65 ມີລີກຼາມ/100 ກຼາມ
- ວິຕາມິນ ຊີມີຫລາຍໃນໝາກກ້ຽງ 70 ມີລີກຼາມ/100 ກຼາມ
- ທາດຊີ້ນ ມີຫລາຍໃນໝາກອາໂວກາໂດ ແລະ ທຸລຽນ
- ທາດເຫລັກມີຫລາຍໃນໝາກກ້ວຍ, ທຸລຽນ
- ທາດເຫລັກ, ຟອສຟໍຣັສ, ແຄລຊຽມ ມີຫລາຍໃນໝາກອິນທະພະລຳ
- ໝາກໄມ້ ທີ່ໃຫ້ພະລັງງານຫລາຍ ແມ່ນ : ທຸລຽນ, ກ້ວຍ ແລະ ໝາກຂຽບ.

# ບົດທີດສະດີທີ 2
# ການເລືອກເນື້ອທີ່ປູກໄມ້ໃຫ້ໝາກ

**ຈຸດປະສົງການສອນ**

1. ອະທິບາຍສະພາບດິນປູກທີ່ເໝາະສົມເພື່ອສ້າງສວນໄມ້ໃຫ້ໝາກ
2. ອະທິບາຍເຖິງສະພາບຟ້າອາກາດທີ່ເໝາະສົມຕໍ່ການປູກໄມ້ໃຫ້ໝາກ
3. ອະທິບາຍເຖິງຄວາມສຳຄັນຂອງການຄົມມະນາຄົມທີ່ມີຕໍ່ການປູກໄມ້ໃຫ້ໝາກ
4. ອະທິບາຍເຖິງແຮງງານທີ່ໃຊ້ໃນສວນປູກໄມ້ໃຫ້ໝາກ
5. ອະທິບາຍເຖິງສະພາບທາງສັງຄົມທີ່ມີຕໍ່ການປູກໄມ້ໃຫ້ໝາກ
6. ອະທິບາຍເຖິງການບົວລະບັດຮັກສາສວນປູກໄມ້ໃຫ້ໝາກ

## ເນື້ອໃນ

### 2.1 ການເລືອກເນື້ອທີ່ປູກໄມ້ໃຫ້ໝາກ

ການເລືອກເນື້ອທີ່ເພື່ອປູກໄມ້ໃຫ້ໝາກນັ້ນ ຈຳເປັນຕ້ອງໄດ້ຄຳນຶງເຖິງ ຫລາຍປັດໃຈປະກອບກັນເພື່ອໃຫ້ການປູກນັ້ນໄດ້ຮັບຜົນຕອບແທນຢ່າງເຕັມທີ່ຄຸ້ມຄ່າກັບການລົງທຶນ.ປັດໃຈຕ່າງໆ ທີ່ຈະກ່າວເຖິງຕໍ່ໄປນີ້ ຄວນໄດ້ນຳມາປະກອບການພິຈາລະນາປະກອບ ກ່ອນການຕັດສິນໃຈປູກໄມ້ໃຫ້ໝາກສະເໝີ ໄດ້ແກ່:

#### 2.1.1 ສະພາບດິນປູກທີ່ເໝາະສົມ

ການເລືອກບ່ອນສຳລັບປູກຕົ້ນໄມ້ໃຫ້ໝາກນັ້ນ ນັບວ່າເປັນປັດໃຈສຳຄັນ ແລະຈຳເປັນອັນດັບທຳອິດທີ່ຕ້ອງຄຳນຶງໃຫ້ຫລາຍ ຫາກເລືອກເນື້ອທີ່ໄດ້ເໝາະສົມຈະເປັນການປະຢັດຕົ້ນທຶນການຜະລິດໄດ້ເປັນຢ່າງດີ ແລະ ຍັງກ່ຽວຂ້ອງໄປເຖິງບັນຫາຕ່າງໆອີກ. ສຳລັບການເລືອກດິນເພື່ອປູກໄມ້ໃຫ້ໝາກນັ້ນຄວນພິຈາລະນາດັ່ງນີ້ :

1. **ເປັນດິນທີ່ມີຄວາມອຸດົມສົມບູນ** : ຄວນເປັນດິນທີ່ມີແຮ່ທາດອາຫານຕ່າງໆ ທີ່ຕົ້ນໄມ້ໃຫ້ໝາກຕ້ອງການຢ່າງຄົບຖ້ວນສົມບູນເປັນດິນທີ່ມີອິນຊີວັດຖຸຫລາຍໂດຍທຳມະຊາດເຊິ່ງຈະເປັນຕົວທີ່ເຮັດໃຫ້ດິນມີຄວາມຜຸພຸ່ຍ, ລະບາຍນ້ຳແລະຖ່າຍເທອາກາດໄດ້ດີເໝາະສົມແກ່ການຈະເລີນເຕີບໂຕຂອງ ຮາກ .

2. **ເປັນດິນທີ່ມີສະພາບຄວາມເປັນກົດ - ດ່າງ ທີ່ຢູ່ໃນລະດັບເປັນກາງ** : ຄືບໍ່ເປັນກົດຫລືດ່າງຫລາຍເກີນໄປຈະບໍ່ເໝາະຕໍ່ການຈະເລີນເຕີບໂຕຂອງຕົ້ນໄມ້ໃຫ້ໝາກ . ການປັບປຸງດິນ ທີ່ເປັນກົດ ຫລືດ່າງຫລາຍໆໃຫ້ມາຢູ່ໃນສະພາບທີ່ເປັນການນັ້ນ ຈະເຮັດໄດ້ຍາກ ແລະລົງ

ທຶນຫລາຍ ເຖິງຢ່າງໃດກໍ່ຕາມ ການປັງປຸງດິນທີ່ເປັນກົດ ຫລືດ່າງນີ້ ອາດກ່າວໄດ້ຄື : ການປັບປຸງດິນ ທີ່ເປັນກົດໃຫ້ກາຍເປັນກາງ ສາມາດເຮັດໄດ້ງ່າຍກ່ວາການແກ້ໄຂດິນທີ່ເປັນດ່າງໃຫ້ເປັນກາງ. ດັ່ງນັ້ນ, ຄວນຫລີກລ້ຽງ ບໍ່ເລືອກດິນທີ່ເປັນດ່າງຫລາຍ.ສຳລັບດິນອີກລັກສະນະໜຶ່ງບໍ່ເໝາະຕໍ່ການປູກໄມ້ໃຫ້ໝາກທົ່ວໆໄປກໍຄືດິນເຄັມໂດຍສະເພາະດິນທີ່ເຄັມໆ ມີເກືອຢູ່ໃນດິນຫລາຍ ເຊິ່ງດິນດັ່ງກ່າວຈະແກ້ໄຂຂ້ອນຂ້າງຍາກ ແລະ ຕ້ອງໃຊ້ທຶນສູງ.

3. **ເປັນດິນທີ່ມີຄວາມເລິກຂອງໜ້າດິນພຽງພໍຕໍ່ການຈະເລີນເຕີບໂຕຂອງໄມ້ໃຫ້ໝາກແຕ່ລະຊະນິດ** : ໜ້າດິນປູກທີ່ເລິກພຽງພໍ ຈະຊ່ວຍໃຫ້ຕົ້ນໄມ້ໝັ້ນຄົງ, ແຂງແຮງ, ບໍ່ໂຄ່ນລົ້ມງ່າຍ ແລະ ສາມາດຫາອາຫານມາລ້ຽງຕົ້ນໄດ້ເປັນຈຳນວນຫລວງຫລາຍ .

### 2.1.2 ແຫລ່ງນ້ຳ

ເນື້ອທີ່ໆ ຈະປູກໄມ້ໃຫ້ໝາກ ຄວນຢູ່ໃກ້ແຫລ່ງນ້ຳ ຫລືສາມາດຫານ້ຳໃຫ້ແກ່ຕົ້ນໄມ້ໄດ້ຢ່າງພຽງພໍ ໃນເວລາທີ່ຕ້ອງການໂດຍບໍ່ໄດ້ລົງທຶນບໍ່ຫລາຍ ການປູກໄມ້ໃຫ້ໝາກຈຶ່ງຈະໄດ້ຜົນຢ່າງເຕັມທີ່ໂດຍສະເພາະໃນຊ່ວງລະດູແລ້ງ ເຊິ່ງໄມ້ໃຫ້ໝາກສ່ວນໃຫຍ່ ຈະອອກດອກ ແລະ ຕິດໝາກໃນຊ່ວງລະດູແລ້ງ, ຖ້າຂາດນ້ຳໃນຊ່ວງນີ້ຈະເຮັດໃຫ້ດອກລົ່ນ, ໝາກທີ່ຕິດໃໝ່ໆ ຈະລົ່ນຫລາຍ ຫລືລົ່ນເກືອບໝົດຕົ້ນໄດ້, ໄມ້ໃຫ້ໝາກຈຶ່ງຕ້ອງການນ້ຳໃນຊ່ວງນີ້ຫລາຍ ນອກຈາກຊ່ວງນີ້ແລ້ວຊ່ວງທີ່ກຳລັງຈະເລີນເຕີບໂຕຂອງໄມ້ໃຫ້ໝາກກໍ່ຕ້ອງການນ້ຳຫລາຍເຊັ່ນກັນ.

### 2.1.3 ສະພາບຟ້າອາກາດ

ໝາຍເຖິງປະລິມານນ້ຳຝົນ, ການກະຈາຍຂອງນ້ຳຝົນ, ຄວາມຊຸ່ມສຳພັນ, ອຸນຫະພູມ ເຊິ່ງສະພາບຟ້າອາກາດນີ້ ຈະເປັນປັດໃຈໜຶ່ງທີ່ເປັນຕົວກຳນົດຊະນິດຂອງໄມ້ໃຫ້ໝາກທີ່ຈະນຳມາປູກໃນບ່ອນຕ່າງໆກ່າວຄື : ໄມ້ໃຫ້ໝາກທີ່ຈະປູກນັ້ນຕ້ອງເໝາະສົມກັບສະພາບຟ້າອາກາດແຕ່ລະທ້ອງຖິ່ນສະເໝີການປູກຈຶ່ງຈະໄດ້ຜົນຢ່າງເຕັມທີ່.

### 2.1.4 ການຄົມມະນາຄົມ

ສວນໄມ້ໃຫ້ໝາກຄວນໃຫ້ຢູ່ໃກ້ກັບຕະຫລາດຫລືແຫລ່ງຊຸມຊົນພໍສົມຄວນຈະສະດວກໃນການຕິດຕໍ່ວຽກງານຕ່າງໆ, ການຂົນສົ່ງຜົນຜະລິດ, ການເດີນທາງໄປດູແລກິດຈະການ. ການຄົມມະນາຄົມທີ່ສະດວກສະບາຍ ຍັງມີຜົນຕໍ່ຄຸນນະພາບຂອງຜົນຜະລິດອີກດ້ວຍ .

### 2.1.5 ແຮງງານ

ແຮງງານທີ່ໃຊ້ໃນສວນໄມ້ໃຫ້ໝາກກໍ່ເປັນເລື່ອງໜຶ່ງທີ່ສຳຄັນ ນອກຈາກຈະເສຍຄ່າແຮງງານແລ້ວຍັງຕ້ອງເປັນແຮງງານທີ່ມີຝີມືດີອີກດ້ວຍເພາະຕົ້ນໄມ້ໃຫ້ໝາກຕ້ອງການຄວາມພິຖີພິຖັນພໍສົມຄວນ ຖ້າຫາກປະຕິບັດບໍ່ຖືກຕ້ອງເໝາະສົມ ກໍ່ຈະເກີດຄວາມເສຍຫາຍແກ່ຕົ້ນໄມ້ໃຫ້ໝາກໄດ້ງ່າຍ.

**2.1.6 ສະພາບທາງສັງຄົມ**

ໝາຍເຖິງສະພາບການເປັນຢູ່ການປະກອບອາຊີບ ຕະຫລອດຮອດນິໄສຂອງປະຊາຊົນໃນບໍລິເວນນັ້ນ ເຊິ່ງຈະມີຜົນຕໍ່ການສ້າງສວນໄດ້ເຊັ່ນກັນ ເພາະມັກເກີດມີປະກົດການການແກ້ງທຳລາຍ ຫລືຂີ້ລັກຕ່າງໆ ເຊິ່ງຈະມີຜົນສະທ້ອນເຖິງການສ້າງສວນໄມ້ໃຫ້ໝາກໄດ້ .

**2.1.7 ການບົວລະບັດຮັກສາສວນ**

ການປູກໄມ້ໃຫ້ໝາກຜູ້ປູກຕ້ອງໄດ້ເອົາໃຈໃສ່ດູແລຕະຫຼອດປີເຊິ່ງມີບາງຊ່ວງບາງລະດູການກໍ່ຕ້ອງໄດ້ເອົາໃຈໃສ່ເປັນພິເສດຖ້າປ່ອຍປະລະເລີຍ ຈະເຮັດໃຫ້ຜົນຜະລິດບໍ່ໄດ້ຢ່າງເຕັມເມັດເຕັມໜ່ວຍ. ດັ່ງນັ້ນ, ຜູ້ປູກຄວນໄດ້ມີເວລາໃຫ້ກັບສວນໄມ້ໃຫ້ໝາກຢ່າງເຕັມທີ່.

# ບົດທົດສະດີທີ 3
# ການຈຳແນກໄມ້ໃຫ້ໝາກ

**ຈຸດປະສົງການສອນ**

1. ອະທິບາຍຄວາມຕ້ອງການອຸນຫະພູມຂອງໄມ້ໃຫ້ໝາກໃນເຂດຮ້ອນ
2. ອະທິບາຍເຖິງຄວາມຕ້ອງການອຸນຫະພູມຂອງໄມ້ໃຫ້ໝາກເຂດເຄິ່ງຮ້ອນ
3. ອະທິບາຍເຖິງຄວາມຕ້ອງການອຸນຫະພູມຂອງໄມ້ໃຫ້ໝາກເຂດໜາວໄດ້

## ເນື້ອໃນ

## 3.1 ການຈຳແນກໄມ້ໃຫ້ໝາກ

ການຈຳແນກໄມ້ໃຫ້ໝາກມີຫລາຍລະບົບດ້ວຍກັນເຊັ່ນ : ການແບ່ງໂດຍອາໄສຂະໜາດຂອງຊົງພຸ່ມ, ການແບ່ງໂດຍອາໄສອາຍຸການໃຫ້ໝາກເປັນຕົ້ນ. ສ່ວນການແບ່ງອີກລັກສະນະໜຶ່ງເຊິ່ງມີຄວາມສຳຄັນຕໍ່ຜູ້ປູກຫຼາຍທີ່ສຸດ ກໍ່ຄືການຈຳແນກໂດຍ ອາໄສຄວາມຕ້ອງການສະພາບດິນຟ້າອາກາດທີ່ເໝາະສົມຂອງໄມ້ໃຫ້ໝາກແຕ່ລະຊະນິດເປັນຫລັກ. ການຈຳແນກໃນລັກສະນະນີ້ສາມາດແບ່ງໄມ້ໃຫ້ໝາກເປັນ 3.ພວກໃຫຍ່ດັ່ງນີ້ :

### 3.1.1 ໄມ້ໃຫ້ໝາກເຂດຮ້ອນ

ຄືພວກໄມ້ໃຫ້ໝາກທີ່ຈະເລີນເຕີບໂຕໄດ້ດີໃນເຂດທີ່ມີອາກາດຮ້ອນ,ໄມ້ໃຫ້ໝາກພວກນີ້ ນອກຈາກຈະຕ້ອງການອຸນຫນະພູມສູງແລ້ວ ຍັງສາມາດແບ່ງອອກເປັນກຸ່ມຍ່ອຍໄດ້ ຄື :

1. ພວກໄມ້ໃຫໝາກທີ່ມັກອາກາດຮ້ອນ ແລະ ຊຸ່ມ ຄື : ອຸນຫະພູມອາກາດສູງ ແລະ ຄວາມຊຸ່ມສຳພັດອາກາດສູງດ້ວຍ ໄດ້ແກ່ : ຖົ່ວລຽນ, ລາງສາດ, ລອງກອງ ເປັນຕົ້ນ .

2. ພວກໄມ້ໃຫ້ໝາກທີ່ມັກ ອາກາດຮ້ອນ ແລະ ແຫ້ງແລ້ງ ຄື : ອຸນຫະພູມສູງ ແຕ່ຄວາມຊຸ່ມສຳພັດໃນອາກາດຕ່ຳ ໄດ້ແກ່ : ໝາກມ່ວງ, ໝາກຂາມ, ໝາກນັດ, ໝາກຊຽບ, ໝາກຕ້ອງ ເປັນຕົ້ນ .

ການເລືອກເນື້ອທີ່ເພື່ອປູກໄມ້ໃຫ້ໝາກຕ່າງ ໆ ຄວນພິຈາລະນາໃຫ້ຖີ່ຖ້ວນ ຈຶ່ງຈະໄດ້ຮັບໝາກຜົນຢ່າງເຕັມທີ່ ເຊັ່ນ : ຖ້າເອົາພວກໄມ້ໃຫ້ໝາກທີ່ມັກອາກາດຮ້ອນ ແລະ ຊຸ່ມໄປປູກໃນບໍລິເວນທີ່ມີອາກາດຮ້ອນແຫ້ງແລ້ງກໍ່ຈະສັງເກດໄດ້ແຕ່ເລີ່ມປູກ ເຊັ່ນ : ໃບຈະໄໝ້, ອາດໄໝ້ສະເພາະປາຍໃບ ຫລືໄໝ້ໝົດທັງໃບ, ຕົ້ນເຕີບໂຕຊ້າ ຈະແຕກໃບໃໝ່ ຫລືເຕີບໂຕດີໃນຊ່ວງທີ່ຝົນຕົກຫລາຍໆ ເທົ່ານັ້ນ ພໍເຂົ້າລະດູແລ້ງກໍ່ສະງັກການຈະເລີນເຕີບໂຕໄປເຫິງນານຫລາຍເດືອນ ຫລືຕາຍໄປເລີຍ.

### 3.1.2 ໄມ້ໃຫ້ໝາກເຂດເຄິ່ງຮ້ອນ

ລັກສະນະທົ່ວໄປຂອງໄມ້ໃຫ້ໝາກນີ້ ຄື ຕ້ອງການອຸນຫະພູມສູງ ໃນຊ່ວງການຈະເລີນເຕີບໂຕທາງໃບລຳຕົ້ນ ແລະ ຕ້ອງການອຸນຫະພູມຕ່ຳອີກຊ່ວງໜຶ່ງ ເພື່ອກໍ່ໃຫ້ເກີດການພັກຕົວຕຽມຕົວອອກດອກໂດຍອຸນຫະພູມນັ້ນຈະຕ້ອງບໍ່ຕ່ຳຫລາຍເກີນໄປ ຈິ່ງເກີດອັນຕະລາຍຕໍ່ໄມ້ໃຫ້ໝາກ, ໄມ້ໃຫ້ໝາກນີ້ຈະປູກກັນລະຫວ່າງເສັ້ນຂະໜານ ທີ່ 20 - 35 ອົງສາ ຂອງຊີກໂລກເໜືອ ແລະ ໃຕ້ , ໄມ້ໃຫ້ໝາກໃນບ້ານເຮົາທີ່ຈັດໃນກຸ່ມນີ້ ຄື : ພວກຕະກຸນສົ້ມ, ລິ້ນຈີ່, ລຳໄຍ, ອາໂວກາໂດ ເປັນຕົ້ນ .

### 3.1.3 ໄມ້ໃຫ້ໝາກເຂດໜາວ

ໄມ້ໃຫ້ໝາກພວກນີ້ ສ່ວນໃຫຍ່ຈະເປັນພວກໄມ້ໃບລົ່ນ ນອກຈາກຕ້ອງຜ່ານຊ່ວງມີອຸນຫະພູມຕ່ຳ ແລະ ອຸນຫະພູມຕ່ຳນີ້ ຈະເປັນຕົວທຳລາຍການພັກຕົວຂອງຕາດອກດ້ວຍ ເມື່ອຜ່ານຊ່ວງໜາວເຂົ້າສູ່ຊ່ວງທີ່ອຸນຫະພູມສູງຂື້ນ ດອກກໍ່ຈະເລີ່ມບານ, ປົ່ງໃບໃໝ່, ຕິດໝາກ ແລະໝາກຈະເລີນເຕີບໂຕໃນຊ່ວງອາກາດຮ້ອນ ສ່ວນໃຫຍ່ຈະປູກກັນຕັ້ງແຕ່ເສັ້ນຂະໜານທີ່ 35 ອົງສາເຊລຊຽດສ ຂຶ້ນໄປທັງເພື້ອງໂລກເໜືອ ແລະ ໃຕ້.ໄມ້ໃຫ້ໝາກພວກນີ້ ໄດ້ແກ່ : ແອບເປີ້ນ, ທໍ້ ( ພີຊ ), ສາລີ່, ພລຳ ແລະ ເຊີລີ ເປັນຕົ້ນ .

ດັ່ງນັ້ນ, ການປູກໄມ້ໃຫ້ໝາກແຕ່ລະຊະນິດ ຈຶ່ງຕ້ອງໃຫ້ຖືກຕ້ອງເໝາະສົມກັບສະພາບຟ້າອາກາດ ໄມ້ໃຫ້ໝາກຈຶ່ງຈະເລີນເຕີບໂຕເຕັມທີ່ ໃນທາງກົງກັນຂ້າມ ຖ້າຫາກສະພາບຟ້າອາກາດບໍ່ເໝາະສົມກັບຊະນິດຂອງໄມ້ໃຫ້ໝາກແລ້ວກໍ່ຈະພາໃຫ້ເກີດຜົນເສຍຕາມມາພາຍຫລັງ. ຄວາມເສຍຫາຍທີ່ເກີດຈາກສະພາບຟ້າອາກາດບໍ່ເໝາະສົມແລ້ວ ຍັງມີອີກຫລາຍປະການດ້ວຍກັນ ຄືນອກຈາກຈະເຮັດໃຫ້ຕົ້ນໄມ້ໃຫ້ໝາກນ້ອຍໆ ນັ້ນເສຍຫາຍ ຫລືຕາຍໄປແລ້ວ ໃນກໍລະນີທີ່ຕົ້ນໄມ້ໃຫ້ໝາກນັ້ນບໍ່ຕາຍ ແລະ ສາມາດຈະເລີນເຕີບໂຕຈົນເຖິງໄລຍະອອກດອກໃຫ້ໝາກໄດ້. ສະພາບຟ້າອາກາດ ຍັງມີຜົນຕໍ່ກັບການອອກດອກ, ການຕິດໝາກ ລວມທັງຄຸນນະພາບຂອງຜົນຜະລິດອີກດ້ວຍ ເຊັ່ນ : ໄມ້ໃຫ້ໝາກຫລາຍຊະນິດຕ້ອງການຊ່ວງອາກາດທີ່ແຫ້ງແລ້ງ ສະພາບດິນແຫ້ງໃນໄລຍະເວລາໃດໜຶ່ງ ເພື່ອຕຽມຕົວສະສົມອາຫານສຳລັບອອກດອກ ແຕ່ຖ້າໃນຊ່ວງເວລາດັ່ງກ່າວເກີດຝົນຕົກ ຫລືໄດ້ຮັບນ້ຳຫລາຍເກີນໄປດິນມີຄວາມຊຸ່ມຫລາຍຕົ້ນໄມ້ໃຫ້ໝາກນັ້ນຈະແຕກໃບອ່ອນ ແທນທີ່ຈະເກີດຕາດອກ. ສ່ວນໃນດ້ານຄຸນນະພາບຜົນຜະລິດກໍ່ເຊັ່ນດຽວກັນ ຖ້າສະພາບດິນຟ້າອາກາດບໍ່ເໝາະສົມ ຈະເຮັດໃຫ້ເກີດຜົນເສຍຫາຍແກ່ຄຸນນະພາບຂອງຜົນຜະລິດໄດ້ ເຊັ່ນ : ໄມ້ໃຫ້ໝາກຫລາຍໆຊະນິດ ຖ້າຝົນຕົກມາໃນຊ່ວງເວລາໝາກໃກ້ຈະແກ່ ຈະເຮັດໃຫ້ໝາກແຕກແລ້ວເໜົ່າເສຍຫາຍ ຫລືຄຸນນະພາບຂອງໝາກເສຍໄປ. ນອກນີ້ ສະພາບຟ້າອາກາດຍັງມີສ່ວນກ່ຽວຂ້ອງກັບການລະບາດທຳລາຍຂອງແມງໄມ້ສັດຕູຕ່າງໆ ຂອງໄມ້ໃຫ້ໝາກອີກດ້ວຍ.

# ບົດທົດສະດີທີ 4
# ການກຽມເນື້ອທີ່ເພື່ອປູກໄມ້ໃຫ້ໝາກ

**ຈຸດປະສົງການສອນ**

1. ອະທິບາຍເຖິງການກຽມເນື້ອທີ່ປູກໄມ້ໃຫ້ໝາກທີ່ເປັນບ່ອນຕໍ່າ
2. ອະທິບາຍເຖິງການກຽມເນື້ອທີ່ປູກໄມ້ໃຫ້ໝາກທີ່ເປັນບ່ອນສູງ
3. ບອກຄວາມສໍາຄັນຂອງການຈັດລະບົບການປູກໄມ້ໃຫ້ໝາກ
4. ບອກສູດການຄິດໄລ່ເພື່ອຊອກຫາຈໍານວນຕົ້ນຕໍ່ເນື້ອທີ່ປູກ
5. ອະທິບາຍຄວາມໝາຍ ແລະ ປະໂຫຍດຂອງໄມ້ທີ່ປູກໄວ້ເພື່ອກັນລົມ
6. ບອກຊະນິດຂອງຕົ້ນໄມ້ທີ່ນິຍົມປູກເພື່ອເປັນຕົ້ນໄມ້ກັນລົມ
7. ອະທິບາຍຂໍ້ດີ ຂອງການໃຊ້ວັດຖຸປົກຄຸມດິນ
8. ບອກວັດຖຸທີ່ນິຍົມໃຊ້ໃນການປົກຄຸມດິນ
9. ອະທິບາຍປະໂຫຍດຂອງພືດທີ່ປູກເພື່ອຄຸມດິນ

**ເນື້ອໃນ**

## 4.1 ສະພາບເນື້ອທີ່ປູກໄມ້ໃຫ້ໝາກ

ສະພາບເນື້ອທີ່ປູກໄມ້ໃຫ້ໝາກໂດຍທົ່ວໄປແລ້ວແບ່ງເປັນ 2 ລັກສະນະໃຫຍ່ ໆ ດັ່ງນີ້ :

### 4.1.1 ສະພາບເນື້ອທີ່ປູກເປັນບ່ອນທີ່ຕໍ່າ

ໄດ້ແກ່ທີ່ຮາບພຽງລຸ່ມແມ່ນໍ້າ, ບ່ອນທີ່ເຄີຍເປັນນາມາກ່ອນ ເຊິ່ງເປັນບ່ອນທີ່ບໍ່ເໝາະສົມຕໍ່ການປູກໄມ້ໃຫ້ໝາກໄດ້ໂດຍກົງ ຈໍາເປັນຕ້ອງໄດ້ຂຸດຍົກຮ່ອງປູກກ່ອນ ເພື່ອໃຫ້ພົ້ນຈາກນໍ້າຖ້ວມ ສໍາລັບເນື້ອທີ່ທີ່ຍັງບໍ່ທັນເຄີຍປູກມາກ່ອນ ຄວນເລີ່ມຕົ້ນກຽມເນື້ອທີ່ ດ້ວຍການວາງຜັງໃນແຜ່ນເຈ້ຍເສຍກ່ອນເພື່ອກໍານົດທຸກສິ່ງທຸກຢ່າງໃຫ້ແນ່ນອນເສຍກ່ອນ ໄດ້ແກ່ : ການວັດແທກຂະໜາດຂອງເນື້ອທີ່ທັງໝົດ ທີ່ມີຄວາມກ້ວາງ, ຄວາມຍາວ, ຮູບຮ່າງຂອງເນື້ອທີ່, ທິດທາງຂອງລົມ, ຮ່ອງສໍາລັບສົ່ງນໍ້າ, ທົນທາງ ແລ້ວກໍານົດຂະໜາດຂອງຄັນຄູ ເພື່ອປ້ອງກັນບໍ່ໃຫ້ນໍ້າຖ້ວມເນື້ອທີ່. ສໍາລັບພາຍໃນຄັນຄູທັງໝົດ ໃຫ້ແບ່ງອອກເປັນໜານປູກ ແລະ ຮ່ອງລະບາຍນໍ້າລະຫວ່າງໜານປູກຕາມຂະໜາດທີ່ໄດ້ກໍານົດໄວ້ ຫາກມີເນື້ອທີ່ເຫລືອກໍດັດແປງໃຊ້ເປັນປະໂຫຍດຢ່າງອື່ນ ເຊັ່ນ : ເຮັດເປັນຄອກສັດ, ເຮືອນກ້າເບ້ຍ, ໜອງ ຫລືບ່ອນສໍາລັບກັກຂັງນໍ້າເປັນຕົ້ນ.. ການກໍານົດທິດທາງຂອງໜານປູກ ຄວນໃຫ້ຮ່ອງປູກຢູ່ໃນລັກສະນະຂວາງຕາເວັນ ຄືໃຫ້ຫົວຮ່ອງ ແລະ ທ້າຍຮ່ອງຢູ່ໃນແນວທິດເໜືອຫາທິດໃຕ້ ເພື່ອເປັນການເຮັດໃຫ້ຕົ້ນໄມ້ໄດ້ຮັບແສງຢ່າງເຕັມ

ທີ່. ຂະໜາດຂອງຄັນຄູນ້ຳຮອບເນື້ອທີ່ເພື່ອປ້ອງກັນນ້ຳຖ້ວມນັ້ນ ໃຫ້ກຳນົດໂດຍອາໄສລະດັບສູງສຸດຂອງນ້ຳແຕ່ລະປີເປັນຫລັກ ເພື່ອໃຫ້ສູງພຽງພໍທີ່ຈະປ້ອງກັນນ້ຳຖ້ວມໄດ້. ຂະໜາດຂອງຄັນຄູອາດຈະແຕກຕ່າງກັນອອກໄປ ເຊັ່ນ : ກ້ວາງ 2 ແມັດ ສູງ 1 ແມັດ ຫລື ກ້ວາງ 3 - 4 ແມັດ ແລະສູງເຖິງ 2 ແມັດ ຫລືຫລາຍກ່ວານີ້ກໍ່ໄດ້. ສຳລັບຂະໜາດຂອງຮ່ອງປູກໂດຍທົ່ວໄປຈະມີຂະໜາດກ້ວາງ 4 - 6 ແມັດ ແລ້ວແຕ່ລະຊະນິດຂອງໄມ້ໃຫ້ໝາກ ແລະ ຈຳນວນແຖວທີ່ຕ້ອງການປູກ.ຮ່ອງນ້ຳ ລະຫວ່າງຮ່ອງປູກກ້ວາງປະມານ 1 - 1,5 ແມັດ ເລິກປະມານ 1- 1,5 ແມັດ , ເມື່ອກຳນົດຜັງສວນ ແລ້ວກໍ່ໃຫ້ລົງມືຂຸດໂດຍຮອບສວນກ່ອນຈະໃຊ້ແຮງງານຄົນ ຫລືລົດກໍ່ໄດ້ ຈາກນັ້ນກໍ່ຂຸດຮ່ອງປູກຕາມແຖວທີ່ໄດ້ກຳນົດໄວ້.

1. **ການປັບປຸງດິນກ່ອນປູກ** : ເນື່ອງຈາກດິນທີ່ຂຸດອອກມານັ້ນ ເປັນຊັ້ນດິນລຸ່ມ ຈຶ່ງບໍ່ເໝາະສົມທີ່ຈະປູກໄດ້ໂດຍກົງ ຄວນມີການປັບປຸງໃຫ້ມີສະພາບທີ່ເໝາະສົມຕໍ່ການຈະເລີນເຕີບໂຕຂອງພືດເສຍກ່ອນ ຄືປະດິນທີ່ຂຸດຂຶ້ນມານັ້ນ ຕາກແດດຈົນແຫ້ງ ໂຮຍດ້ວຍປູນຂາວ, ໃສ່ຝຸ່ນຄອກ ຝຸ່ນບົ່ມໃຫ້ຫລາຍ, ຫົດນ້ຳແລ້ວທັບດິນໃຫ້ເປັນກ້ອນນ້ອຍລົງ, ເວລາດຽວກັນນັ້ນ ກໍ່ປັບລະດັບດິນຫລັງຮ່ອງປູກໃຫ້ສະໝ່ຳສະເໝີທົ່ວໜານ. ການປັບປຸງດິນປູກນັ້ນ ຕ້ອງເຮັດຫລາຍໆເທື່ອຈົນກະທັ້ງດິນນັ້ນຢູ່ໃນສະພາບທີ່ເໝາະສົມທັງໜານ,ສະພາບຂອງດິນທີ່ເໝາະສົມຄືມີຄວາມຜຸພຸ່ຍ ບໍ່ຈັບຕົວກັນແໜ້ນ ສາມາດລະບາຍນ້ຳ ແລະ ຊຶມນ້ຳໄດ້ດີສີຂອງດິນສະໝ່ຳສະເໝີກັນທັງໜານ ແລະ ບໍ່ຢູ່ໃນສະພາບຄວາມເປັນດ່າງເກີນໄປ. ໃນຊ່ວງທຳການປັບປຸງດິນນີ້ ອາດຈະປູກພືດອາຍຸສັ້ນໄປກ່ອນກໍ່ໄດ້ເມື່ອເກັບກ່ຽວຜົນຜະລິດແລ້ວກໍ່ຂຸດ ແລະ ໃສ່ຝຸ່ນຊີວະພາບເພື່ອປັບປຸງດິນຈົນກະທັ້ງດິນມີຄວາມເໝາະສົມດີແລ້ວຈຶ່ງປູກໄມ້ໃໝາກໄດ້ຕໍ່ໄປ .

2. **ການຂຸດຂຸມປູກ** : ຄວນຂຸດຂະໜາດ ກ້ວາງ - ເລິກ ປະມານ 50 - 60 ຊັງຕີແມັດ ແລ້ວແຕ່ລະຊະນິດຂອງພືດ ແລະສະພາບຂອງດິນ. ດິນທີ່ຂຸດອອກຈາກຂຸມນັ້ນ ຄວນປະໄວ້ໃຫ້ແຫ້ງຈຶ່ງທັບໃຫ້ໝຸ່ນ ປະສົມດ້ວຍຝຸ່ນຊີວະພາບ (ຈະໃສ່ປູນຂາວອີກກໍ່ໄດ້), ຝຸ່ນຟອສເຟດຫລືກະດູກປົ່ນລວມທັງເສດໃບໄມ້ທີ່ເໜົ່າເປື່ອຍ ປະສົມໃຫ້ເຂົ້າກັນດີແລ້ວ ກໍເອົາລົງຂຸມປູກຄືເກົ່າໂດຍໃຫ້ສູງຈາກປາກຂຸມເລັກນອ້ຍ ຈົນວ່າດິນຍຸບຕົວດີເສຍກ່ອນຈຶ່ງລົງມືປູກ ຫລືອາດຈະຫົດນ້ຳຊ່ວຍເພື່ອໃຫ້ດິນຍຸບຕົວໄວຂຶ້ນ .

### 4.1.2 ສະພາບເນື້ອທີ່ປູກເປັນບ່ອນທີ່ສູງ

ເນື້ອທີ່ໆເປັນບ່ອນທີ່ບໍ່ມີບັນຫາເລື່ອງນ້ຳຖ້ວມຊຶ່ງອາດຈະເປັນບ່ອນທີ່ເຄີຍເປັນໄຮ່ເກົ່າ,ສວນເກົ່າຫລືເປັນບ່ອນໃໝ່ທີ່ບໍ່ເຄີຍປູກພືດມາກ່ອນກໍ່ຕາມ, ການກຽມການປູກໄມ້ໃຫ້ໝາກກໍຈະເລີ່ມວາງຜັງສວນເຊັ່ນກັນເພື່ອເຮັດໃຫ້ເໝາະສົມກັບສະພາບແວດລ້ອມທີ່ມີຢູ່. ຫລັງຈາກນັ້ນ, ຈຶ່ງລົງມືປັບເນື້ອທີ່ໂດຍການການຖາກຖາງພວກໄມ້ໃຫຍ່ຫລືນ້ອຍທີ່ບໍ່ຕ້ອງການອອກ ຫລືຖ້າບໍ່ກີດຂວາງໃນການປະຕິບັດວຽກງານກໍ່ຄວນຈົ່ງປະໄວ້ຈຳນວນໜຶ່ງຈະເປັນໄມ້ທີ່ມີຄ່າຫລືບໍ່ກໍ່ຕາມເພາະຈະໄດ້ເປັນບ່ອນໃຫ້ຮົ່ມເງົາແກ່ໄມໃຫ້ໃຫ້ໝາກທີ່ເຮົາປູກໃໝ່ໆ. ໃນກໍລະນີທີ່ເນື້ອທີ່ປູກສູງໆຕ່ຳໆບໍ່

ສະເໝີກັນນັ້ນ ຄວນແບ່ງເນື້ອທີ່ອອກເປັນສ່ວນໆຕາມສະພາບຂອງເນື້ອທີ່ເພື່ອສະດວກໃນການປັບ ແລະ ການບົວລະບັດຮັກສາສວນຕ່າງ ໆ ສ່ວນບ່ອນທີ່ມີຄວາມຊັນຫລາຍນັ້ນ ຄວນປັບລະດັບໃຫ້ເປັນລັກສະນະຄືຂັ້ນໄດ ເພື່ອປ້ອງກັນການກັດເຊາະໜ້າດິນ ແລະ ຊ່ວຍເກັບຊັບນ້ຳຝົນໄວ້ໄດ້ດ້ວຍ, ສ່ວນບ່ອນຕ່ຳ ກໍ່ຕ້ອງກຽມເຮັດບ່ອນລະບາຍນ້ຳອອກຈາກເນື້ອທີ່ດ້ວຍ .

1. **ການຂຸດຂຸມປູກໃນເນື້ອທີ່ດິນສູງ** : ເມື່ອກຽມດິນພານປູກແລ້ວໆໃຫ້ວາງແຖວສຳລັບປູກຕາມໄລຍະທີ່ໄດ້ກຳນົດໄວ້ໂດຍໃຊ້ໄມ້ຮວກປັກເຮັດເປັນເຄື່ອງໝາຍໄວ້ໃຫ້ສຳເລັດສັງເກດເບິ່ງແຖວທີ່ໄດ້ໝາຍແລ້ວນັ້ນຊື່ກັນຫລືບໍ່ ແລ້ວຈຶ່ງລົງມືຂຸດ, ສຳລັບຂຸມປູກນັ້ນ ຈະຂຸດໃຫ້ມີລັກສະນະກົມ ຫລືສີ່ລ່ຽມກໍ່ໄດ້ຂະໜາດຂອງຂຸມກ້ວາງ - ເລິກ - ຍາວ ປະມານ 50 - 100 ຊັງຕີແມັດ ແລ້ວແຕ່ຂະໜາດຂອງໄມ້ໃຫ້ໝາກ ແລະ ສະພາບເນື້ອທີ່ປູກ (ຖ້າດິນບໍ່ດີປານໃດຄວນຂຸດໃຫ້ກ້ວາງໃຫຍ່ ເພື່ອຈະໄດ້ປັບປຸງດິນໃນຂຸມໃຫ້ດີຂື້ນ )ການຂຸດຂຸມໃນສະພາບເນື້ອທີ່ດິນສູງນີ້ໃຫ້ຂຸດໂດຍແຍກດິນຊັ້ນເທິງໄວ້ກອງໜຶ່ງ ແລະ ດິນຊັ້ນລຸ່ມໄວ້ກອງໜຶ່ງບໍ່ໃຫ້ປົນກັນປະຕາກແດດໄວ້ຈົນດິນແຫ້ງ ແລ້ວປະສົມດ້ວຍຝຸ່ນຊີວະພາບເຊັ່ນ : ຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນໝັກຕ່າງ ໆ ຫລື ເສດໃບໄມ້ຜຸພັງ , ກະດູກປົ່ນ ເມື່ອປະສົມກັນໃຫ້ເຂົ້າດີແລ້ວໃຫ້ເອົາດິນຊັ້ນເທິງລົງກ່ອນສ່ວນກອງດິນຊັ້ນລຸ່ມເອົາລົງຕາມຫລັງ ເມື່ອສຳເລັດແລ້ວຈະສັງເກດເຫັນດິນໃນຂຸມປູກສູງກ່ວາບໍລິເວນຮອບໆຂຸມເລັກນ້ອຍແລະ ປ່ອຍຖິ້ມໄວ້ຈົນດິນຍຸບຕົວດີເສຍກ່ອນຈຶ່ງຄ່ອຍປູກໄດ້. .

2. **ການປູກໃນເນື້ອທີ່ສູງ** : ການປູກໃນເນື້ອທີ່ແບບນີ້ ອາດຈະປູກພືດຊະນິດອື່ນໄປກ່ອນແລ້ວຈຶ່ງປູກໄມ້ໃຫ້ໝາກຕາມຫລັງ, ນິຍົມປູກກ້ວຍເພື່ອໃຫ້ຕົ້ນກ້ວຍເປັນຮົ່ມໃຫ້ແກ່ຕົ້ນໄມ້ໃຫ້ໝາກ, ເມື່ອຕົ້ນໄມ້ໃຫ້ໝາກໃຫຍ່ແລ້ວກໍ່ເອົາກ້ວຍອອກ.

## 4.2 ລະບົບການປູກໄມ້ໃຫ້ໝາກ

### 4.2.1 ຄວາມສຳຄັນຂອງການຈັດລະບົບການປູກໄມ້ໃຫ້ໝາກ

ການຈັດລະບົບການປູກໄມ້ໃຫ້ໝາກ ມີຄວາມສຳຄັນ ດັ່ງນີ້ :

1. ສະດວກໃນການປະຕິບັດວຽກງານພາຍໃນສວນ ເຊັ່ນ : ການໄຖ, ການຄາດ, ການໃສ່ຝຸ່ນ, ການໃຫ້ນ້ຳ ຕະຫລອດຮອດການເກັບກ່ຽວຕ່າງ ໆ.
2. ຕົ້ນໄມ້ໃຫ້ໝາກ ສາມາດຈະເລີນເຕີບໂຕໄດ້ດີ ເພາະວ່າບໍ່ມີການຍາດແຍ່ງນ້ຳ, ທາດອາຫານ ອາກາດ ແລະ ແສງແດດ .
3. ມີຄວາມເປັນລະບຽບຮຽບຮ້ອຍ ແລະ ສວຍງາມດີ
4. ຕົ້ນໄມ້ໃຫ້ຜົນຜະລິດສະໝ່ຳສະເໝີ
5. ປະຢັດເວລາ, ແຮງງານ ແລະ ອຸປະກອນ ໃນການປະຕິບັດງານ.

### 4.2.2 ການວາງລະບົບການປູກໄມ້ໃຫ້ໝາກ

ລະບົບການປູກໄມ້ໃຫ້ໝາກ ມີຢູ່ດ້ວຍກັນ 5 ແບບດ້ວຍກັນ ເຊັ່ນ:

1. ແບບສີ່ຫລ່ຽມຈະຕຸລັດແບບນີ້ມີໄລຍະປູກທີ່ເທົ່າກັນທຸກດ້ານເຊັ່ນ : 4 x 4 ແມັດ, 6 x 6 ແມັດ ແລະ 8 x 8 ແມັດ ເປັນຕົ້ນ .

2. ແບບສີ່ຫລ່ຽມຍາວ : ແບບນີ້ມີໄລຍະປູກບໍ່ເທົ່າກັນ, ໄລຍະຫ່າງລະຫວ່າງຕົ້ນ ຈະໜ້ອຍກ່ວາໄລຍະຫ່າງລະຫວ່າງແຖວ ເຊັ່ນ : 4 x 6 ແມັດ , 6 x 8 ແມັດ, 8 x 10 ແມັດ ເປັນຕົ້ນ.

3. ແບບສີ່ຫລ່ຽມຊ້ອນ : ເປັນການປູກແບບ ສີ່ຫລ່ຽມຈະຕຸລັດ ແຕ່ເພີ່ມຈຳນວນຕົ້ນຂຶ້ນອີກທີ່ຈຸດຕັດກັນ, ສາມາດປູກໄມ້ອື່ນແຊມໄດ້ອີກ, ມີຈຳນວນຕົ້ນເພີ່ມຂຶ້ນ ແຕ່ການປະຕິບັດວຽກງານບໍ່ສະດວກ .

4. ແບບສາມຫລ່ຽມ ຫລືຫົກຫລ່ຽມດ້ານເທົ່າ : ຄືຈະປະກອບເປັນ 3 ຫລ່ຽມດ້ານເທົ່າ 6 ຮູບໃນ 6 ຫລ່ຽມ ມີໄລຍະຫ່າງລະຫວ່າງຕົ້ນ ເທົ່າກັນທຸກຕົ້ນ, ບໍ່ສະດວກໃນການປະຕິບັດງານ .

5. ແບບຕາມແນວລະດັບ:ເປັນການປູກໃນເນື້ອທີ່ໆ ມີຄວາມສູງຊັນ, ມີການປັບລະດັບຂອງເນື້ອທີ່ໃຫ້ເປັນຂັ້ນໄດ ເພື່ອເປັນການປ້ອງກັນການພັງທະລາຍຂອງດິນ.

## 4.3 ການຄິດໄລ່ຈຳນວນຕົ້ນຕໍ່ເນື້ອທີ່

### 4.3.1 ສູດການຄິດໄລ່ເພື່ອຫາຈຳນວນຕົ້ນຕໍ່ເນື້ອທີ່

$$\textbf{ຈຳນວນຕົ້ນທີ່ຈະປູກ} = \frac{\textbf{ເນື້ອທີ່ປູກ}}{\textbf{ໄລຍະປູກ}}$$

ເຊັ່ນໃນເນື້ອທີ່ 1 ໄລ່ ( 1.600 ຕາແມັດ ) ຕ້ອງການປູກໄມ້ໃຫ້ໝາກ ໄລຍະຫ່າງລະຫວ່າງຕົ້ນ 6 ແມັດ ແລະ ໄລຍະຫ່າງລະຫວ່າງແຖວ 6 ແມັດ ຈະຕ້ອງໃຊ້ຕົ້ນໄມ້ໃຫ້ໝາກມາປູກເທົ່າໃດ ?

$$\text{ອີງຕາມສູດ : ຈຳນວນຕົ້ນທີ່ຈະປູກ} = \frac{\text{1 ໄລ່ x 1.600 ຕາແມັດ}}{\text{6 (ໄລຍະຕົ້ນ x 6 ( ໄລຍະແຖວ)}} = \text{44 ຕົ້ນ}$$

ຈາກຕົວຢ່າງ ເປັນເນື້ອທີ່ ໆ ປູກຕົວຈິງ ໂດຍບໍ່ລວມທັງເນື້ອທີ່ໆ ຕ້ອງເວັ້ນຮອບໜານປູກ ແລະ ອື່ນໆອີກດ້ວຍ .

**ຕາຕະລາງທີ 1. ໄລຍະປູກທີ່ເໝາະສົມສຳລັບໄມ້ໃຫ້ໝາກທົ່ວໄປ**

| ລ/ດ | ຊື່ໄມ້ໃຫ້ໝາກ | ໄລຍະຫ່າງ ( ແມັດ ) | ລ/ດ | ຊື່ໄມ້ໃຫ້ໝາກ | ໄລຍະຫ່າງ ( ແມັດ ) |
|---|---|---|---|---|---|
| 1. | ກ້ວຍ : | | 11. | ໝາກມ່ວງ: | |
| | - ປູກຕົ້ນດ່ຽວ | 2-3 | | - ໄລຍະທົ່ວໄປ | 10-12 |
| | - ປູກເປັນສຸມ | 4-6 | | - ໄລຍະໃກ້ | 2,5-4 |
| 2. | ໝາກມີ້ | 8-10 | 12. | ໝາກຫຸ່ງ | 2-3 |
| 3. | ພິລາ | 3 | 13. | ມັງຄຸດ | 10 |
| 4. | ໝາກຂຽບ : | | 14. | ລຳໄຍ | 10-12 |
| | - ຂຽບຝ້າຍ | 3 | 15. | ລິ້ນຈີ່ | 8-12 |
| | - ຂຽບພັນ | 5-6 | 16 | ສົ້ມຂຽວຫວານ | 4-6 |
| 5. | ສີດາ | 4-6 | 17. | ໝາກຕ້ອງ | 10-12 |
| 6. | ໝາກທັນ | 6 | 18. | ໝາກນັດ | 0,75 |
| 7. | ໝາກຂາມ | 10-14 | 19. | ອະງຸ່ນ | 2-3 |
| 8. | ໝາກນາວ | 4-6 | 20. | ສົ້ມໂອ ( ໝາກພຸກ ) | 8 |
| 9. | ໝາກພ້າວ : | | 21. | ອາໂວກາໂດ | 10-12 |
| | - ຊະນິດເຕ້ຍ | 5 | 22. | ທຸລຽນ | 6-8 |
| | - ຊະນິດກາງ | 6 | 23. | ເງາະ | 10-14 |
| | - ຊະນິດໃຫຍ່ | 8 | | | |
| 10. | ສະຕໍເບີຣີ | 0,3 - 0,5 | | | |

ໄລຍະປູກໄມ້ໃຫ້ໝາກດັ່ງກ່າວເປັນໄລຍະປູກທົ່ວໆໄປສາມາດດັດແປງໄປຈາກນີ້ໄດ້ ແລ້ວແຕ່ສະພາບຂອງດິນປູກ.

## 4.4 ການປູກຕົ້ນໄມ້ເພື່ອກັນລົມ

### 4.4.1 ຄວາມສຳຄັນຂອງການປູກຕົ້ນໄມ້ເພື່ອກັນລົມ

ໄມ້ກັນລົມເປັນສິ່ງທີ່ຈຳເປັນອີກຢ່າງໜຶ່ງໃນການປູກໄມ້ໃຫ້ໝາກໂດຍສະເພາະໃນເຂດທີ່ໂລ່ງແລະມີລົມພັດຜ່ານເປັນປະຈຳ ເນື່ອງຈາກລົມມີຜົນເສຍຫລາຍປະການ ເຊັ່ນ :

1. ເຮັດໃຫ້ຕົ້ນໄມ້ໂຄ່ນ ຫລືຫັກຈີກຂາດ, ໃບລົ່ນ, ຕົ້ນ ແລະ ຮາກຄອນມີຜົນກະທົບກະເທືອນຕໍ່ການຈະເລີນເຕີບໂຕຂອງຕົ້ນ .

2. ເຮັດໃຫ້ການປະສົມເກສອນຂອງຕົ້ນໄມ້ ບໍ່ດີເທົ່າທີ່ຄວນ ເຊັ່ນ : ເຮັດໃຫ້ເກສອນປິວໄປຕາມລົມໝົດ ຫລືເຮັດໃຫ້ພວກແມງໄມ້ທີ່ຊ່ວຍປະສົມເກສອນ ປະຕິບັດວຽກງານບໍ່ໄດ້ດີ ເຮັດໃຫ້ການຕິດໝາກບໍ່ດີ.

3. ເຮັດໃຫ້ດອກ ແລະ ໝາກລົ່ນຫລາຍພົນຜະລິດຫລຸດລົງ

4. ເຮັດໃຫ້ນ້ຳລະເຫີຍໄປຈາກດິນຢ່າງໄວມີຜົນເຮັດໃຫ້ພືດຂາດນ້ຳ ຫລືຕ້ອງໄດ້ທົດນ້ຳຫລາຍກ່ວາປົກກະຕິ ແລະ ລົມທີ່ພັດຜ່ານຍັງເຮັດໃຫ້ຄວາມຊຸ່ມຂອງອາກາດລຸດລົງອີກດ້ວຍ .

### 4.4.2 ຕົ້ນໄມ້ທີ່ນິຍົມປູກເພື່ອກັນລົມ

ຕົ້ນໄມ້ ທີໃຊ້ເພື່ອເປັນຕົ້ນໄມ້ກັນລົມ ຄວນມີລັກສະນະ ຄື :

1. ເປັນຕົ້ນທີ່ບໍ່ແມ່ນພວກໄມ້ໃບລົ່ນ ຄືມີສີຂຽວຕະຫລອດປີເພື່ອໃຫ້ສາມາດປ້ອງກັນລົມໄດ້ທຸກລະດູການ.

2. ເປັນຕົ້ນທີ່ມີລະບົບຮາກ ຫລືມີລະບົບຮາກທີ່ແຂງແຮງ, ສ່ວນກິ່ງ ແລະ ລຳຕົ້ນມີລັກສະນະໜຽວ ແລະ ບໍ່ຈີກຫັກງ່າຍ .

3. ມີຄວາມສູງພຽງພໍທີ່ຈະປ້ອງກັນລົມໄດ້ເປັນຢ່າງດີ ຄື ມີຄວາມສູງກ່ວາຕົ້ນໄມ້ທີ່ປູກໄວ້ .

4. ເປັນຕົ້ນໄມ້ທີ່ປູກງ່າຍ ,ໃຫຍ່ໄວ, ທົນທານຕໍ່ສະພາບແວດລ້ອມໄດ້ດີ .

5. ສາມາດໃຫ້ປະໂຫຍດດ້ານອື່ນໆໄດ້ດີພໍສົມຄວນ ເຊັ່ນ:ໃຫ້ກິ່ງ,ລຳຕົ້ນ, ໜໍ່ຫລືສ່ວນຕ່າງໆ ເປັນອາຫານແລະ ອື່ນໆໄດ້ດ້ວຍ .

ພວກໄມ້ທີ່ນິຍົມປູກ ເປັນໄມ້ກັນລົມ ໄດ້ແກ່ :ສົນ, ກັນຖິນຍັກ, ຢູຄາລິບຕັດ, ໄຜ່ຊະນິດຕ່າງ ໆ ເປັນຕົ້ນ . ການປູກໄມ້ກັນລົມ ສາມາດເຮັດໄດ້ຫລາຍລັກສະນະ ເຊັ່ນ : ຖ້າເນື້ອທີ່ບໍ່ກ້ວາງຂວາງ ອາດຈະປູກອ້ອມຮອບເນື້ອທີ່, ສ່ວນເນື້ອທີ່ກ້ວາງ ຄວນປູກເປັນແຖວຫ່າງກັນພໍສົມຄວນຕາມຄວາມເໝາະສົມ ແຕ່ຂໍ້ສຳຄັນ ຄື :ແຖວຂອງພວກໄມ້ກັນລົມ ຄວນຂວາງທິດທາງຂອງລົມຢູ່ສະເໝີ .

## 4.5 ການໃຊ້ວັດຖຸຄຸມດິນ

### 4.5.1 ຂໍ້ດີຂອງການໃຊ້ວັດຖຸຄຸມດິນ

ການໃຊ້ວັດຖຸຄຸມດິນໃນໜານປູກໄມ້ໃຫ້ໝາກມີຂໍ້ດີຫລາຍປະການຄື :

1. ສາມາດຮັກສາຄວາມຊຸ່ມຂອງດິນ, ປ້ອງກັນການລະເຫີຍນ້ຳຈາກດິນຊ່ວຍປ້ອງກັນການເກີດຂອງຫຍ້າໄດ້ເປັນຢ່າງດີຖ້າຄຸມໜາພຽງພໍ.

2. ວັດຖຸທີ່ໃຊ້ຄຸມດິນນັ້ນ ເມື່ອລະລາຍຕົວກໍ່ກາຍເປັນຝຸ່ນອິນຊີໃຫ້ແກ່ດິນປູກ ເຮັດໃຫ້ດິນປູກມີ ຄວາມພຸຜຸ່ຍ ສາມາດດູດນ້ຳໄວ້ໄດ້ ແລະ ຍັງເພີ່ມທາດອາຫານໃຫ້ແກ່ດິນອີກດ້ວຍ .

### 4.5.2 ວັດຖຸທີ່ໃຊ້ຄຸມດິນ

ວັດຖຸທີ່ນິຍົມໃຊ້ໃນການຄຸມດິນ ມີຄື:ແກບ, ເຟືອງ, ຫຍ້າແຫ້ງ,ໃບໄມ້ລົ່ນ, ຕົ້ນສາລີ ແລະ ອື່ນ ໆທີ່ຫາງ່າຍໃນທ້ອງຖິ່ນ.

## 4.6. ການປຸກພືດຄຸມດິນ

### 4.6.1 ປະໂຫຍດຂອງພືດຄຸມດິນ

ການປູກພືດຄຸມດິນໃນໜານປູກໄມ້ໃຫ້ໝາກມີປະໂຫຍດຫລາຍປະການຄື :

1. ພືດຄຸມດິນສາມາດຊ່ວຍເພີ່ມອິນຊີວັດຖຸ ແລະ ທາດອາຫານແກ່ດິນປູກ ໂດຍພືດຄຸມດິນນັ້ນຈະໃຊ້ພວກພືດຕະກຸນຖົ່ວເປັນຫລັກ.
2. ຊ່ວຍປ້ອງກັນການຊະລ້າງໜ້າດິນ
3. ຊ່ວຍປ້ອງກັນວັດຊະພືດ.

ເຖິງຢ່າງໃດກໍ່ຕາມການປູກພືດຄຸມດິນກໍ່ສ້າງບັນຫາແກ່ຕົ້ນໄມ້ໃຫ້ໝາກເຊັ່ນກັນໃນເວລາປະຕິບັດວຽກງານໃນສວນເນື່ອງຈາກຄວາມຣົກເຮື້ອລຸງລັງຂອງພືດທີ່ປູກເປັນພືດຄຸມດິນ. ພືດຄຸມດິນທີ່ນິຍົມປູກ ຄວນເປັນພວກພືດຕະກຸນຖົ່ວທີ່ເຕີບໂຕໄວແຜ່ຄຸມເນື້ອທີ່ໄດ້ຢ່າງວ່ອງໄວ, ປູກງ່າຍ ບໍ່ຕ້ອງດູແລຮັກສາຍາກ ເຊັ່ນ :ຖົ່ວລາຍເປັນຕົ້ນ ຈະປູກພຽງຊະນິດດຽວ ຫລືຫລາຍຊະນິດກໍ່ໄດ້.

# ບົດທົດສະດີທີ 5
# ການຂະຫຍາຍພັນໄມ້ໃຫ້ໝາກ

**ຈຸດປະສົງການສອນ**

1. ອະທິບາຍວິທີການຄັດເລືອກຕົ້ນພັນເພື່ອນຳແກ່ນມາກ້າ
2. ອະທິບາຍວິທີການເລືອກໝາກທີ່ເໝາະສົມສຳລັບນຳມາກ້າ
3. ອະທິບາຍວິທີການເລືອກແກ່ນທີ່ດີເພື່ອນຳມາກ້າ
4. ອະທິບາຍວິທີການກ້າແກ່ນໄດ້ຖືກຕ້ອງ
5. ບອກຫລັກ ແລະ ວິທີການໂທມກິ່ງ
6. ອະທິບາຍຂັ້ນຕອນການຕິດຕາ
7. ອະທິບາຍຂັ້ນຕອນຂອງການທາບກິ່ງ

## ເນື້ອໃນ

### 5.1 ການຂະຫຍາຍພັນດ້ວຍແກ່ນ

ການຂະຫຍາຍພັນດ້ວຍການນຳແກ່ນມາກ້ານັ້ນ ຈະປະຕິບັດຢູ່ 2 ກໍລະນີດ້ວຍກັນຄື :

1. ການກ້າແກ່ນເພື່ອໃຊ້ເປັນຕົ້ນຕໍໃນການຂະຫຍາຍພັນແບບອື່ນໆ ເຊັ່ນ : ໃຊ້ໃນການຕິດຕາ, ການທາບກິ່ງ . . .ເຊິ່ງເປັນວິທີທີ່ນິຍົມກັນຫລາຍ ໃນການຂະຫຍາຍພັນໄມ້ໃຫ້ໝາກທົ່ວໆໄປ ເພາະວ່າມີຂໍ້ດີຫລາຍປະການ ເຊັ່ນ : ເຮັດໄດ້ງ່າຍ, ສະດວກ ຕົ້ນໃໝ່ທີ່ໄດ້ຈະໃຫ້ໝາກໄວ ຖືກຕ້ອງຕາມພັນເດີມເປັນຕົ້ນ.

2. ການກ້າແກ່ນເພື່ອນຳໄປປູກໂດຍກົງ ແຕ່ໄມ້ໃຫ້ໝາກຫລາຍຊະນິດບໍ່ນິຍົມຂະຫຍາຍພັນດ້ວຍວິທີນີ້ ເນື່ອງຈາກມີຂໍ້ເສຍຫລາຍປະການ ແລະບໍ່ເໝາະສົມ ແຕ່ກໍ່ຍັງມີໄມ້ໃຫ້ໝາກອີກຫລາຍຊະນິດກໍ່ຍັງໃຊ້ວິທີການນີ້ຢູ່ເນື່ອງຈາກວິທີອື່ນຍັງບໍ່ເໝາະສົມ ຫລືຕ້ອງລົງທຶນສູງເກີນໄປ .

#### 5.1.1 ການຄັດເລືອກຕົ້ນພັນເພື່ອນຳເມັດມາກ້າ

1. ເລືອກຕົ້ນທີ່ເຄີຍໃຫ້ໝາກມາແລ້ວແລະໃຫ້ໝາກດົກສະໝ່ຳສະເໝີ, ໝາກມີຄຸນນະພາບເປັນທີ່ຕ້ອງການຂອງຕະຫລາດ,ຄວນເປັນຕົ້ນທີ່ກຳລັງຈະເລີນເຕີບໂຕ, ສົມບູນແຂງແຮງ, ບໍ່ມີພະຍາດແມງໄມ້ລົບກວນ.

2. ພວກໄມ້ໃຫ້ໝາກທີ່ຈະນຳແກ່ນໄປປູກໂດຍກົງ ແລະ ເປັນພວກທີ່ປະສົມເກສອນຂ້າມຕົ້ນ ຂ້າມດອກ ຕ້ອງລະມັດລະວັງໃນເລື່ອງການປະສົມເກສອນດ້ວຍ ເພາະຈະເຮັດ

ໃຫ້ຕົ້ນທີ່ໄດ້ນັ້ນກາຍພັນໄດ້ ເຊິ່ງຕົ້ນທີ່ກາຍພັນໄປນັ້ນອາດມີລັກສະນະດີກ່ວາຕົ້ນພັນເດີມ ຫລືມີລັກສະນະທີ່ບໍ່ດີກ່ວາຕົ້ນແມ່ກໍ່ໄດ້ .

**5.1.2 ການເລືອກໝາກທີ່ຈະນຳໄປກ້າ**

ເມື່ອເລືອກຕົ້ນໄດ້ຕາມຕ້ອງການແລ້ວໃຫ້ເລືອກລັກສະນະຂອງໝາກກ່ອນນຳໄປກ້າດັ່ງນີ້ :

1. ເລືອກສະເພາະໝາກທີ່ສົມບູນ, ຮູບຊົງໝາກສວຍງາມ ຖືກຕ້ອງຕາມພັນ, ໝາກມີຂະໜາດປານກາງຄືບໍ່ໃຫຍ່ ຫລື ນ້ອຍເກີນໄປ .

2. ເປັນໝາກທີ່ແກ່ດີ ຫລືສຸກຄາຕົ້ນ, ຖ້າໝາກບໍ່ແກ່ດີ ຈະກ້າບໍ່ອອກ ຫລືຖ້າອອກ ກໍ່ຈະໄດ້ຕົ້ນທີ່ບໍ່ຄ່ອຍສົມບູນແຂງແຮງດີ .

3. ເປັນໝາກທີ່ບໍ່ມີແມງໄມ້ລົບກວນໂດຍສະເພາະແມງໄມ້ທີ່ເຈາະເຂົ້າໄປໃນໝາກໃນເມັດ .

**5.1.3 ການເລືອກແກ່ນທີ່ຈະນຳໄປກ້າ**

ເມື່ອເລືອກໝາກໄດ້ຕາມຄວາມຕ້ອງການແລ້ວ ກໍ່ມີການຄັດເລືອກເລືອກແກ່ນອີກເທື່ອໜຶ່ງເພື່ອໃຫ້ໄດ້ແກ່ນທີ່ດີໄປກ້າ ແກ່ນທີ່ດີຄວນມີລັກສະນະ ຄື :

1. ມີຄວາມສົມບູນ ເນື້ອເມັດບໍ່ເປັນແປ້ວ ບໍ່ລີບ, ຫລືເປັນຮູບຊົງທີ່ຜິດປົກກະຕິ, ເປັນແກ່ນທີ່ບໍ່ແຕກຫັກ .

2. ເປັນແກ່ນທີ່ປາສະຈາກພະຍາດ ແລະ ແມງໄມ້ລົບກວນ ເຊັ່ນ : ບໍ່ມີຮ່ອງຮອຍກັດ ແທັນຂອງແກ່ນ ສ່ວນພະຍາດທີ່ຕິດມາກັບເມັດນັ້ນບາງຄັ້ງຈະສັງເກດເຫັນຍາກ ຫາກບໍ່ແນ່ໃຈຄວນກຳຈັດພະຍາດໂດຍການແຊ່ແກ່ນໃນນ້ຳຢາຂ້າເຊື້ອພະຍາດເສຍກ່ອນຈຶ່ງນຳໄປກ້າ.

**5.1.4 ການກ້າແກ່ນ**

ເມື່ອຄັດເລືອກແກ່ນໄດ້ແລ້ວ ກ່ອນກ້າແກ່ນຄວນປະຕິບັດດັ່ງນີ້ :

1. ທຳຄວາມສະອາດແກ່ນ ໂດຍການລ້າງເອົາເນື້ອ ຫລືເມືອກທີ່ຕິດມາກັບແກ່ນອອກໃຫ້ໝົດ .

2. ພວກແກ່ນທີ່ມີເປືອກແຂງ ແລະ ໜາຈົນນ້ຳ ແລະ ອາກາດເຂົ້າໄປໃນເມັດໄດ້ຍາກ ເຮັດໃຫ້ແຕກງອກຊ້າ ຄວນຊ່ວຍໃຫ້ເມັດແຕກງອກໄດ້ໄວຂຶ້ນໂດຍການປະຕິບັດບາງຢ່າງແກ່ແກ່ນ ຄື : ແກ່ນໝາກມ່ວງໃຫ້ຕັດປາຍເມັດ ຫລືແກະເອົາເປືອກຫຸ້ມແກ່ນອອກໝົດ, ແກ່ນໝາກຫັນຄວນທຸບໃຫ້ເປືອກແຕກເສຍກ່ອນ, ສ່ວນໝາກພ້າວຄວນປາດເປືອກດ້ານຂົ້ວນອອກ ດັ່ງນີ້ເປັນຕົ້ນ .

3. ການເກັບຮັກສາແກ່ນໄມ້ໃຫ້ໝາກສ່ວນໃຫຍ່ເມື່ອທຳຄວາມສະອາດແກ່ນແລ້ວຄວນນຳໄປກ້າໃຫ້ໄວທີ່ສຸດເນື່ອງຈາກແກ່ນທີ່ມີອາຍຸສັ້ນບໍ່ສາມາດເກັບໄວ້ດົນໄດ້ຖ້າປະໄວ້

ດິນກໍ່ຈະແຕກງອກເປັນຈຳນວນໜ້ອຍ ຫລືບໍ່ແຕກງອກເລີຍຫລືບາງຄັ້ງຖ້າແຕກງອກ ແຕ່ກໍ່ບໍ່ຄ່ອຍແຂງແຮງ .

**ຕາຕະລາງ 2. ສະແດງຄວາມເໝາະສົມໃນການເກັບເມັດ ແລະ ເວລາໃນການງອກຂອງເມັດ**

| ຊະນິດໄມ້ໃຫ້ໝາກ | ບໍ່ຄວນເກັບໄວ້ເກີນ ( ມື້ ) | ເມັດແຕກງອກຫລັງກ້າ ( ມື້ ) |
|---|---|---|
| ໝາກມີ້ | 3 | 10 - 15 |
| ທຸລຽນ | 5 | 20 |
| ໝາກຜາງ, ລາງສາດ | 7 | 10 - 15 |
| ມັງຄຸດ | 3 | 30 |
| ລຳໄຍ, ລີ້ນຈີ່ | 1 - 2 | 15 |
| ເງາະ | 5 | 15 |
| ໝາກກຽງ | 5 | 20 |
| ໝາກໄມ້ຕະກຸນສົ້ມຕ່າງ ໆ | 30 | 10 - 20 |
| ໝາກຂຽບ | 2 - 3 ເດືອນ | 15 - 20 |
| ໝາກມ່ວງ ( ບໍ່ແກະເປືອກຫຸ້ມ ) | 7 | 20 |
| ໝາກມ່ວງ ( ແກະເປືອກອອກ ) | 1 - 2 | 10 |
| ໝາກຫຸ່ງ ( ເມັດສົດ ) | 1 - 3 | 10 |
| ໝາກຫຸ່ງ ( ເມັດແຫ້ງ ) | 2 - 3 ເດືອນ | 10 |

4. ການກ້າແກ່ນສາມາດເຮັດໄດ້ຫລາຍລັກສະນະດັ່ງນີ້ :

- ການກ້າແກ່ນເພື່ອໃຊ້ເປັນຕົ້ນຕໍໃນການທາບກິ່ງ : ພວກໄມ້ໃຫ້ໝາກທີ່ມີແກ່ນຂະໜາດໃຫຍ່ ທີ່ມີອາຫານສຳຮອງຫລາຍ ເຊັ່ນ : ໝາກມ່ວງ, ທຸລຽນ ຈະກ້າແກ່ນໃນວັດຖຸທີ່ໃຊ້ສຳລັບປັກຊຳກ່ອນ ເຊັ່ນ : ຊາຍຫຍາບ ປະສົມຂີ້ເທົ່າແກບຊະນິດລະ 1 ສ່ວນ ຫລືກ້າໃນດິນທີ່ຜຸພຸ່ຍກໍ່ໄດ້ເມື່ອແກ່ນງອກຈົນໃບຊຸດທຳອິດແກ່ແລ້ວຈຶ່ງຖອນຕົ້ນກ້າມາບັນຈຸໃສ່ຖົງຢາງໃສ່ກາບພ້າວທີ່ແຊ່ນ້ຳແລະທັບມຸ່ນລະອຽດດີແລ້ວນັ້ນໃຫ້ເຕັມຖົງ, ມັດປາກຖົງໃຫ້ແໜ້ນກໍ່ສາມາດນຳໄປທາບກິ່ງໄດ້ . ສ່ວນແກ່ນທີ່ມີຂະໜາດນ້ອຍ ອາຫານສຳຮອງມີໜ້ອຍຈະກ້າໃນພາຊະນະບັນຈຸດິນປູກ ຈົນກະທັ້ງຕົ້ນເຕີບໂຕໄດ້ຂະໜາດກໍ່ສາມາດນຳໄປທາບກິ່ງໄດ້ .
- ການກ້າແກ່ນເພື່ອໃຊ້ໃນການຕິດຕາ : ວິທີນີ້ຈະກ້າແກ່ນ ໃນພາຊະນະທີ່ບັນຈຸດິນປູກ ຈົນກະທັ້ງມີຂະໜາດໃຫຍ່ພໍຈຶ່ງຕິດຕາ ແລະ ເມື່ອຕົ້ນທີ່ໄດ້ຈາກການຕິດຕານັ້ນເຕີບໂຕພຽງພໍແລ້ວຈຶ່ງນຳໄປປູກ ວິທີນີ້ຈະສະດວກໃນການປະຕິບັດ .

- ການກ້າແກ່ນໃນພາຊະນະ ເພື່ອນຳຕົ້ນໄປປູກໂດຍກົງຄ້າຍກັບວິທີທີ່ 2 ຄືເມື່ອຕົ້ນກ້າເຕີບໂຕໄດ້ຂະໜາດກໍ່ນຳໄປປູກ ບໍ່ມີການຕິດຕາ ຫລືປ່ຽນຍອດໃໝ່ ເປັນການສະດວກ ກ່ວາການກ້າແກ່ນໃນໜານປູກໂດຍກົງ .

- ການກ້າແກ່ນໃນພາຊະນະ ເພື່ອນຳຕົ້ນໄປປູກໂດຍກົງ : ອາດຈະເພື່ອການຕິດຕາ ຫລືປ່ຽນຍອດໃນພາຍຫລັງເພື່ອການປູກເລີຍກໍ່ໄດ້ ວິທີການກ້າເມັດໃນໜານປູກໂດຍກົງຈະມີຂໍ້ດີທີ່ບໍ່ຕ້ອງຂຸດຍ້າຍກ້າເລື້ອຍໆ ລະບົບຮາກຈຶ່ງບໍ່ ກະທົບກະເທືອນເໝືອນວິທີອື່ນໆ.

## 5.2 ການຂະຫຍາຍພັນແບບບໍ່ໃຊ້ເພດ

### 5.2.1 ການໂຫນກິ່ງ

ການຂະຫຍາຍພັນດ້ວຍການໂຫນກິ່ງນິຍົມໃຊ້ກັບໄມ້ໃຫ້ໝາກຫລາຍຊະນິດດ້ວຍກັນ ເຊິ່ງພໍຈະແບ່ງອອກໄດ້ຈຳພວກທີ່ໂຫນແລ້ວອອກຮາກງ່າຍ ເຊັ່ນ : ໝາກນາວ, ສົ້ມໂອ, ອະງຸ່ນ, ໝາກກ້ຽງ, ເປັນຕົ້ນ. ສ່ວນພວກທີ່ໂຫນແລ້ວອອກຮາກຍາກ ຫລືຂ້ອນຂ້າງຍາກ ໄດ້ແກ່ : ມັງຄຸດ, ຖົ່ວລຽນ, ລະມຸດ ເປັນຕົ້ນ.

1. ຫລັກ ແລະ ວິທີການໂຫນກິ່ງ :

- ລະດູທີ່ເໝາະສົມໃນການໂຫນກິ່ງ : ຄວນເປັນລະດູທີ່ຕົ້ນໄມ້ກຳລັງຈະເລີນເຕີບໂຕເຕັມທີ່ ຄືປະມານ ກາງລະດູຝົນ ເຖິງປາຍລະດູຝົນ ຈະເຮັດໃຫ້ກິ່ງອອກຮາກງ່າຍຂຶ້ນ ໂດຍສະເພາະພວກທີ່ອອກຮາກຍາກ ສ່ວນພວກທີ່ອອກຮາກງ່າຍອາດຈະໂຫນນອກລະດູຝົນກໍ່ໄດ້ ແຕ່ກໍ່ບໍ່ຄວນໂຫນໃນລະດູໜາວເຊິ່ງເປັນລະດູທີ່ກິ່ງໂຫນອອກຮາກໄດ້ຍາກທີ່ສຸດ .

- ການເລືອກຕົ້ນທີ່ຈະໂຫນ : ເປັນຕົ້ນທີ່ໃຫ້ໝາກແລ້ວໝາກມີຄຸນນະພາບ ແລະ ສຳຄັນອີກປະການໜຶ່ງຄືອາຍຸຂອງຕົ້ນບໍ່ຄວນເລືອກຕົ້ນທີ່ມີອາຍຸຫລາຍເພາະຈະອອກຮາກໄດ້ຍາກກ່ວາຕົ້ນອ່ອນ

- **ການເລືອກກິ່ງໂຫນ** : ຄວນເປັນກິ່ງທີ່ກຳລັງຈະເລີນເຕີບໂຕ, ກິ່ງອວບສົມບູນດີ, ກິ່ງມີລັກສະນະກົມບໍ່ບິດບ້ຽວ, ຂະໜາດຂອງກິ່ງພໍດີບໍ່ໃຫຍ່ ຫລືນ້ອຍເກີນໄປ, ກິ່ງບໍ່ຍາວເກີນໄປ ແລະບໍ່ມີພະຍາດແມງທຳລາຍເປັນກິ່ງທີ່ບໍ່ອ່ອນຫລືແກ່ເກີນໄປເຊິ່ງສາມາດກວດສອບໄດ້ໂດຍການລອງແກະເປືອກອອກເບິ່ງ ຖ້າເປືອກບໍ່ລ່ອນອອກມາໂດຍງ່າຍ ສະແດງວ່າກຳລັງພໍດີເໝາະ ຖ້າກິ່ງອ່ອນຫລືແກ່ເກີນໄປເປືອກຈະບໍ່ລ່ອນອອກໄດ້ງ່າຍໆ ຄວນເປັນກິ່ງທີ່ຕັ້ງຊື່ຫລືງ່ຽງໜ້ອຍໜຶ່ງເພາະກິ່ງພວກນີ້ເມື່ອໂຫນແລ້ວຈະອອກຮາກງ່າຍ ແລະໄດ້ຮາກທີ່ສົມບູນແຂງແຮງກ່ວາກິ່ງທີ່ຂະໜານກັບພື້ນ ຫລືກິ່ງທີ່ປາຍເດ່ລົງລຸ່ມບໍ່ຄວນໂຫນ ເພາະຈະອອກຮາກໄດ້ຍາກ.

2. ການໃຊ້ສານຮໍໂມນເຂົ້າໃນການໂຫນກິ່ງ : ການໃຊ້ສານຮໍໂມນຊ່ວຍໃນການອອກຮາກຂອງກິ່ງອາດໃຊ້ສານຮໍໂມນຊ່ວຍເພື່ອໃຫ້ອອກຮາກໄວຂຶ້ນ ພວກສານຮໍໂມນທີ່ນິຍົມໃຊ້ໄດ້ແກ່ : ໃຊ້ N A A ຄວາມເຂັ້ມຂຸ້ນ 10.000 - 15.000 ພີພີເອັມ ໃຊ້ກັບມັງຄຸດ,

ໃຊ້16.000 ພີພີເອັມ ໃຊ້ກັບໝາກມ່ວງ, ໃຊ້ 7.500 - 10.000 ພີພີເອັມໃຊ້ກັບໝາກລະມຸດ, ໃຊ້ 7.500 - 12.000 ພີພີເອັມ ກັບໝາກມີ້, ໃຊ້7.500 - 10.000 ພີພີເອັມ ກັບໝາກທຸລຽນ ເປັນຕົ້ນ .

3. ວິທີການໂຫມກິ່ງ :

- ໃຊ້ມີດປາດເປັນຮອຍ 2 ຮອຍ ຫ່າງກັນເທົ່າກັບຄວາມຍາວຂອງເສັ້ນຮອບວົງຂອງກິ່ງແລ້ວ ລອກ ເອົາເປືອກອອກໃຫ້ໝົດ .
- ໃຊ້ມີດຂູດເນື້ອເຍື່ອຈະເລີນອອກໃຫ້ໝົດ
- ໃຊ້ປາຍມີດຂີດທີ່ເປືອກຊື່ຮອຍປາດດ້ານເທິງ 1 - 4 ຮອຍອ້ອມກິ່ງ .
- ທາດ້ວຍສານຮໍໂມນທີ່ຮອຍປາດດ້ານເທິງ ແລະຮອຍແຜທີ່ປາດ
- ຫຸ້ມກິ່ງດ້ວຍກາບພ້າວທີ່ແຊ່ນ້ຳ ແລະ ຟັກມຸ່ນດີແລ້ວນັ້ນ ແລ້ວຫໍ່ດ້ວຍຜ້າຢາງ, ມັດຫົວ ແລະ ທ້າຍໃຫ້ແໜ້ນ .

4. ການຕັດກິ່ງໂຫມ :

- ຄວນຖ້າໃຫ້ກິ່ງນັ້ນອອກຮາກດີເສຍກ່ອນ ແລະ ຮາກຊຸດທຳອິດນັ້ນແຕກເປັນຮາກແໜງເປັນຈຳນວນຫລາຍແລ້ວຈຶ່ງຕັດໄດ້ .
- ເມື່ອຕັດແລ້ວ ຄວນສັງເກດເບິ່ງຈຳນວນໃບ ແລະ ຮາກໃຫ້ສົມດູນກັນຖ້າມີໃບມີກິ່ງຫລາຍເກີນໄປໃຫ້ຕັດອອກເລັກນ້ອຍ ເພາະຖ້າໃບຫລາຍເກີນໄປຈະຄາຍນ້ຳຫລາຍ .
- ກິ່ງທີ່ຕັດອອກມານັ້ນ ຍັງບໍ່ຄວນນຳໄປປູກທັນທີຄວນນຳໄປຊຳໄວ້ຈົນກ່ວາຈະແຂງແຮງ ຕົ້ນຕັ້ງຕົວດີແລ້ວຈຶ່ງນຳໄປປູກ ຖ້າປູກເລີຍກິ່ງອາດຈະຕາຍໄດ້ງ່າຍ .

**5.2.2 ການຕິດຕາ**

ການຕິດຕາ ເປັນວິທີການຂະຫຍາຍພັນໄມ້ໃຫ້ໝາກທີ່ສຳຄັນອີກວິທີໜຶ່ງ ເປັນວິທີທີ່ເໝາະສົມ ໃນການຂະຫຍາຍພັນໄມ້ໃຫ້ໝາກຫລາຍຊະນິດ. ການຕິດຕາໄມ້ໃຫ້ໝາກ ໂດຍທົ່ວໄປຈະເປັນການຕິດຕາເທິງຕົ້ນ ທີ່ໄດ້ຈາກການກ້າເມັດເຊື້ອປູກໃນໜານແລ້ວ ຫລືໃນພາຊະນະກໍ່ຕາມສ່ວນການຕິດຕາໃນລັກສະນະອື່ນໆກໍມີເຊັ່ນ : ການຕິດຕາໃນຕົ້ນທີ່ມີຂະໜາດໃຫຍ່ແລ້ວເພື່ອຕ້ອງການຈະປ່ຽນຍອດພັນເກົ່າໃຫ້ເປັນຍອດພັນໃໝ່ ຫລືເພື່ອໃຫ້ຕົ້ນດຽວມີຫລາຍແນວພັນ .

**1. ວິທີການຕິດຕາ**

- ການຕິດຕາແບບຕົວທີ (T- budding) ເປັນວິທີທີ່ນິຍົມໃຊ້ກັບໄມ້ໃຫ້ໝາກຫລາຍຢ່າງເຊັ່ນ ຕະກຸນສົ້ມ, ໝາກມ່ວງ ເປັນຕົ້ນ .
- ການຕິດຕາແບບເພລດ : ເປັນວິທີການທີ່ເໝາະສົມສຳລັບຕົ້ນຕໍທີ່ມີເປືອກໜາ ຫລືຕົ້ນຕໍທີ່ມີຂະໜາດໃຫຍ່ ມີວິທີການປະຕິບັດດັ່ງນີ້ :

ຫລັງຈາກຕິດຕາແລ້ວປະມານ 7 - 10 ມື້ ໃຫ້ກວດເບິ່ງແຜ່ນຕາ ຖ້າຍັງຂຽວຢູ່ສະແດງວ່າການຕິດຕານັ້ນໄດ້ຜົນ ໃຫ້ແກະແຜ່ນຕາອອກ ແລ້ວຈຶ່ງພັນເຂົ້າໄປໃໝ່ໂດຍເວັ້ນແຜ່ນຕາ

ໄວ້ ເພື່ອໃຫ້ຕານັ້ນສາມາດຈະເລີນອອກມາໄດ້ ຈາກນັ້ນໃຫ້ບາກກິ່ງເໜືອຮອຍຕິດຕາ ເພື່ອເລັ່ງໃຫ້ຕາເຕີບໂຕໄວຂຶ້ນ ເມື່ອກິ່ງໃໝ່ແຂງແຮງດີແລ້ວກໍ່ຕັດຍອດຕົ້ນຕໍເດີມອອກ .

**5.2.3 ການທາບກິ່ງ**

1. ວິທີການທາບກິ່ງ : ການທາບກິ່ງ ເປັນວິທີທີ່ນິຍົມໃຊ້ຂະຫຍາຍພັນໄມ້ໃຫ້ໝາກຫລາຍຊະນິດ ເນື່ອງຈາກວ່າ ເຮັດໄດ້ງ່າຍ ຕົ້ນທີ່ໄດ້ຈະເໝືອນເດີມໃຫ້ໝາກໄວ ແລະ ຍັງມີຮາກແກ້ວທີ່ໄດ້ຈາກຕົ້ນຕໍອີກດ້ວຍ ວິທີການຂະຫຍາຍພັນແບບນີ້ ມີ 2 ວິທີ ຄື :

- ການທາບແບບຕັດຕົ້ນຕໍອອກ : ວິທີນີ້ນິຍົມກັນໃນການຂະຫຍາຍພັນທຸລຽນ, ໝາກມ່ວງ ເປັນຕົ້ນ .

- ການທາບກິ່ງແບບປະກົບ : ວິທີນີ້ຈະບໍ່ຕັດຍອດຕົ້ນຕໍອອກ ແຕ່ຈະປາດທີ່ຕົ້ນຕໍ ແລະ ຍອດພັນໃຫ້ຮອຍທີ່ມີຂະໜາດເທົ່າກັນແລ້ວປະກົບປາກບາດທັງສອງເຂົ້າກັນ ພັນດ້ວຍແຜ່ນຢາງໃຫ້ແໜ້ນເມື່ອຕິດດີແລ້ວຈຶ່ງຕັດອອກຈາກກັນ. ວິທີນີ້ເໝາະສົມກັບໄມ້ໃຫ້ໝາກທີ່ມີເມັດຂະໜາດນ້ອຍ ບໍ່ສາມາດນໍາຕົ້ນກ້າມາທາບກິ່ງແບບວິທີທໍາອິດໄດ້ ເພາະຕົ້ນກ້າມີຂະໜາດນ້ອຍເກີນໄປ ຈຶ່ງຕ້ອງປະໃຫ້ຕົ້ນກ້າໃຫຍ່ຈົນມີຂະໜາດທີ່ພໍຈະນໍາມາທາບກິ່ງໄດ້ເສຍກ່ອນ .

2. ການຕັດກິ່ງທາບ : ມີວິທີການປະຕິບັດດັ່ງນີ້ :

- ຄວນໃຫ້ເນື້ອເຍື່ອເຊື່ອມປະສານຕິດກັນດີກ່ອນ ເຊິ່ງປົກກະຕິຈະໃຊ້ເວລາປະມານ 40-50 ວັນ ຫລັງທາບ ຖ້າຕັດໄວເກີນໄປກິ່ງທີ່ຕັດມານັ້ນຈະຕາຍ ຫລືຈະເລີນເຕີບໂຕຊ້າ .

- ສັງເກດຈໍານວນໃບ ແລະ ຮາກໃຫ້ສົມດູນກັນ ຖ້າມີໃບຫລາຍເກີນໄປໃຫ້ຕັດໃບຕັດກິ່ງອອກ ເນື່ອງຈາກຮາກມີໜ້ອຍບໍ່ສາມາດດູດນໍ້າມາລ້ຽງຕົ້ນໃຫ້ພຽງພໍໄດ້ .

- ແຜ່ນຢາງທີ່ພັນໄວ້ນັ້ນ ບໍ່ຄວນແກະອອກເທື່ອຄວນປ່ອຍໃຫ້ເປື່ອຍໄປເອງຫລືປະໄວ້ໄລຍະໃດໜຶ່ງຈຶ່ງຕັດອອກ .

ກິ່ງທາບທີ່ຕັດອອກມານັ້ນຢ່າຟ້າວເອົາໄປປູກເລີຍເທື່ອ ຄວນປູກໃນພາຊະນະບັນຈຸດິນຈົນກະທັ້ງຕົ້ນຕັ້ງຕົວດີແລ້ວ ຈຶ່ງນໍາໄປປູກໄດ້ .

ວິທີການທາບກິ່ງດັ່ງກ່າວ ນອກຈາກຈະໃຊ້ເພື່ອການຂະຫຍາຍພັນແລ້ວ ຍັງສາມາດດັດແປງວິທີການດັ່ງກ່າວ ເພື່ອປະໂຫຍດຫລາຍດ້ານດ້ວຍກັນ ເຊັ່ນ :

- ການເສີມຮາກ :ເປັນການນໍາເອົາວິທີການທາບກິ່ງມາດັດແປງໃຊ້ກັບ ໄມ້ໃຫ້ໝາກຫລາຍຊະນິດ ຊ່ວຍໃຫ້ຕົ້ນໄມ້ໃຫ້ໝາກທີ່ປູກໄປແລ້ວມີລະບົບຮາກຫລາຍຂຶ້ນ ຊ່ວຍຄໍ້າຕົ້ນບໍ່ໃຫ້ໂຄ່ນລົ້ມງ່າຍ ຫລືຊ່ວຍແກ້ໄຂບັນຫາໃນກໍລະນີທີ່ລະບົບຮາກຂອງຕົ້ນເດີມຖືກທໍາລາຍເສຍຫາຍເປັນຕົ້ນ.ວິທີການເສີມຮາກສາມາດເຮັດໄດ້ໂດຍການປູກຕົ້ນຕໍໄວ້ໃກ້ໆກັບຕົ້ນເດີມແລ້ວໂນ້ມປາຍເຂົ້າໄປປະກົບກັບຕົ້ນເດີມດ້ວຍວິທີການຂອງການທາບກິ່ງດັ່ງທີ່ໄດ້ກ່າວມາແລ້ວ .

- ການປົ່ງນຍອດ : ໃນກໍລະນີທີ່ຕ້ອງການປົ່ງນຍອດສ່ວນຂອງຕົ້ນພັນເດີມໃຫ້ເປັນພັນອື່ນ ຫລືປົ່ງນຍອດເພື່ອໃຫ້ໄດ້ຫລາຍພັນໃນຕົ້ນດຽວກັນ .

3. ການຕຽມຕົ້ນຕໍ : ໃນການຂະຫຍາຍພັນດ້ວຍວິທີການທາບກິ່ງ ແລະ ຕິດຕານັ້ນ ຈະຕ້ອງໃຊ້ຕົ້ນຕໍເພື່ອເຮັດໜ້າທີ່ເປັນລະບົບຮາກ ຫລືສ່ວນລຸ່ມຂອງຕົ້ນ ໃນຂະນະທີ່ພັນດີນັ້ນເຮັດໜ້າທີ່ເປັນສ່ວນກິ່ງ, ໃບ, ຕົ້ນ ຫລືສ່ວນເທິງທັງສອງນີ້ຈະຕ້ອງຢູ່ດ້ວຍກັນຕະຫລອດໄປ ໂດຍບໍ່ກໍ່ໃຫ້ເກີດຜົນເສຍຫາຍຕ່າງໆໃນພາຍຫລັງ. ດັ່ງນັ້ນ, ການທີ່ຈະນຳຕົ້ນຕໍມາໃຊ້ໃນການຂະຫຍາຍພັນຈຶ່ງຕ້ອງສຶກສາໃຫ້ດີເສຍກ່ອນ .

# ບົດທີດສະດີທີ 6
# ການບົວລະບັດຮັກສາສວນໄມ້ໃຫ້ໝາກ

**ຈຸດປະສົງການສອນ**

1. ບອກວິທີການໃຫ້ນໍ້າແກ່ໄມ້ໃຫ້ໝາກໄດ້ຢ່າງຖືກຕ້ອງ
2. ບອກວິທີການຕັດແຕ່ງກິ່ງທີ່ຖືກຕ້ອງ
3. ອະທິບາຍວິທີການໃຫ້ຝຸ່ນແກ່ຕົ້ນໄມ້ໃຫ້ໝາກ
4. ບອກວິທີການໃຫ້ຮໍໂມນແກ່ພືດໄດ້ຢ່າງຖືກຕ້ອງ .
5. ອະທິບາຍເຖິງການປ້ອງກັນກຳຈັດພະຍາດ ແລະ ແມງໄມ້ທີ່ມັກທຳລາຍໄມ້ໃຫ້ໝາກໄດ້.

## ເນື້ອໃນ

## 6.1 ການໃຫ້ນໍ້າແກ່ໄມ້ໃຫ້ໝາກ

### 6.1.1 ຄວາມສຳຄັນຂອງການໃຫ້ນໍ້າແກ່ໄມ້ໃຫ້ໝາກ

ການໃຫ້ນໍ້າແກ່ໄມ້ໃຫ້ໝາກ ເປັນເລື່ອງທີ່ສຳຄັນ ເຊິ່ງຜູ້ປູກຈະຕ້ອງໄດ້ສຶກສາໃຫ້ເຂົ້າໃຈວິທີການໃຫ້ນໍ້າແບບຕ່າງໆ ແລະ ເຂົ້າໃຈເຖິງນິໄສຂອງໄມ້ໃຫ້ໝາກແຕ່ລະພັນຈຶ່ງຈະສາມາດໃຫ້ນໍ້າແກ່ໄມ້ໃຫ້ໝາກໄດ້ຢ່າງມີປະສິດທິຜົນ ການໃຫ້ນໍ້າບໍ່ຖືກຕາມວິທີ ລວມທັງການເກີດຝົນຜິດລະດູການ ຫລືການປ່ອຍໃຫ້ຕົ້ນໄມ້ຂາດນໍ້າໃນຊ່ວງທີ່ຕົ້ນໄມ້ຕ້ອງການນໍ້າ ຈະພາໃຫ້ເກີດຜົນເສຍຫລາຍປະການກ່າວຄື :

1. ພວກໄມ້ໃຫ້ໝາກທີ່ອອກດອກ ຕິດໝາກຕະຫລອດປີ ເຊັ່ນ : ໝາກຫຸ່ງ, ສີດາ, ກ້ວຍ. .ຫາກເກີດການຂາດນໍ້າການຈະເລີນເຕີບໂຕຂອງຕົ້ນຈະຊະງັກໃຫ້ດອກໜ້ອຍ , ດອກລົ່ນ,ຕິດໝາກໜ້ອຍ ແລະ ໝາກມີຂະໜາດນ້ອຍຄຸນນະພາບຂອງໝາກບໍ່ໄດ້ຕາມມາດຖານ .

2. ພວກໄມ້ໃຫ້ໝາກທີ່ອອກດອກເປັນລະດູ : ຊ່ວງການໃຫ້ນໍ້າ ລວມທັງປະລິມານນໍ້າທີ່ໃຫ້ຈະສຳຄັນຫລາຍ ຕົ້ນໄມ້ຈະຕ້ອງໄດ້ຮັບນໍ້າຢ່າງຖືກຕ້ອງ ແລະ ເໝາະສົມດັ່ງນີ້ :

- ຊ່ວງທີ່ຕົ້ນຢູ່ໃນຢູ່ໃນໄລຍະຈະເລີນເຕີບໂຕທາງກິ່ງ ແລະ ໃບຊ່ວງນີ້ຈະເປັນຊ່ວງທີ່ຕ້ອງການນໍ້າຫລາຍ ແຕ່ຈະເປັນຊ່ວງທີ່ລະດູຝົນພໍດີ ການໃຫ້ນໍ້າຈຶ່ງບໍ່ຈຳເປັນ ຍົກເວັ້ນກໍລະນີທີ່ຝົນຖິ້ມຊ່ວງເປັນເວລາເຫິງນານກໍ່ຄວນໃຫ້ນໍ້າ ເພື່ອຊ່ວຍບໍ່ໃຫ້ຕົ້ນສະງັກການຈະເລີນເຕີບໂຕ ຫລືຊຸດໂຊມເກີນໄປ ເຊິ່ງຈະມີຜົນຕໍ່ການອອກດອກຕິດໝາກ .

- ຊ່ວງທີ່ຕົ້ນຕຽມຕົວອອກດອກ : ຊ່ວງນີ້ຈະຕ້ອງການນ້ຳໜ້ອຍ ຫລືບໍ່ຕ້ອງການຫົດນ້ຳເລີຍປ່ອຍໃຫ້ຕົ້ນສະສົມອາຫານຢ່າງເຕັມທີ່ຕຽມພ້ອມທີ່ຈະອອກດອກ ຖ້າໄດ້ຮັບນ້ຳຫລາຍໃນໄລຍະນີ້ຫລືເກີດມີຝົນຕົກໜັກຈະເຮັດໃຫ້ແຕກໃບອ່ອນແທນການອອກດອກ ແລະປີນັ້ນຈະບໍ່ອອກດອກເລີຍ ເພາະໃບແກ່ນຳບໍ່ທັນ ອາການເປັນເຊັ່ນນີ້ຈະພົບເຫັນກັບລຳໄຍ, ລິ້ນຈີ່, ໝາກມ່ວງເປັນຕົ້ນ ສຳລັບເງາະ, ທຸລຽນ, ມັງຄຸດ ນັ້ນກໍ່ຕ້ອງການຊ່ວງແລ້ງ ດິນແຫ້ງ ເພື່ອຕຽມຕົວອອກດອກເຊັ່ນດຽວກັນ ແຕ່ເປັນໄມ້ໃຫ້ໝາກທີ່ຕ້ອງການຄວາມຊຸ່ມສູງ. ດັ່ງນັ້ນ, ໃນບາງປີອາກາດແຫ້ງແລ້ງເກີນໄປ ຫລືຊ່ວງແລ້ງຍາວນານເນື່ອງຈາກຝົນຕົກຊ້າກ່ວາປົກກະຕິກໍ່ຈຳເປັນໃຫ້ນ້ຳຊ່ວຍເລັກນ້ອຍ ຖ້າໃຫ້ນ້ຳຫລາຍເກີນໄປກໍ່ຈະແຕກຍອດໃໝ່ເຊັ່ນດຽວກັນ .

- ຊ່ວງແທງຊໍ່ດອກປະສົມເກສອນ ແລະ ຕິດໝາກອ່ອນເປັນຊ່ວງທີ່ໄມ້ໃຫ້ໝາກຕ້ອງການນ້ຳຫລາຍຂຶ້ນເລື້ອຍໆ ຖ້າຂາດນ້ຳໃນຊ່ວງນີ້ ດອກຈະລົ່ນ, ໝາກອ່ອນຈະລົ່ນຫລືບໍ່ຕິດໝາກເລີຍ, ການໃຫ້ນ້ຳໃນຊ່ວງນີ້ ຕ້ອງລະມັດລະວັງເປັນພິເສດ ຄືໃຫ້ນ້ຳເທື່ອລະນ້ອຍກ່ອນ ແລ້ວຈຶ່ງເພີ່ມຂຶ້ນເລື້ອຍໆ ຖ້າໃຫ້ຫລາຍໂລດຈະເຮັດໃຫ້ດອກທີ່ປະສົມເກສອນແລ້ວ ຫລືໝາກທີ່ຕິດໃໝ່ ໆ ລົ່ນໄດ້ງ່າຍ.

- ຊ່ວງທີ່ໝາກກຳລັງພັດທະນາຈົນເຖິງໄລຍະພັດທະນາເຕັມທີ່ : ເປັນຊ່ວງທີ່ຕ້ອງການນ້ຳຫລາຍ ພວກໄມ້ໃຫ້ໝາກທີ່ຈະເລີນເຕີບໂຕໃນຊ່ວງແລ້ງ ຈຶ່ງມີບັນຫາເລື່ອງນີ້ຫລາຍ ຕ້ອງມີນ້ຳຢ່າງພຽງພໍການຕິດໝາກ, ການພັດທະນາໝາກຈຶ່ງຈະໄດ້ຮັບຜົນດີ ສ່ວນໄມ້ໃຫ້ໝາກຫລາຍຊະນິດ ໝາກຈະພັດທະນາໃນຊ່ວງທີ່ເຂົ້າລະດູຝົນແລ້ວຈຶ່ງບໍ່ມີບັນຫາ ໃນການໃຫ້ນ້ຳແຕ່ກໍ່ຕ້ອງລະມັດລະວັງເລື່ອງຝົນຖິ້ມຊ່ວງດົນ ຢ່າປ່ອຍໃຫ້ຂາດນ້ຳຈະເຮັດໃຫ້ໝາກລົ່ນ ໝາກມີຂະໜາດນ້ອຍ.

3. ພວກໄມ້ໃຫ້ໝາກທີ່ຕ້ອງການໃຫ້ອອກດອກໃນເວລາທີ່ຕ້ອງການ : ໄມ້ໃຫ້ໝາກຫລາຍຊະນິດຖ້າປ່ອຍໃຫ້ເຕີບໂຕໄປຕາມປົກກະຕິຈະອອກດອກໜ້ອຍ ຫລືອອກດອກທະຍອຍກັນໄປເລື້ອຍໆ ເຊິ່ງເປັນການຫຍຸ້ງຍາກຮັກສາ ກໍໃຊ້ວິທີການບັງຄັບໃຫ້ອອກດອກຈຳນວນຫລາຍໆພ້ອມກັນ ເຊິ່ງຈະໃຊ້ວິທີການງົດການໃຫ້ນ້ຳແລະການໃຫ້ນ້ຳຮ່ວມກັບການຕັດແຕ່ງກິ່ງກໍ່ຈະສາມາດບັງຄັບໃຫ້ອອກດອກໃນເວລາທີ່ຕ້ອງການໄດ້ ເຊິ່ງສ່ວນໃຫຍ່ຈະສາມາດຄິດໄລ່ເວລາການໃຫ້ໝາກຜະລິດອອກສູ່ຕະຫລາດ ໃນຊ່ວງທີ່ມີລາຄາແພງໄດ້ເຊັ່ນ :

- ພວກຕະກຸນສົ້ມ : ຈະໃຊ້ວິທີບັງຄັບຕົ້ນໃຫ້ອອກດອກພ້ອມໆກັນໂດຍການງົດການໃຫ້ນ້ຳຫລືລະບາຍນ້ຳອອກຈາກຮ່ອງສວນໃຫ້ໝົດ ປ່ອຍໃຫ້ດິນແຫ້ງໃຫ້ຕົ້ນອົດນ້ຳຈົນໃບແຫ່ວ ຈຶ່ງໃຫ້ນ້ຳໃໝ 'ຕົ້ນສົ້ມກໍ່ຈະແຕກໃບອ່ອນ ແລະ ເກີດດອກອອກໝາກຕໍ່ໄປ ຈາກນັ້ນ ກໍ່ໃຫ້ນ້ຳເປັນປົກກະຕິ ຈົນໝາກໃກ້ຈະແກ່ຈຶ່ງງົດການໃຫ້ນ້ຳອີກເພື່ອໃຫ້ໝາກມີຄຸນນະພາບດີ
.

- ນອກຈາກພວກສົ້ມແລ້ວ ຍັງໃຊ້ວິທີນີ້ກັບໄມ້ໃຫ້ໝາກຫລາຍຊະນິດ ເຊັ່ນ : ໝາກທັນ,ໝາກຊຽບ ເປັນຕົ້ນ.

### 6.1.2 ວິທີການໃຫ້ນ້ຳໃນແກ່ໄມ້ໃຫ້ໝາກ

1. ການໃຫ້ນ້ຳໃນການປູກແບບຍົກຮ່ອງ : ສຳລັບການປູກແບບຍົກຮ່ອງເຊິ່ງມີນ້ຳຢ່າງພຽງພໍນັ້ນ ອາດຈະໃຊ້ວິທີຕັກຫົດ ໃນຂະນະທີ່ຕົ້ນໄມ້ຍັງນ້ອຍຢູ່ ເມື່ອຕົ້ນໃຫຍ່ແລ້ວນິຍົມວິທີການໃຊ້ເຮືອຫົດນ້ຳພົ່ນຂຶ້ນມາໜານປູກ . ສຳລັບການໃຫ້ນ້ຳແບບເນື້ອທີ່ສູງ ຈະມີວິທີການໃຫ້ນ້ຳທີ່ແຕກຕ່າງກັນອອກໄປເຊິ່ງແຕ່ລະວິທີຈະຕ້ອງຄຳນຶງເຖິງການໃຊ້ຈ່າຍຕະຫລອດຈົນຄວາມສະດວກໃນການໃຫ້ນ້ຳດ້ວຍສະເໝີ ແລ້ວເລືອກໃຊ້ວິທີທີ່ເໝາະສົມເພື່ອເປັນການປະຢັດວິທີການໃຫ້ນ້ຳແບບນີ້ມີຄື :

- ການໃຫ້ນ້ຳໂດຍປ່ອຍນ້ຳໄປຕາມຮ່ອງນ້ອຍໆລະຫວ່າງແຖວປູກ ຕັ້ງແຕ່ຫົວໜານເຖິງທ້າຍໜານໃນທິດທາງດຽວກັນ. ວິທີນີ້ເໝາະສົມ ສຳລັບບ່ອນທີ່ມີນ້ຳຢ່າງພຽງພໍ ເພາະຕ້ອງໃຊ້ນ້ຳຫລາຍ ແລະ ເນື້ອທີ່ມີຄວາມຊັນໜ້ອຍ ຫລືປັບເນື້ອທີ່ເພື່ອໃຫ້ນ້ຳໄຫລຢ່າງສະໝ່ຳສະເໝີບໍ່ຂັງເປັນຈຸດໆ .

- ການໃຫ້ນ້ຳແບບອ້ອມຮອບຕົ້ນ : ຄ້າຍກັບວິທີທຳອິດ ແຕ່ແທນທີ່ຈະເປັນຮ່ອງສົ່ງນ້ຳທີ່ຊື່ ກໍ່ມາດັດແປງເປັນວສົງຮອບຕົ້ນ ເຊິ່ງຈະເຮັດໃຫ້ຕົ້ນໄດ້ຮັບນ້ຳຢ່າງພຽງພໍ ແລະ ສະໝ່ຳສະເໝີກ່ວາ .

- ການໃຫ້ນ້ຳດ້ວຍສາຍຢາງ : ເຊິ່ງເປັນການໃຫ້ນ້ຳໂດຍຕໍ່ມາຈາກເຄື່ອງສູບນ້ຳ ຫລືລົດ ວິທີນີ້ຈະເປືອງຄ່າໃຊ້ຈ່າຍ ແລະ ເສຍແຮງງານຫລາຍ ແຕ່ອາດຈຳເປັນສຳລັບບາງແຫ່ງທີ່ມີເນື້ອທີ່ສູງຕ່ຳບໍ່ສະໝ່ຳສະເໝີກັນ .

- ການໃຫ້ນ້ຳແບບຢອດ ຫລືແບບປະຢັດ : ໂດຍການວາງທໍ່ສົ່ງນ້ຳໄປຕາມແຖວປູກ ແລ້ວມີທໍ່ຂະໜາດນ້ອຍຕໍ່ຈາກທໍ່ສົ່ງນ້ຳ ໄປສູ່ແຕ່ລະຕົ້ນເປັນຈຸດໆ ຕາມທີ່ຕ້ອງການ ນ້ຳຈະຄ່ອຍໄຫລ ຫລືຢອດອອກມາເທື່ອລະໜ້ອຍຈາກທໍ່ນ້ອຍເທື່ອລະຢອດຕະຫລອດເວລາ. ການໃຫ້ນ້ຳແບບນີ້ປະຢັດນ້ຳ, ແຮງງານແຕ່ຕ້ອງລົງທຶນສູງ ເພາະມີອຸປະກອນຫລາຍຢ່າງ .

- ການໃຫ້ນ້ຳດ້ວຍຫົວຊີດພົ່ນນ້ຳຂະໜາດນ້ອຍຫລືແບບສະປິງເກີ: ໂດຍຕິດຕັ້ງສະປິງເກີນ້ອຍໆໄວ້ຕາມໂຄນຕົ້ນ ເມື່ອປ່ອຍນ້ຳຫົວສະປິງເກີກໍ່ຈະພົ່ນນ້ຳກະຈາຍອອກໄປຮອບ ຕົ້ນ .

## 6.2 ການຕັດແຕ່ງກິ່ງ

### 6.2.1 ຈຸດປະສົງຂອງການຕັດແຕ່ງກິ່ງ

ການຕັດແຕ່ງກິ່ງ ຄືການຕັດເອົາກິ່ງທີ່ບໍ່ຕ້ອງການອອກ ການຕັດແຕ່ງຈຶ່ງຕ້ອງສຶກສາເຖິງນິໄສຂອງຕົ້ນໄມ້ແຕ່ລະຊະນິດເປັນຢ່າງດີເສຍກ່ອນ ເພາະໄມ້ໃຫ້ໝາກບາງຊະນິດຕັດແຕ່ງກິ່ງອອກບໍ່ໄດ້ຫລາຍ ບາງຢ່າງກໍ່ຕັດອອກໄດ້ຫລາຍ . ການຕັດແຕ່ງກິ່ງມີຈຸດປະສົງຄື :

1. ເພື່ອໃຫ້ໄດ້ຊົງພຸ່ມທີ່ເໝາະສົມໃນການປະຕິບັດງານຕ່າງໆ ເຊັ່ນ : ການສີດພົ່ນຢາ, ການໄຖ, ການຄາດ, ການເກັບໝາກ . ການຕັດແຕ່ງ ໃນລັກສະນະນີ້ ຈະຕ້ອງເຮັດຕັ້ງແຕ່ຕົ້ນຍັງນ້ອຍຢູ່ ຈົນກະທັ້ງໄດ້ຮູບຊົງທີ່ຕ້ອງການ .

2. ການຕັດແຕ່ງເພື່ອ ສ້າງຄວາມສົມບູນແຂງແຮງໃຫ້ກັບຕົ້ນໄມ້ໃຫ້ໝາກ ຕົ້ນໄມ້ໃຫ້ໝາກນັ້ນ ຖ້າປ່ອຍປະຈະເລີນຕາມທຳມະຊາດນັ້ນ ກໍ່ຈະແຕກກິ່ງກ້ານສາຂາຫຼາຍເກີນໄປເຊິ່ງກິ່ງສ່ວນໜຶ່ງຈະບໍ່ເປັນປະໂຫຍດຄືບໍ່ສາມາດໃຫ້ຜົນຜະລິດ ຖ້າປ່ອຍປະໄວ້ກໍ່ສິ້ນເປືອງອາຫານໄປລ້ຽງກິ່ງພວກນີ້ ຈຶ່ງຄວນຕັດແຕ່ງອອກໃຫ້ເຫລືອແຕ່ກິ່ງທີ່ມີປະໂຫຍດເທົ່ານັ້ນ. ກິ່ງທີ່ຕ້ອງຕັດອອກຄື : ກິ່ງທີ່ນ້ອຍເກີນໄປ , ກິ່ທີ່ອ່ອນແອ, ກິ່ງຄົດງໍ, ກິ່ງໃນພຸ່ມທີ່ບໍ່ຄ່ອຍຖືກແດດ, ກິ່ງທີ່ເປັນພະຍາດ ຫລື ແມງໄມ້ລົບກວນ, ການຕັດແຕ່ງແບບນີ້ຈະເປັນການຕັດແຕ່ງແບບນ້ອຍໆ ແຕ່ຕ້ອງເຮັດເລື້ອຍໆ ແຕ່ຕົ້ນຍັງນ້ອຍຢູ່ຈົນເຖິງໃຫຍ່ ແລະ ຕ້ອງເຮັດທຸກໆ ປີ.

3. ການຕັດແຕ່ງເພື່ອໃຫ້ອອກດອກ :ໄມ້ໃຫ້ໝາກຫລາຍຊະນິດຖ້າບໍ່ຕັດແຕ່ງຈະບໍ່ອອກດອກຫລືອອກໜ້ອຍຈົນບໍ່ຄຸ້ມຄ່າ. ໄມ້ໃຫ້ໝາກທີ່ຕ້ອງອາໄສການຕັດແຕ່ງເພື່ອໃຫ້ອອກດອກໄດ້ແກ່ : ໝາກກັນ, ໝາກຂຽບ, ສີດາ ເຊິ່ງອາດຈະຕັດແຕ່ງພຽງເລັກນ້ອຍ ເຊັ່ນ : ຕັດແຕ່ງກິ່ງທີ່ໃຫ້ໝາກແລ້ວ ຫລືອາດຈະຕັດແຕ່ງຂະໜາດໃຫຍ່ເຫລືອແຕ່ຕໍ ຫລືໂຄນກິ່ງໃຫຍ່ໆໄວ້ເພື່ອໃຫ້ແຕກກິ່ງໃໝ່. ການຕັດແຕ່ງເພື່ອໃຫ້ອອກດອກນີ້ ຍັງໝາຍລວມເຖິງການຕັດແຕ່ງ ເພື່ອໃຫ້ອອກດອກທຸກໆປີດ້ວຍເພາະໄມ້ໃຫ້ໝາກຫລາຍຊະນິດ ເຊັ່ນ : ໝາກມ່ວງ, ລຳໄຍ, ລີ້ນຈີ່ ... ມີນິໄສອອກດອກເວັ້ນປີ ຖ້າປີໃດອອກດອກ ແລະ ຕິດໝາກປີຖັດໄປ ຈະບໍ່ອອກດອກ ຫລືອອກໜ້ອຍເນື່ອງຈາກອາຫານສະສົມໃນຕົ້ນບໍ່ພຽງພໍການຕັດແຕ່ງໃນກໍລະນີນີ້ ຈຶ່ງໝາຍເຖິງການຕັດແຕ່ງເພື່ອບໍ່ໃຫ້ຕິດໝາກຫລາຍເກີນໄປ ໃຫ້ມີປະລິມານການຜະລິດຢູ່ໃນລະດັບທີ່ເໝາະສົມ ຈະຊ່ວຍລຸດບັນຫາການອອກດອກເວັ້ນປີ .

4. ການຕັດແຕ່ງເພື່ອປ້ອງກັນການລະບາດຂອງພະຍາດ ແລະ ແມງໄມ້ ການຕັດແຕ່ງໃນລັກສະນະນີ້ອາດຕັດແຕ່ງເລັກໆນ້ອຍໆ ເອົາສ່ວນທີ່ເປັນພະຍາດ ຫລືແມງໄມ້ທຳລາຍອອກ ຫລືອາດຕັດແຕ່ງຈຳນວນໃຫຍ່ເພື່ອໃຫ້ຊົງພຸ່ມປອດໂປ່ງເປັນການປ້ອງກັນການລະບາດຂອງພະຍາດບາງຊະນິດ ເຊັ່ນ : ພະຍາດຮາກເໜົ່າ ເປັນຕົ້ນ.

### 6.2.2 ຂໍ້ຄວນລະວັງໃນການຕັດແຕ່ງກິ່ງ

ກ່ອນການຕັດແຕ່ງກິ່ງໄມ້ໃຫ້ໝາກ ຄວນຄຳນຶງເຖິງສິ່ງດັ່ງນີ້ :

1. ຕ້ອງຮູ້ນິໄສຂອງໄມ້ໃຫ້ໝາກທີ່ຈະທຳການຕັດແຕ່ງກິ່ງໄດ້ເປັນຢ່າງດີ, ໄມ້ໃຫ້ໝາກບາງຊະນິດ ສາມາດທຳການຕັດແຕ່ງໄດ້ຫລາຍ ແຕ່ບາງຊະນິດບໍ່ສາມາດຕັດແຕ່ງໄດ້

ຫລາຍ,ໄມ້ໃຫ້ໝາກບາງຊະນິດອອກດອກຕິດໝາກທີ່ຍອດແລະບາງຊະນິດກໍ່ອອກດອກຕິດໝາກທີ່ກິ່ງແກ່. ດັ່ງນັ້ນ, ການຕັດຈຶ່ງບໍ່ເໝືອນກັນ.

2. ຕ້ອງຕັດໃຫ້ຖືກຕ້ອງກັບລະດູການເຊັ່ນ : ໝາກມ່ວງ,ລິ້ນຈີ່,ລຳໄຍ, ເງາະຕ່າງໆຈະຕັດແຕ່ງກິ່ງເມື່ອເກັບຜົນຜະລິດແລ້ວ ຄືເປັນການບຳລຸງຕົ້ນໃຫ້ສົມບູນແຂງແຮງ ໂດຍການພວນດິນ, ໃສ່ຝຸ່ນ ແລະ ຫົດນ້ຳໃຫ້ຕົ້ນໄມ້ນັ້ນສະສົມອາຫານໄວ້ໃນຕົ້ນໃຫ້ຫລາຍທີ່ສຸດ ເພື່ອຈະໄດ້ອອກດອກໃຫ້ໝາກໃນປີຕໍ່ໄປ ແຕ່ໄມ້ໃຫ້ໝາກບາງຊະນິດກໍ່ຈະປ່ອຍໃຫ້ຕົ້ນສະສົມອາຫານໄປເລື້ອຍໆກ່ອນເມື່ອເຖິງລະດູການອອກດອກ ຈຶ່ງຈະຕັດແຕ່ງກິ່ງເພື່ອໃຫ້ແຕກຍອດແຕກໃບໃໝ່ແລະ ອອກດອກ ເຊັ່ນ : ອະງຸ່ນ, ໝາກຊຽບ, ໝາກທັນ .

3. ເຄື່ອງມືທີ່ໃຊ້ໃນການຕັດແຕ່ງກິ່ງຕ້ອງເໝາະສົມ ເຊັ່ນ : ພວກກິ່ງທີ່ມີຂະໜາດເສັ້ນຜ່າກາງບໍ່ເກີນເຄິ່ງນີ້ວ ໃຫ້ໃຊ້ມີດສຳລັບຕັດແຕ່ງກິ່ງຕັດໄດ້ ແຕ່ຖ້າເປັນກິ່ງໃຫຍ່ກ່ວານີ້ຄວນໃຊ້ເລື່ອຍຕັດ. ເຄື່ອງມືທີ່ໃຊ້ຕ້ອງສະອາດ, ການຕັດກິ່ງຄວນລະວັງຢ່າໃຫ້ຊ້ຳນູນຫລາຍ.

4. ການຕັດແຕ່ງກິ່ງ ຕ້ອງພະຍາຍາມໃຫ້ກິ່ງທີ່ເຫລືອໄວ້ ກະຈາຍຢູ່ຮອບໆ ຕົ້ນຢ່າງສະໝ່ຳສະເໝີ ເພື່ອໃຫ້ຕົ້ນອອກດອກ, ໝາກກະຈາຍທົ່ວຕົ້ນ, ຕົ້ນຈະໄດ້ຮັບອາຫານເທົ່າກັນເຮັດໃຫ້ໝາກມີຄຸນນະພາບດີ .

5. ການຮັກສາຮອຍທີ່ຕັດແຕ່ງ ການຕັດກິ່ງໃຫຍ່ຫລັງຈາກຕັດແລ້ວຄວນທາຮອຍແຜດ້ວຍປູນແດງ ຫລືຢາທາບາດແຜກິ່ງໄມ້ຢ່າປະໄວ້ເພາະພະຍາດ ແລະ ແມງໄມ້ບາງຢ່າງຈະເຂົ້າທຳລາຍທາງຮອຍແຜໄດ້ .

### 6.2.3 ວິທີການຕັດແຕ່ງກິ່ງ

ການຕັດແຕ່ງກິ່ງໄມ້ໃຫ້ໝາກ ມີວິທີການ ດັ່ງນີ້ :

1. ກິ່ງທີ່ມີຂະໜາດນ້ອຍ ຕ້ອງການຕັດສ່ວນປາຍອອກ (ລວມທັງການຕັດຊໍ່ໝາກ) ໃຫ້ຕັດຫ່າງຈາກຕາທີ່ເຫລືອໄວ້ພໍສົມຄວນ ຄືບໍ່ຫ່າງຕາເກີນໄປເພາະຈະເຮັດໃຫ້ກິ່ງແຫ້ງຕາຍໄດ້ ແລະ ບໍ່ຄວນຕັດໃກ້ຕາເກີນໄປ ເພາະຈະເຮັດໃຫ້ຕາທີ່ເຫລືອນັ້ນກະທົບກະເທືອນເກີນໄປຫລື ແຕກເປັນກິ່ງໃໝ່ທີ່ມີລັກສະນະບໍ່ແຂງແຮງຈີກຂາດງ່າຍ. ສຳລັບຮອຍທີ່ຕັດນັ້ນ ຄວນໃຫ້ຕັ້ງສາກກັບກິ່ງສະເໝີ ຢ່າຕັດເຈັ້ຍເພາະບາດແຜຈະກ້ວາງ ແລະ ນານດີ .

2. ກິ່ງແໜງທີ່ຕ້ອງການຕັດອອກ ໃຫ້ຕັດຕິດກັບກິ່ງໃຫຍ່ສະເໝີ ຢ່າໃຫ້ເຫລືອດ້ານກົກຂອງກິ່ງໄວ້ເພາະຈະແຕກກິ່ງໃໝ່ຈະເສຍເວລາຕັດໃໝ່.

3. ການຕັດກິ່ງທີ່ມີຂະໜາດໃຫຍ່ຕ້ອງລະມັດລະວັງຢ່າໃຫ້ຈີກຂາດໂດຍຄັ້ງທຳອິດໃຫ້ໃຊ້ເລື່ອຍໆ ທີ່ກິ່ງດ້ານລຸ່ມກ່ອນ ແລ້ວຈຶ່ງຕັດກິ່ງໃຫ້ຂາດ. ຫລັງຈາກນັ້ນ ຈຶ່ງຕັດກິ່ງໃຫ້ສັ້ນລົງຕາມທີ່ຕ້ອງການ .

### 6.2.4 ລະບົບການຕັດແຕ່ງກິ່ງໄມ້ໃຫ້ໝາກ

ແບ່ງເປັນ 3 ລະບົບດ້ວຍກັນ ຄື :

1. ການຕັດແຕ່ງແບບຊົງປີຣາມິດ : ການຕັດແຕ່ງແບບນີ້ຈະເໝາະກັບໄມ້ໃຫ້ໝາກທີ່ມີຊົງພຸ່ມສູງ ເຊັ່ນ : ທຸລຽນ, ໝາກມີ້, ໝາກມ່ວງ ໂດຍຈະຈິ່ງຍອດກາງໃຫ້ສູງຂຶ້ນໄປເລື້ອຍໆ ແລ້ວເລືອກກິ່ງໃຫຍ່ໆ ທີ່ແຕກອອກມາຈາກລຳຕົ້ນໄວ້ຈຳນວນໜຶ່ງ ໂດຍແຕ່ລະກິ່ງນັ້ນຈະຢູ່ໃນຕຳແໜ່ງວຽນຮອບຕົ້ນ ຈາກລຸ່ມຂຶ້ນເທິງໂດຍໃຫ້ທັບຊ້ອນກັນໜ້ອຍທີ່ສຸດ , ຂໍ້ດີຂອງຊົງນີ້ຄືມີໂຄງສ້າງທີ່ແຂງແຮງ, ມີເນື້ອທີ່ອອກດອກຫລາຍ ແຕ່ມີຂໍ້ເສຍ ເຊັ່ນ : ໃບລຸ່ມ ໆ ຈະໄດ້ຮັບແສງແດດໜ້ອຍ ແລະ ຊົງຕົ້ນທີ່ສູງອາດເກັບໝາກຍາກ ແລະ ການບົວລະບັດຮັກສາລຳບາກ .

2. ການຕັດແຕ່ງແບບຕັດຍອດກາງອອກ (ຊົງໂຖດອກໄມ້) ການຕັດແຕ່ງແບບນີ້ ບໍ່ຄ່ອຍເໝາະສົມກັບໄມ້ໃຫ້ໝາກເຂດຮ້ອນ ມີວິທີການຕັດແຕ່ງຄື : ຈະປ່ອຍໃຫ້ຕົ້ນສູງໄປໄລຍະໜຶ່ງ ເມື່ອສູງເທົ່າທີ່ຕ້ອງການກໍ່ຕັດຍອດກາງອອກ ແລ້ວເລືອກກິ່ງໃຫຍ່ໆ ທີ່ຢູ່ໃຕ້ຮອຍຕັດໄວ້ປະມານ 3 - 4 ກິ່ງ ໃຫ້ກະຈາຍຢູ່ຮອບຕົ້ນນອກນັ້ນຕັດອອກໝົດ.ການຕັດແຕ່ງແບບນີມີຜົນດີຄືໄດ້ຊົງພຸ່ມຕ່ຳ, ເຮັດໃຫ້ການກະຈາຍຂອງດອກແລະໝາກສະໝ່ຳສະເໝີດີ, ໄດ້ຮັບແສງສະໝ່ຳສະເໝີ ແລະ ໝາກມີຄຸນນະພາບດີ ແຕ່ມີຂໍ້ເສຍຢູ່ບ່ອນວ່າ ເນື້ອທີ່ ໆ ອອກດອກແລະຕິດໝາກໜ້ອຍລົງ ແລະ ໂຄງສ້າງແບບນີ້ຈະບໍ່ແຂງແຮງ ຈີກຫັກໄດ້ງ່າຍ .

3. ການຕັດແຕ່ງແບບຊົງປີຣາມິດກາຍ :ເປັນແບບທີ່ປະສົມປະສານທັງແບບທີ່ 1 ແລະ ທີ່ 2 ເຂົ້າກັນ ເຮັດໃຫ້ຊົງຕົ້ນບໍ່ສູງຫລືຕ່ຳເກີນໄປ, ໄດ້ໂຄງສ້າງຂອງຕົ້ນທີ່ແຂງແຮງມີເນື້ອທີ່ອອກດອກຫລາຍໃຫ້ຜົນຜະລິດສູງ, ການບົວລະບັດຮັກສາງ່າຍແຕ່ການຕັດແຕ່ງແບບນີ້ຂ້ອນຂ້າງຍາກຕ້ອງໃຊ້ຄວາມຊຳນານພໍສົມຄວນ ແລະ ໃຊ້ເວລາຫລາຍກ່ວາຈະໄດ້ຮູບຊົງ. ການຕັດແຕ່ງຊົງນີ້ ໃຊ້ໄດ້ດີກັບໄມ້ໃຫ້ມາກຫລາຍຊະນິດ ເຊັ່ນ : ໝາກມ່ວງ, ພວກສົ້ມ, ທຸລຽນບາງພັນ, ໝາກມີ້, ໝາກຂຽບ ເປັນຕົ້ນ .

## 6.3 ຝຸ່ນ ແລະ ການໃຫ້ຝຸ່ນແກ່ຕົ້ນໄມ້ໃຫ້ໝາກ

ຝຸ່ນທີ່ນິຍົມໃຊ້ກັບໄມ້ໃຫ້ໝາກມີຢູ່ 2 ພວກໃຫຍ່ດ້ວຍກັນເຊັ່ນ : ຝຸ່ນອິນຊີ ແລະ ຝຸ່ນເຄມີ .

### 6.3.1 ຝຸ່ນອິນຊີ

ໄດ້ແກ່ : ຝຸ່ນທີ່ເກີດຈາກການສະລາຍຕົວເໜົ່າເປື່ອຍພຸພັງຂອງສິ່ງທີ່ມີຊີວິດຕ່າງໆເຊິ່ງໝາຍເຖິງຝຸ່ນຄອກ, ຝຸ່ນບົ່ມ, ຝຸ່ນພືດສົດ ຕະຫລອດຈົນເສດພືດ ແລະ ສັດ ໃນລັກສະນະຕ່າງໆ ເຊັ່ນ : ເສດເຫລືອຂອງພວກຖົ່ວ, ກະດູກປົ່ນແລະ ອື່ນໆ ເຊິ່ງສິ່ງເຫລົ່ານີ້ເມື່ອສະລາຍຕົວເໜົ່າເປື່ອຍ ກໍ່ຈະກາຍເປັນອິນຊີວັດຖຸ ໃນດິນ .

1. ປະໂຫຍດຂອງຝຸ່ນອິນຊີແລະອິນຊີວັດຖຸໃນດິນ : ມີປະໂຫຍດຕໍ່ດິນປູກ ແລະ ໄມ້ໃຫ້ໝາກ ດັ່ງນີ້ :

- ເຮັດໃຫ້ດິນມີຄວາມຜຸພຸ່ຍສາມາດອູ້ມນ້ຳ ແລະ ລະບາຍນ້ຳໄດ້ດີ ຊ່ວຍໃນການຖ່າຍເທອາກາດໃນດິນ ເຮັດໃຫ້ຮາກພືດເຕີບໂຕແຂງແຮງ .

- ອິນຊີວັດຖຸໃນດິນ ເປັນຕົວດູດຊັບຝຸ່ນເຄມີ ຫລືທາດອາຫານທີ່ໃສ່ລົງໄປໃນດິນ ແລະ ປົດປ່ອຍອອກມາໃຫ້ພືດໄປໃຊ້ໄດ້ຢ່າງສະໝ່ຳສະເໝີເຮັດໃຫ້ຝຸ່ນເກີດປະໂຫຍດເຕັມທີ່ .

- ອິນຊີວັດຖຸ ຊ່ວຍລຸດຜ່ອນຄວາມເສຍຫາຍ ທີ່ເກີດມາຈາກການປ່ຽນແປງປະຕິກິລິຍາຂອງດິນກ່າວຄື ຖ້າດິນມີອິນຊີວັດຖຸໃນດິນຢ່າງພຽງພໍ ປະຕິກິລິຍາຕ່າງ ໆ ໃນດິນ ເຊັ່ນ : ຄວາມເປັນກົດ - ດ່າງໃນດິນຈະບໍ່ເກີດການປ່ຽນແປງຢ່າງໄວຈົນເຮັດໃຫ້ເກີດອັນຕະລາຍຕໍ່ພືດໄດ້ .

- ອິນຊີວັດຖຸໃນດິນ ຈະຊ່ວຍເຮັດໃຫ້ທາດອາຫານຕ່າງໆ ທີ່ມີຢູ່ໃນດິນເປັນປະໂຫຍດຕໍ່ພືດຫລາຍຂຶ້ນ ເຊິ່ງປົກກະຕິຈະມີທາດອາຫານຢູ່ແລ້ວຕາມທຳມະຊາດ ແຕ່ຖ້າດິນນັ້ນມີສະພາບທີ່ບໍ່ເໝາະສົມພວກທາດອາຫານຕ່າງໆ ຈະຖືກດິນຈັບຍຶດໄວ້ ເຮັດໃຫ້ພືດນຳໄປໃຊ້ບໍ່ໄດ້ ເກີດການຂາດທາດອາຫານໄດ້ .

- ຊ່ວຍເພີ່ມທາດອາຫານໃຫ້ແກ່ດິນຝຸ່ນອິນຊີນັ້ນ ຈະມີທາດອາຫານຕ່າງໆ ທີ່ເປັນປະໂຫຍດຕໍ່ພືດຢູ່ສະເໝີ ເມື່ອໃສ່ຝຸ່ນອິນຊີກໍ່ເທົ່າກັບໃສ່ທາດອາຫານໃຫ້ແກ່ດິນປູກດ້ວຍໂດຍສະເພາະຢ່າງຍິ່ງຄືພວກທາດອາຫານສຳຮອງເຊິ່ງພືດຈະຂາດບໍ່ໄດ້ ແຕ່ກໍ່ຕ້ອງການໃນປະລິມານໜ້ອຍ ພວກຝຸ່ນອິນຊີຈະມີທາດອາຫານສຳຮອງຢ່າງພຽງພໍ ການໃສ່ຝຸ່ນອິນຊີ ເພື່ອບຳລຸງດິນປູກເປັນປະຈຳນັ້ນຈະເຮັດໃຫ້ພືດບໍ່ຂາດທາດອາຫານສຳຮອງ .

2. ຂໍ້ຄວນລະວັງໃນການໃຊ້ຝຸ່ນອິນຊີ

- ຝຸ່ນອິນຊີທີ່ຈະນຳມາໃຊ້ ຄວນເປັນຝຸ່ນທີ່ສະລາຍຕົວດີແລ້ວ ຫລືສັງເກດໄດ້ງ່າຍໆວ່າຄືບໍ່ເຫັນສະພາບຂອງເດີມນັ້ນເອງ .

- ບໍ່ຄວນໃສ່ຝຸ່ນ ໃນຂະນະທີ່ດິນປຽກເກີນໄປເພາະຈະເຮັດໃຫ້ດິນປຽກຍິ່ງຂຶ້ນ ເປັນອັນຕະລາຍຕໍ່ຮາກພືດ ຫລືເຮັດໃຫ້ພະຍາດໃນດິນບາງຊະນິດລະບາດຮຸນແຮງຂຶ້ນ .

**6.3.2 ຝຸ່ນເຄມີ**

ຝຸ່ນເຄມີທີ່ນິຍົມໃຊ້ກັບໄມ້ໃຫໝາກ ມີຄື :

1. ຝຸ່ນດ່ຽວ : ໝາຍເຖິງ ຝຸ່ນທີ່ມີທາດອາຫານຫລັກພຽງທາດດຽວ ຫລືສອງທາດ ເຊັ່ນ : ຝຸ່ນຢູເລຍ ທີ່ທາດໄນໂຕຣເຈນ 40 - 45 ເປີເຊັນ, ຝຸ່ນແອມໂມນຽມຊັນເຟດ ມີທາດໄນໂຕຣເຈນ 20 ເປີເຊັນ, ຝຸ່ນຊຸບເປີຟອສເຟດ ມີທາດຟອສຟໍຣັດ ($P_2O_5$) 18 - 20 ເປີເຊັນ ເປັນຕົ້ນ . ພວກຝຸ່ນດ່ຽວຈະໃຊ້ກັບໄມ້ໃຫ້ໝາກໃນກໍລະນີເຊັ່ນ :

- ໃນກໍລະນີຕົ້ນໄມ້ໃຫ້ໝາກ ຕ້ອງການທາດອາຫານພຽງທາດດຽວ ເຊັ່ນ : ການໃສ່ຝຸ່ນຊຸບເປີຟອສເຟດ ຮອງກົ້ນຂຸມປູກເພື່ອການເລັ່ງຮາກ ຫລືການໃສ່ຝຸ່ນຢູເລຍຫລັງຈາກປູກໃໝ່ໆ ເພື່ອເລັ່ງການຈະເລີນເຕີບໂຕຂອງຕົ້ນ ຫລືການໃສ່ຝຸ່ນໂປແຕັສຊຽມຊັລເຟດໃນຂະນະທີ່ໝາກໃກ້ຈະແກ່ ເພື່ອຊ່ວຍໃຫ້ໝາກມີຄຸນນະພາບດີ ເປັນຕົ້ນ .

- ປົກກະຕິທາດໄນໂຕຣເຈນ ແລະ ທາດໂປແຕັສຊຽມ ເປັນທາດທີ່ສູນເສຍໄປຈາກດິນໄດ້ງ່າຍ. ດັ່ງນັ້ນ, ການໃສ່ຝຸ່ນພວກນີ້ຈຶ່ງໃສ່ເທື່ອລະໜ້ອຍແຕ່ໃສ່ຫລາຍຄັ້ງ .

- ໃນກໍລະນີທີ່ຊື້ຝຸ່ນສູດທີ່ຕ້ອງການບໍ່ໄດ້ ກໍ່ຫາຊື້ຝຸ່ນດ່ຽວມາແທນກັນໄດ້ ຫລືຊື້ມາປະສົມໃຫ້ເປັນສູດທີ່ຕ້ອງການໄດ້ .

2. ຝຸ່ນປະສົມ : ໝາຍເຖິງຝຸ່ນທີ່ປະສົມກັນມາຮຽບຮ້ອຍແລ້ວສາມາດນຳມາໃຊ້ໄດ້ເລີຍ, ຝຸ່ນປະສົມມີສູດຕ່າງໆກັນອອກໄປຈະມີທາດຫຼັກພຽງ 2 ທາດ ເຊັ່ນ : ສູດ16-20-00 ຫລືມີຄົບ 3 ທາດ ເຊັ່ນ : ສູດ 15-15-15 ເປັນຕົ້ນ. ນອກຈາກມີທາດອາຫານຫລັກ 3 ໂຕທີ່ໄດ້ກ່າວມາແລ້ວນັ້ນ ຍັງມີບາງສູດຈະມີທາດອາຫານສຳຮອງຢູ່ດ້ວຍ ເຊັ່ນ : ສູດ 5-10-5-2 ( Mn ) ເຊິ່ງ Mn ນັ້ນໝາຍເຖິງທາດແມງການີສ ເຊິ່ງມີຢູ່ຮ້ອຍກິໂລກຣາມ ຂອງຈຳນວນຝຸ່ນດັ່ງກ່າວ ຈະມີທາດແມງການິສ 2 ກິໂລກຣາມຢູ່ໃນນັ້ນເອງ .

3. ຝຸ່ນນ້ຳ ຫລືຝຸ່ນທາງໃບ : ເປັນຝຸ່ນທີ່ລະລາຍນ້ຳໄດ້ດີເປັນຝຸ່ນທີ່ສຳເລັດຮູບສາມາດປະສົມນ້ຳ ແລະ ໃຊ້ໄດ້ເລີຍ ເມື່ອຊີດພົ່ນໄປທີ່ໃບພືດ ໃບພືດກໍ່ຈະດູດເອົາທາດອາຫານໄປໃຊ້ໄດ້ໂດຍກົງ ແລະ ໄວກ່ວາການໃຫ້ທາງຮາກ. ດັ່ງນັ້ນ, ຝຸ່ນນ້ຳ ຈຶ່ງນິຍົມໃຊ້ກັບໄມ້ໃຫ້ໝາກຫລາຍຊະນິດ ແລະ ຫລາຍກໍລະນີດ້ວຍກັນ ເຊັ່ນ : ໃຊ້ໃນການບຳລຸງຕົ້ນ, ໃບ, ກິ່ງ ໝາກ ໃຫ້ສົມບູນ. ນອກນີ້ ຍັງໃຊ້ແກ້ໄຂອາການຂາດທາດອາຫານຂອງພືດອີກດ້ວຍ ຫລືໃນກໍລະນີຕ້ອງການເພີ່ມທາດອາຫານບາງຢ່າງໃຫ້ແກ່ຕົ້ນພືດ. ເຖິງຢ່າງໃດກໍ່ຕາມ ພວກຝຸ່ນທາງໃບ ກໍບໍ່ສາມາດໃຊ້ແທນຝຸ່ນທາງດິນໄດ້ຕະຫລອດໄປ ເພາະພືດຍັງອາໄສທາດອາຫານຕ່າງ ໆໃນດິນເປັນຫລັກ ແລະອີກຢ່າງໜຶ່ງຝຸ່ນທາງໃບຈະມີລາຄາແພງກ່ວາຝຸ່ນທາງດິນອີກດ້ວຍ ຄວນໃຊ້ໃນກໍລະນີທີ່ຈຳເປັນເທົ່ານັ້ນ .

**ຂໍ້ຄວນລະວັງໃນການໃຫ້ຝຸ່ນທາງໃບ** :

- ປະຕິບັດຕາມຂໍ້ແນະນຳທີ່ຂຽນໄວ້ໃນສະຫລາກບັນຈຸ ຢ່າໃຊ້ເກີນຂະໜາດທີ່ບັນຈຸໄວ້.
- ການໃຊ້ຝຸ່ນທາງໃບ ທີ່ໄດ້ຜົນຕ້ອງສີດພົ່ນໃຫ້ຖືກທາງ ດ້ານໃຕ້ໃບສະເໝີເພາະພືດຈະດູດອາຫານ ໂດຍຜ່ານປາກໃບ.
- ຄວນໃຊ້ຢາຈັບໃບປະສົມລົງໄປດ້ວຍສະເໝີ ເພື່ອໃຫ້ຝຸ່ນຈັບໃບໄດ້ດີຍິ່ງຂຶ້ນ.
- ບໍ່ຄວນໃຊ້ເລື້ອຍໆ ຖ້າບໍ່ຈຳເປັນ ເພາະນອກຈາກຈະເສຍຄ່າໃຊ້ຈ່າຍແລ້ວຍັງເກີດຜົນເສຍແກ່ຕົ້ນພືດໄດ້ເຊັ່ນກັນ.

### 6.3.3 ທາດອາຫານ

ທາດອາຫານທີ່ຈຳເປັນຕໍ່ພືດມີຢູ່ນຳກັນທັງໝົດ 16 ທາດ ແຕ່ມີຢູ່ 3 ທາດທີ່ພືດສາມາດຫາໄດ້ຈາກອາກາດ ແລະ ນ້ຳ ພືດຈຶ່ງບໍ່ຂາດແຄນທາດພວກນີ້ ອີກ 13 ທາດທີ່ເຫລືອພືດ

ໄດ້ຈາກດິນ ແລະ ຝຸ່ນທີ່ໃສ່ໃຫ້ .

ສຳລັບທາດອາຫານທີ່ພືດຈຳເປັນ ແລະ ຕ້ອງໃຊ້ໃນຈຳນວນຫລາຍມີຢູ່ 3 ທາດ ຄື : ໄນໂຕຣເຈນ, ຟອສຟໍຣັດ ແລະໂປແຕສຊຽມ, ທາດດັ່ງກ່າວນີ້ດິນຈະມີບໍ່ພຽງພໍ ໂດຍສະເພາະດິນທີ່ໃຊ້ປູກພືດມາເຖິງນານແລ້ວສ່ວນທາດອາຫານທີ່ເຫລືອນັ້ນ ຈັດເປັນທາດອາຫານສຳຮອງ ຄືມີຄວາມຈຳເປັນສຳລັບພືດເຊັ່ນດຽວກັບພວກທຳອິດ ແຕ່ຕົ້ນພືດຈະໃຊ້ໜ້ອຍກ່ວາ ແລະ ດິນປູກທົ່ວໄປຈະມີທາດເຫລົ່ານີ້ຢູ່ພຽງພໍແລ້ວ ນອກຈາກດິນປູກນັ້ນຢູ່ໃນສະພາບທີ່ບໍ່ເໝາະສົມເຊັ່ນ :ດິນເປັນກົດຫລືດ່າງເກີນໄປ ຕົ້ນໄມ້ຈະສະແດງອາການຂາດທາດພວກນີ້ ພວກທາດອາຫານທີ່ພົບວ່າເປັນບັນຫາໃນການປູກໄມ້ໃຫ້ໝາກໄດ້ແກ່ : ທາດເຫລັກ, ສັງກະສີ, ແມກນີຊຽມ, ແມງການີສ ແລະ ແຄລຊຽມ ເປັນຕົ້ນ . ທາດອາຫານຕ່າງໆ ມີບົດບາດທີ່ສຳຄັນຕໍ່ພືດ ດັ່ງນີ້ :

1. ທາດໄນໂຕຣເຈນ : ມີໜ້າທີ່ກ່ຽວຂ້ອງກັບການຈະເລີນເຕີບໂຕທົ່ວໄປ, ການສ້າງກິ່ງ, ໃບ, ດອກ ແລະ ໝາກ ເປັນສ່ວນປະກອບທີ່ສຳຄັນຂອງສ່ວນທີ່ເປັນສີຂຽວຂອງພືດ. ດັ່ງນັ້ນ, ຖ້າພືດຂາດທາດໄນໂຕຣເຈນ ຈະສະແດງອາການໃບເຫລືອງຊີດ,ບໍ່ສົດໃສ,ໃບມີຂະໜາດນ້ອຍລົງ, ໃບລົ່ນ,ຕົ້ນສະຫງັກການຈະເລີນເຕີບໂຕ ດອກໝາກລົ່ນກ່ອນກຳນົດ. ແຕ່ຖ້າພືດໄດ້ຮັບໄນໂຕຣເຈນຫລາຍເກີນໄປກໍສະແດງອາການຄືມີໃບຫລາຍເກີນໄປ,ໃບມີສີຂຽວເຂັ້ມ, ການຈະເລີນເຕີບໂຕຂອງກິ່ງກ້ານມີຫລາຍ ແຕ່ບໍ່ຄ່ອຍແຂງແຮງອ່ອນແອຕໍ່ພະຍາດໄດ້ງ່າຍ. ປົກກະຕິຕົ້ນໄມ້ໃຫ້ໝາກຈະຕ້ອງການທາດໄນໂຕຣເຈນສູງທຸກຊ່ວງການຈະເລີນເຕີບໂຕ ແຕ່ກໍ່ຕ້ອງລະມັດລະວັງຢ່າໃຫ້ໄດ້ຮັບຫລາຍເກີນໄປໂດຍສະເພາະຊ່ວງທີ່ກ່ອນຈະອອກດອກ .

2. ທາດຟອສຟໍຣັສ : ມີໜ້າທີ່ສຳຄັນຫລາຍປະການດ້ວຍກັນ ໂດຍສະເພາະຢ່າງຍິ່ງຈະກ່ຽວຂອງກັບການເຕີບໂຕຂອງຮາກ ເມື່ອຮາກສົມບູນແຂງແຮງ ກໍ່ຈະເຮັດໃຫ້ຕົ້ນສົມບູນແຂງແຮງໄປດ້ວຍ ຈຶ່ງນິຍົມໃສ່ຮອງກົ້ນຂຸມປູກ ຫລືປະສົມດິນປູກ ຖ້າພືດຖ້າພືດຂາດທາດຟົສຟໍຣັດຮາກຈະເຕີບໂຕຊ້າ, ຜົນຜະລິດລຸດລົງ, ອອກອອກດອກຕິດໝາກໜ້ອຍ,ເມັດລີບ ການປ່ຽນແປ້ງເປັນນ້ຳຕານຈະຊ້າ ເຮັດໃຫ້ໝາກສຸກຊ້າ ໝາກສຸກບໍ່ສະໝ່ຳສະເໝີ ຄຸນນະພາບຂອງໝາກຫລຸດລົງ.ທາດຟອສຟໍຣັດ ນອກຈາກຈະໃຫ້ໃນຮູບຂອງຝຸ່ນເຄມີແລ້ວພວກກະດູກປົ່ນ, ເຂົາສັດປົ່ນ, ແລະ ເລືອດແຫ້ງ ກໍ່ມີທາດພວກນີ້ຢູ່ຫລາຍ.

3. ທາດໂປແຕສຊຽມ : ຊ່ວຍສ້າງຄວາມແຂງແຮງແກ່ຕົ້ນພືດ ສ້າງຄວາມແຂງແກ່ນໃຫ້ແກ່ເນື້ອໄມ້ເຮັດໃຫ້ຕົ້ນແຂງແຮງ ບໍ່ຈີກຫັກງ່າຍ ຊ່ວຍສ້າງເນື້ອຂອງໝາກ ຊ່ວຍໃນການສ້າງອາຫານຂອງລຳຕົ້ນຕະຫລອດຈົນການຄື້ອນຍ້າຍທາດອາຫານພາຍໃນຕົ້ນເຮັດໃຫ້ໝາກມີຄຸນນະພາບດີ ມີຣົດຊາດດີ ຫລືຫວານຂຶ້ນ . ຖ້າຂາດທາດນີ້ຈະເຮັດໃຫ້ພືດອ່ອນແອ ເຕີບໂຕຊ້າຫລືຊະງັກການຈະເລີນເຕີບໂຕ, ໃບມີຂະໜາດນ້ອຍ, ກິ່ງຫັກງ່າຍ ການຕິ່ງຕົວຂອງຈຸລັງລຸດລົງເຮັດໃຫ້ແຫ່ວໄດ້ງ່າຍ. ທາດໂປແຕສຊຽມເປັນທາດທີ່ຊະລ້າງໄດ້ງ່າຍ. ດັ່ງນັ້ນ, ການໃສ່ຝຸ່ນພວກນີ້ຄວນໃສ່ຄັ້ງລະໜ້ອຍ ແຕ່ໃສ່ເລື້ອຍໆ ແລະ ໃສ່ໃນບ່ອນທີ່ພືດສາມາດເອົາໄປໃຊ້ໄດ້ຢ່າງໄວ ເຊັ່ນ :

ໃສ່ແຖວປາຍຮາກແຕ່ຢ່າຕິດຮາກເກີນໄປ . ທາດໂປແຕສຊຽມ ນອກຈາກຈະມີໃນດິນ ຫລືໄດ້ຈາກຝຸ່ນເຄມີແລ້ວ ພວກຂີ້ເຖົ່າທີ່ໄດ້ຈາກການເຜົາໄໝ້ ກໍ່ໃຫ້ທາດໂປແຕສຊຽມໄດ້ ເຊັ່ນ : ຂີ້ເຖົ່າແກບ, ຂີ້ເຖົ່າໄມ້, ຫຍ້າ ຫລືເຟືອງເຜົາ ເປັນຕົ້ນ .

**6.3.4 ຫລັກການໃສ່ຝຸ່ນ**

ການໃສ່ຝຸ່ນໄມ້ໃຫ້ໝາກມີຫລັກການກ້ວາງໆ ດັ່ງນີ້ :

1. ກ່ອນປູກ ຫລືຊ່ວງຕຽມຂຸມປູກ ຊ່ວງນີ້ຈະໃຫ້ພວກຝຸ່ນອິນຊີຫລາຍ ຍິ່ງດິນປູກບໍ່ຄ່ອຍດີກໍ່ຕ້ອງໃຫ້ຫລາຍ ການໃສ່ຝຸ່ນອິນຊີໃນຊ່ວງນີ້ຈະເຮັດໄດ້ງ່າຍກ່ວາຫລັງຈາກທີ່ປູກໄປແລ້ວ . ສຳລັບຝຸ່ນເຄມີອາດຍັງບໍ່ຕ້ອງໃສ່ໃນຊ່ວງນີ້ກໍ່ໄດ້ ນອກຈາກປະສົມກັບດິນໃນຂຸມປູກເພື່ອເລັ່ງການຈະເລີນເຕີບໂຕຂອງຕົ້ນໃນໄລຍະທຳອິດ ເຊັ່ນ : ໃສ່ຝຸ່ນຊຸບເປີຟອສເຟສ ຫລືກະດູກປົ່ນປະສົມດິນໃນຂຸມປູກ ຫລືຮອງກົ້ນຂຸມປູກ

2. ຫລັງປູກແລ້ວ ແຕ່ບໍ່ທັນໃຫ້ໝາກ ຊ່ວງນີ້ອາດໃສ່ຝຸ່ນສູດທີ່ມີສັດສ່ວນຂອງທາດອາຫານຕ່າງໆ ເຊັ່ນ : ສູດ 15- 15-15 ເປັນຕົ້ນ ການໃສ່ຝຸ່ນໃນຊ່ວງນີ້ ແມ່ນຕ້ອງການບຳລຸງໃຫ້ຕົ້ນເຕີບໂຕແຂງແຮງເທົ່ານັ້ນ. ເຖິງຢ່າງໃດກໍ່ຕາມ, ຫາກພົບວ່າດິນຂາດທາດອາຫານຢ່າງໃດຢ່າງໜຶ່ງ ກໍ່ຄວນໃສ່ເພີ່ມໃຫ້ .

3. ຊ່ວງທີ່ໃຫ້ດອກໃຫ້ໝາກແລ້ວ : ໄມ້ໃຫ້ໝາກມີທັງພວກໃຫ້ດອກອອກໝາກທັ້ງປີ ແລະ ພວກທີ່ໃຫ້ດອກອອກໝາກເປັນລະດູ, ສຳລັບພວກທີ່ອອກດອກໃຫ້ໝາກຕະຫລອດທັ້ງປີຄວນໃຫ້ທາດອາຫານຕ່າງ ໆ ຕະຫລອດທັ້ງປີ ເຊັ່ນ ປີລະ 3 - 4 ຄັ້ງ ຫລືໃສ່ທຸກໆ 2 - 3 ເດືອນເພື່ອບຳລຸງຕົ້ນໃຫ້ສົມບູນແຂງແຮງແລະບຳລຸງໝາກໃຫ້ມີຄຸນນະພາບດີດ້ວຍ.ສ່ວນພວກໄມ້ໃຫ້ໝາກທີ່ອອກດອກໃຫ້ໝາກປີລະຄັ້ງຫລືເປັນລະດູນັ້ນຄວນໃສ່ຝຸ່ນ ດັ່ງນີ້ :

- ໄລຍະສ້າງໃບ : ຫລືໄລຍະການຈະເລີນເຕີບໂຕ ເຊິ່ງເລີ່ມຕົ້ນຫລັງຈາກການເກັບໝາກແລ້ວຕ້ອງບຳລຸງດ້ວຍການໃສ່ຝຸ່ນ ໃຫ້ນ້ຳຢ່າງພຽງພໍ ເພື່ອໃຫ້ຕົ້ນແຕກໃບໃໝ່ໄລຍະນີ້ຕ້ອງການທາດ ໄນໂຕຣເຈນສູງເປັນພິເສດຕ້ອງໃສ່ຝຸ່ນທີ່ມີສີສ່ວນ 1:1:1 ແລ້ວເພີ່ມຝຸ່ນໄນໂຕຣເຈນຕື່ມອີກລວມທັງການໃສ່ຝຸ່ນຄອກກໍ່ຈະເຮັດໃນຊ່ວງນີ້ .

- ໄລຍະສ້າງດອກຫລັງຈາກທີ່ໃບໃໝ່ແກ່ : ຕົ້ນສ້າງອາຫານ ແລະ ສະສົມອາຫານພຽງພໍແລ້ວກໍ່ຈະເຂົ້າສູ່ໄລຍະໃຫ້ດອກໃຫ້ໝາກເຊິ່ງຊ່ວງນີ້ຕົ້ນຈະຕ້ອງການທາດຟົສຟໍຣັດສູງກ່ວາປົກກະຕິ ຝຸ່ນທີ່ໃຊ້ຄວນເປັນສູດທີ່ມີສັດສ່ວນ ເຊັ່ນ 1:2:1 ຫລືໃຊ້ສູດທຳມະດາແລ້ວເພີ່ມທາດຟົສຟໍຣັດອີກ .

- ໄລຍະຕິດໝາກຈົນຮອດໝາກແກ່ : ໃນໄລຍະທີ່ຕິດໝາກໃໝ່ໆນັ້ນຈະຕ້ອງການທາດໄນໂຕຣເຈນຫລາຍກ່ວາປົກກະຕິເລັກນ້ອຍ ເພື່ອຊ່ວຍການຈະເລີນເຕີບໂຕຂອງໝາກ ແຕ່ລະວັງຢ່າໃຫ້ຫລາຍເກີນໄປໝາກຈະລົ່ນ ຖ້າດິນມີທາດນີ້ຫລາຍແລ້ວກໍ່ບໍ່ຄວນໃຫ້ຫລັງຈາກທີ່ຕິດໝາກ ໝາກຈະເລີນໄປຈົນກະທັ້ງໝາກແກ່ ເປັນໄລຍະທີ່ຕ້ອງການທາດໂປແຕສ

ຊຸ່ມສູງຂຶ້ນ ເພື່ອໃຫ້ໝາກແກ່ເປັນປົກກະຕິ ຊ່ວງນີ້ຄວນໃຫ້ຝຸ່ນທີ່ມີສັດສ່ວນ 2 : 2 : 3 ຫລືໃສ່ສູດທຳມະດາ 1 : 1 : 1 ແລ້ວເພີ່ມທາດໂປແຕສຊຽມຢ່າງດຽວໃນຕອນໃກ້ຈະແກ່ .

**6.3.5 ວິທີການໃສ່ຝຸ່ນ**

ວິທີການໃສ່ຝຸ່ນໄມ້ໃຫ້ໝາກມີຫລາຍວິທີຄື :

1. **ວິທີພວນດິນອ້ອມຕົ້ນແລ້ວໂຮຍຝຸ່ນ** : ການພວນດິນອ້ອມຕົ້ນຕ້ອງໃຫ້ຫ່າງຈາກຕົ້ນພໍສົມຄວນ ແລະ ລະມັດລະວັງບໍ່ໃຫ້ຮາກຂາດເມື່ອໂຮຍຝຸ່ນແລ້ວຖ້າມີນ້ຳກໍ່ໃຫ້ນ້ຳເພື່ອລະລາຍຝຸ່ນຖ້າລບໍ່ມີນ້ຳກໍຄວນພວນດິນເບົາໆອີກເທື່ອໜຶ່ງ ເພື່ອເຮັດໃຫ້ຝຸ່ນເຂົ້າກັບດິນເພື່ອເປັນການປ້ອງກັນການສູນເສຍຝຸ່ນໄດ້ເປັນຢ່າງດີ .

2. ວິທີການເຮັດຮ່ອງອ້ອມຕາມລັດສະໝີຂອງຊົງພຸ່ມ ແລ້ວໃສ່ຝຸ່ນໃນຮ່ອງແລ້ວເອົາດິນຖົມ ໃນໄລຍະນີ້ອາດໃສ່ຝຸ່ນຄອກໄປດ້ວຍກໍ່ຍິ່ງດີ ຈາກນັ້ນກໍ່ຫົດນ້ຳ .

3. ວິທີຫວ່ານຝຸ່ນໂດຍກົງ : ໃນກໍລະນີທີ່ບໍ່ສາມດຂຸດດິນ ຫລືເຮັດຮ່ອງເພື່ອໃສ່ຝຸ່ນໄດ້ກໍ່ໃຫ້ໃສ່ຝຸ່ນລົງດິນໂດຍກົງໂດຍກ່ອນຈະຫວ່ານຝຸ່ນຄວນຫົດນ້ຳເສຍກ່ອນແລະເມື່ອຫວ່ານແລ້ວຄວນຫົດນ້ຳອີກຄັ້ງໜຶ່ງເພື່ອເປັນການລະລາຍຝຸ່ນລົງດິນ .

4. ວິທີການໃສ່ຝຸ່ນເປັນຈຸດ ຫລືເຈາະດິນເປັນຮູອ້ອມຕົ້ນ ແລ້ວໃສ່ຝຸ່ນລົງໄປໃນຮູ ແລ້ວຖົມ, ຈຸດທີ່ຈະໃສ່ນັ້ນຄວນກະຈາຍຢູ່ອ້ອມໆ ຕົ້ນ ໃນບໍລິເວນທີ່ຮາກພືດດູດເອົາໄປໃຊ້ ໄດ້ງ່າຍ ແລະ ສະລັບກັນໄປທຸກຄັ້ງທີໃສ່ຝຸ່ນເພື່ອໃຫ້ຕົ້ນໄດ້ຮັບຝຸ່ນຢ່າງທົ່ວເຖິງທຸກດ້ານ ວິທີນີ້ຈະປ້ອງກັນການສູນເສຍຝຸ່ນໄດ້ເປັນຢ່າງດີ .

## 6.4 ການໃຊ້ຮໍໂມນພືດກັບໄມ້ໃຫ້ໝາກ

ສານຄວບຄຸມການຈະເລີນເຕີບໂຕຂອງພືດຫລືທີ່ຮູ້ຈັກກັນດີໃນຊື່ຂອງສານຮໍໂມນພືດ ຫລືຮໍໂມນນັ້ນໄດ້ນຳມາໃຊ້ກັບໄມ້ໃຫ້ໝາກໃນດ່ານຕ່າງໆມາແລ້ວ ໂດຍສະເພາະປະຈຸບັນໄດ້ມີຜູ້ສົນໃຈສຶກສາຄົ້ນຄ້ວາທົດລອງໃຊ້ກັນຢ່າງຫລວງຫລາຍ ໂດຍເນັ້ນໄປໃນເລື່ອງຂອງການບັງຄັບໃຫ້ພືດອອກດອກຕິດໝາກ ຕະຫລອດຮອດຄຸນນະພາບຂອງໝາກເປັນຫລັກສຳລັບການໃຊ້ສານຮໍໂມນນັ້ນ ຈຳເປັນຕ້ອງພິຖີພິຖັນທີ່ສຸດ ບໍ່ດັ່ງນັ້ນແທນທີ່ຈະເກີດຜົນດີ ກັບເກີດຜົນເສຍຢ່າງງ່າຍດາຍໄດ້ . ຮໍໂມນທີ່ນຳມາໃຊ້ກັນກັບໄມ້ໃຫ້ໝາກແບ່ງໄດ້ຄື :

**6.4.1 ສານອອກຊິນ** ( Auxins )

ມີສານສັງເຄາະຢູ່ຫລາຍໂຕທີ່ຈັດຢູ່ໃນພວກນີ້ທີ່ນຳມາໃຊ້ແລະຮູ້ຈັກກັນດີໄດ້ແກ່ :

1. ເອັນເອເອ ( NAA ) : ໃຊ້ກັນຫລາຍໃນການຂະຫຍາຍພັນໄມ້ໃຫ້ໝາກເຊັ່ນ : ການໂຫມກິ່ງ, ການປັກຊຳກິ່ງໄມ້ໃຫ້ໝາກທົ່ວໆ ໄປໂດຍສະເພາະພວກໄມ້ໃຫ້ໝາກທີ່ອອກຮາກຍາກເຊັ່ນ :ມັງຄຸດ, ທຸລຽນ,ລະມຸດ ຕ້ອງໄດ້ໃຊ້ສານຕົວນີ້ຊ່ວຍສະເໝີ ໂດຍໃຊ້ໃນອັດຕາຄວາມເຂັ້ມຂຸ້ນ 10.000 -15.000 ພີພີເອັມ ( = ສ່ວນໃນລ້ານ ) ຈະເຮັດໃຫ້ອອກຮາກດີຂຶ້ນ .

ນອກນີ້ຍັງໃຊ້ໃນການຕິດຕາ ແລະ ທາບກິ່ງດ້ວຍ ຫລືໃຊ້ເລັ່ງຕາທີ່ຕິດແລ້ວໃຫ້ແຕກເປັນກິ່ງໄວຂຶ້ນ ເປັນຕົ້ນ . ນອກຈາກໃຊ້ໃນການຂະຫຍາຍພັນແລ້ວສານ ເອັນເອເອ ຍັງໃຊ້ປ້ອງກັນການລົ່ນຂອງໝາກອີກດ້ວຍ .

2. ໄອບີເອ ( IBA ) : ເປັນສານທີ່ໃຊ້ໃນການຂະຫຍາຍພັນພືດ ເຊັ່ນ : ການໂທມກິ່ງ, ກການປັກຊໍາ ໂດຍໃຊ້ເປັນສານຊ່ວຍເລັ່ງໃຫ້ການອອກຮາກດີຂຶ້ນ, ສານນີ້ເປັນພິດກັບໃບໄມ້ຈຶ່ງບໍ່ຄວນນໍາໄປໃຊ້ໃນກໍລະນີອື່ນ ໆ ສານດັ່ງກ່າວທີ່ຜະລິດໃນທ້ອງຕະຫລາດໄດ້ແກ່ ເຊຣາດິກ (seradix ), ຣູທ-ໂກຣ (Root- gro )ເປັນຕົ້ນ .

3. ທູ-ໂຟ-ດີ ( 2-4-D ) ສ່ວນໃຫຍ່ນໍາມາໃຊ້ໃນຮູບຂອງສານກໍາຈັດວັດສະພືດໃນໝານໄມ້ໃຫ້ໝາກສ່ວນປະໂຫຍດດ້ານອື່ນໆຍັງບໍ່ທັນມີຫລາຍເທື່ອ ເຊັ່ນ ໃຊ້ໃນຄວາມເຂັ້ມຂຸ້ນຕໍ່າໆ ກັບຕົ້ນໝາກນາວ ແລະ ພວກຕະກຸນສົ້ມບາງຊະນິດ ເພື່ອປ້ອງກັນໝາກລົ່ນກ່ອນເກັບໝາກ ເປັນຕົ້ນ .

**6.4.2 ສານຈິບເບີເຣນລີນ ( Gibberellines )**

ສານໂຕນີ້ຄຸນສົມບັດຫລາຍປະການດ້ວຍກັນ ແຕ່ທີ່ນໍາມາໃຊ້ກັບໄມ້ໃຫ້ໝາກຄືໃຊ້ໃນສວນອະງຸ່ນເພື່ອຢືດຊໍ່ໝາກ, ຂະຫຍາຍໝາກ ເຮັດໃຫ້ໝາກຢືດຍາວຂື້ນຮູບຊົງສວຍງາມຊວນຊື້ແລະເຮັດໃຫ້ເນື້ອກອບອີກດ້ວຍ .

**6.4.3 ເອທີລີນ**

ເປັນຮໍໂມນພືດທີ່ຢູ່ໃນຮູບຂອງທາດອາຍ ທາດດັ່ງກ່າວ ນໍາມາໃຊ້ກັບໄມ້ໃຫ້ໝາກຫລາຍຈຸດປະສົງດ້ວຍກັນ ເຊັ່ນ : ໃຊ້ໃນການບົ່ມໝາກກ້ວຍ, ໝາກລະມຸດ, ໝາກມ່ວງ ເປັນຕົ້ນ .

**6.4.4 ທາດຊະລໍການຈະເລີນເຕີບໂຕຂອງພືດ**

ທາດພວກນີ້ ຈັດໃນພວກຮໍໂມນເຊັ່ນດຽວກັນ ໂດຍມີຄຸນສົມບັດທົ່ວໆໄປຄື ເປັນທາດຄວບຄຸມການຈະເລີນເຕີບໂຕຂອງພືດ ແລະ ຊ່ວຍໃນການອອກດອກຂອງພືດເປັນຕົ້ນ.

**6.4.5 ທາດຢັບຢັ້ງການຈະເລີນເຕີບໂຕຂອງພືດ**

ມີຄຸນສົມບັດ ໃນການຢັບຢັ້ງການຈະເລີນເຕີບໂຕຂອງພືດ ເຮັດໃຫ້ເກີດການລົ່ນຂອງໃບ ແລະ ໝາກ.

## 6.5 ພະຍາດ, ແມງໄມ້ສັດຕູທີ່ມັກທໍາລາຍໄມ້ໃຫ້ໝາກ ແລະ ວິທີປ້ອງກັນກໍາຈັດ

### 6.5.1 ພະຍາດທີ່ທໍາລາຍໄມ້ໃຫ້ໝາກ ແລະ ວິທີປ້ອງກັນກໍາຈັດ

**1. ຫລັກການປ້ອງກັນພະຍາດໄມ້ໃຫ້ໝາກ**

- ການປ້ອງກັນພະຍາດຕ່າງໆ ເຂົ້າສູ່ໝານປູກກ່າວ ຄື : ຕົ້ນໄມ້ໃຫ້ໝາກທີ່ຈະນໍາມາປູກນັ້ນ ຕ້ອງປາສະຈາກພະຍາດເສຍກ່ອນກ່ອນຈະນໍາມາປູກ ຄວນພັກໄວ້ໄລຍະໃດໜຶ່ງເພື່ອກໍາຈັດພະຍາດແລະແມງໄມ້ທີ່ຕິດມາກັບຕົ້ນພັນ ເມື່ອແນ່ໃຈແລ້ວຈຶ່ງນໍາໄປປູກໄດ້.

- ການປັບປຸງດິນປູກ ໃຫ້ຢູ່ໃນສະພາບທີ່ເໝາະສົມຕໍ່ການຈະເລີນເຕີບໂຕຂອງຕົ້ນຄື ການເຮັດໃຫ້ດິນມີຄວາມຜຸພຸ່ຍ ລະບາຍນ້ຳ ແລະ ອາກາດໄດ້ດີ ລວມທັງສະພາບເປັນກົດ ເປັນດ່າງອີກດ້ວຍ .

- ການບຳລຸງຕົ້ນໄມ້ໃຫ້ໝາກ ໃຫ້ສົມບູນແຂງແຮງຢູ່ສະເໝີຈະຊ່ວຍລຸດຜ່ອນອັນຕະລາຍຈາກພະຍາດຕ່າງໆ ການບຳລຸງຕົ້ນດ້ວຍການໃຫ້ນ້ຳ, ໃຫ້ຝຸ່ນຢ່າງຖືກຕ້ອງ ແລະ ພຽງພໍ ການສີດຢາປ້ອງກັນກຳຈັດພະຍາດເປັນຄັ້ງຄາວ ລວມທັ້ງການປະຕິບັດຢ່າງອື່ນເພື່ອເຮັດໃຫ້ຕົ້ນແຂງແຮງເຕັມທີ່ແລະ ອີກປະການໜຶ່ງການຈິ່ງໝາກບໍ່ຄວນໃຫ້ຫລາຍເກີນໄປຈົນເກີນກຳລັງຂອງຕົ້ນເພາະຈະເຮັດໃຫ້ຕົ້ນຊຸດໂຊມເຮັດໃຫ້ພະຍາດເຂົ້າລົບກວນໄດ້ງ່າຍຂື້ນ .

- ຫລີກລ້ຽງການປູກໄມ້ໃຫ້ໝາກໃນບ່ອນທີ່ເຄີຍເປັນພະຍາດຮ້າຍແຮງມາກ່ອນໂດຍສະເພາະພະຍາດທີ່ຢູ່ໃນດິນ ເພາະພະຍາດພວກນີ້ ຈະກຳຈັດຍາກຫາກຮູ້ວ່າບ່ອນໃດເຄີຍເກີດພະຍາດທີ່ຮ້າຍແຮງກໍ່ບໍ່ຄວນປູກໄມ້ໃຫ້ໝາກຊະນິດເກົ່າໃສ່ອີກ ຫລືປູກພວກທີ່ມີຄວາມຕ້ານທານພະຍາດໄດ້ດີກ່ວາ .

- ການປະຕິບັດງານຕ່າງໆ ຄວນເຮັດດ້ວຍຄວາມລະມັດລະວັງ ເຊັ່ນ: ບໍ່ຄວນຫົດນ້ຳໃຫ້ປຽກເກີນໄປຈົນຮາກຟູຂື້ນ, ການຂຸດພວນດິນ, ການກຳຈັດວັດສະພືດ ລະວັງຢ່າໃຫ້ເປັນອັນຕະລາຍຕໍ່ຕົ້ນຫລືເຮັດໃຫ້ຮາກຂາດເກີດບາດແຜທີ່ກິ່ງຫລືຕົ້ນ ເພາະຈະເຮັດໃຫ້ພະຍາດເຂົ້າທຳລາຍທາງບາດແຜໄດ້ ຫາກເກີດມີບາດແຜຄວນຮີບຮັກສາຢ່າປ່ອຍປະໄວ້.

- ຄວນບົວລະບັດຮັກສາໜານປູກຢູ່ສະເໝີຢ່າປະໃຫ້ຮົກເຮື້ອ ເພາະຈະເປັນບ່ອນລີ້ຊ່ອນຂອງພະຍາດໄດ້ຖ້າໜານປູກຮົກເຮື້ອເກີນໄປ ເມື່ອເກີດພະຍາດກໍ່ຈະປ້ອງກັນກຳຈັດໄດ້ຍາກ.

- ຄວນຕັດແຕ່ງໄມ້ໃຫ້ໝາກ ຄວນປະຕິບັດເປັນປະຈຳ ຕາມຄວາມເໝາະສົມ ເພາະຈະເປັນການຊ່ວຍປ້ອງກັນ ແລະ ກຳຈັດພະຍາດໄດ້ເປັນຢ່າງດີ .

- ຄວນກວດກາ ແລະ ບົວລະບັດຮັກສາຕົ້ນໄມ້ຕະຫລອດທັ້ງປີເມື່ອພົບເຫັນອາການຜິດປົກກະຕິກໍ່ຄວນສຶກສາໃຫ້ຖີ່ຖ້ວນວ່າເກີດຈາກອັນໃດແທ້ ແລະ ຮີບແກ້ໄຂຢ່າງໄວ.

- ການປ້ອງກັນກຳຈັດແມງໄມ້ທີ່ເປັນພາຫະນະຂອງພະຍາດ ເນື່ອງຈາກພະຍາດຫລາຍຊະນິດຈະແຜ່ລະບາດໄປບ່ອນອື່ນໆໄດ້ ຕ້ອງມີພວກແມງໄມ້ເປັນຕົວພາໄປ. ດັ່ງນັ້ນ, ຕ້ອງມີການປ້ອງກັນກຳຈັດແມງໄມ້ດັ່ງກ່າວ.

- ການປ້ອງກັນກຳຈັດດ້ວຍສານເຄມີ ຕ້ອງປະຕິບັດໃຫ້ຖືກຕ້ອງສະເໝີຕ້ອງຮູ້ວ່າເປັນພະຍາດອັນໃດແທ້ ແລະ ຈະໃຊ້ຢາອັນໃດຈິ່ງຈະໄດ້ຜົນດີ ຖ້າໃຊ້ບໍ່ຖືກກັບພະຍາດກໍ່ຈະເຮັດໃຫ້ເກີດຜົນບໍ່ດີເທົ່າທີ່ຄວນ ຫລືບໍ່ເກີດຜົນເລີຍ.

## ຕາຕະລາງທີ່ 3. ພະຍາດທີ່ສຳຄັນຂອງໄມ້ໃຫ້ໝາກບາງຊະນິດ ແລະ ການປ້ອງກັນກຳຈັດ

| ລ/ດ | ຊື່ໄມ້ໃຫ້ໝາກ | ຊື່ພະຍາດ | ອາການ | ການປ້ອງກັນກຳຈັດ |
|---|---|---|---|---|
| 1 | ກ້ວຍ | 1. ພະຍາດຕາຍພາຍ | - ເກີດກັບກ້ວຍທີ່ມີອາຍຸຕັ້ງແຕ່ 2-4 ເດືອນຂຶ້ນໄປຫລືໄລຍະເລີ່ມແທງໜໍ່ໃບລຸ່ມຈະເຫລືອງຈາກຂອບໃບເຂົ້າມາຈົນເຫຼືອງໝົດໃບ ໃບຫັກພັບສີເຫຼືອງຫຼືສີນ້ຳຕານຢູ່ຕາມທໍ່ນ້ຳຫລືກາບໃບ. | 1. ຂຸດທຳລາຍຕົ້ນທີ່ເປັນຖິ້ມ.<br>2. ບໍ່ປູກໃນບ່ອນເກົ່າ<br>3. ປ່ອຍນ້ຳຖ້ວມໃຫ້ດິນເພື່ອທຳລາຍເຊື້ອ . |
| | | 2. ພະຍາດແອນແທຣກໂນສ | - ເຮັດໃຫ້ໝາກເໜົ່າ ອາດສະແດງອາການຕັ້ງແຕ່ຢູ່ເທິງຕົ້ນ ຫລືຫັລງຈາກການເກັບກ່ຽວມາແລ້ວເກີດບາດແຜສີດຳໆທີ່ຜິວກ້ວຍແລ້ວລຸກລາມຕິດຕໍ່ກັນຈົນເປັນແຜໃຫຍ່ເຮັດໃຫ້ໝາກເນົ່າ, ຂົ້ນເນົ່າ ໝາກລົ່ນ . | 1. ສີດພົ່ນດ້ວຍຢາປ້ອງກັນກຳຈັດເຊື້ອຣາ ເຊັ່ນ ບີໂນມີລ ຂະນະທີ່ໝາກຍັງນ້ອຍຢູ່<br>2.ເກັບໝາກໃນໄລຍະທີ່ເໝາະສົມ ຢ່າເກັບແກ່ເກີນໄປ<br>3. ເມື່ອເກັບມາແລ້ວໃຫ້ຈຸ່ມນ້ຳຢາຂ້າເຊື້ອກ່ອນບົ່ມຫລືກ່ອນຈຳໜ່າຍເຊັ່ນ : ເບນເລດ ເປັນຕົ້ນ . |
| 2 | ໝາກມີ້ | 1. ພະຍາດໝາກເນົ່າ | ໝາກອ່ອນເປັນຈຸດສີເທົາກ່ອນແລ້ວລະບາດຢ່າງວ່ອງໄວຈົນທົ່ວໝາກ ເຫັນເປັນເ້ັນໄຍສີເທົາຟູທົ່ວໝາກ, ໝາກໃຫຍ່ກໍ່ເປັນໄດ້ເຊັ່ນກັນແຕ່ອາການບໍ່ຄ່ອຍຮຸນແຮງ. | 1. ຢ່າໃຫ້ໝາກເປັນບາດແຜເພາະພະຍາດຈະແຜ່ລະບາດໄດ້ໄວຂຶ້ນ .<br>2. ປ້ອງກັນກຳຈັດເຊື້ອຣາໂດຍຢາ ມາເນບ ສີດພົ່ນທີ່ໝາກອ່ອນປ້ອງກັນໄວ້ກ່ອນ. |
| | | 2. ພະຍາດແອນແທຣກໂນສ | - ໃບເປັນຈຸດກົມໆ ກະຈາຍທົ່ວໄປມີຮູບຮ່າງຂອງແຜບໍ່ແນ່ນອນ ແຜເປັນສີນ້ຳຕານເຂັ້ມຫລືດຳຖ້ເປັນຫລາຍໃບຈະລົ່ນ . | 1. ເກັບກວາດໃບທີ່ລົ່ນເຜົາໄຟຖິ້ມ.<br>2. ຢ່າຫົດນ້ຳໃຫ້ປຽກທັງຕົ້ນຈະເຮັດໃຫ້ພະຍາດລະບາດ.<br>3. ສີດພົ່ນດ້ວຍ ໄດເທນເອັມ 45, ຄູປາວິດ, ແຄບແທນ, ບີໂນມີລ . |
| 3. | ໝາກຊຽບ | 1. ພະຍາດມໍ່າມີຂອງໝາກຊຽບ | ເກີດຈາກເຊື້ອຣາຊະນິດໜຶ່ງ ເກີດກັບໝາກຂອງໝາກຊຽບ ເຮັດໃຫ້ໝາກເປັນສີດຳແຫ້ງ ແຕ່ໝາກບໍ່ລົ່ນ . | 1. ອາດປ້ອງກັນກ່ອນດ້ວຍການສີດພົ່ນຢາປ້ອງກັນກຳຈັດເຊື້ອຣາຕັ້ງແຕ່ໄລຍະໝາກຍັງ |

| | | | | |
|---|---|---|---|---|
| | | | | ອ່ອນ ເຊັ່ນ: ຢາ ຄູປາວິດ, ໄດ ເທນ ເອັມ 45 ເປັນຕົ້ນ. |
| 4 | ໝາກ ມ່ວງ | 1. ພະຍາດແອນ ແທຣກໂນສ. | ເກີດກັບໝາກມ່ວງທຸກຊ່ວງຄື :<br>- ຖ້າເປັນທີ່ດອກ ເຮັດໃຫ້ດອກແຫ້ງລົ່ນ ບໍ່ຕິດໝາກ .<br>- ໝາກອ່ອນເນົ່າດຳແຫ່ວ .<br>- ໝາກແກ່ເກີດບາດແຜເປັນສີດຳບຸ້ມ ເລິກລົງໄປໃນເນື້ອໝາກ<br>- ໃບ ທັງໃບອ່ອນ ແລະ ແກ່ຈະເກີດ ບາດແຜລັກສະນະກົມຫລືເປັນສີ່ລ່ຽມສີ ດຳ ແຜລຸດເປັນຮູ ຖ້າເປັນຫລາຍເຮັດ ໃຫ້ໃບລົ່ນ . | 1. ສີດພົ່ນດ້ວຍ ໄດເທນ ເອັມ 45 , ແຄບແທນ, ບີໂນມີລ, ຄູ ປາວິດ ເປັນຕົ້ນ ເປັນໄລຍະ ຕະຫລອດປີຈະປ້ອງກັນໄດ້ ຫລາຍເນື່ອງຈາກເຊື້ອຣາເປັນ ສາເຫດຂອງພະຍາດສາມາດ ອາໄສຢູ່ໄດ້ກັບທຸກສ່ວນຂອງ ຕົ້ນ . |
| | | 2. ພະຍາດຢາງ ໄຫລ | - ເກີດຢາງໄຫລຕາມກິ່ງແກ່ ຢາງທີ່ ໄຫລອອກມາໃໝ່ໆ ຈະເປັນສີຂຸ່ນຂາວ ແລ້ວແຫ້ງເປັນສີນ້ຳຕານເຂັ້ມ ເປືອກ ບ່ອນທີ່ຢາງໄຫລ ຈະມີຮອຍແຕກ ຖ້າ ຖາກເປືອກໃຕ້ແຜຈະເຫັນສີນ້ຳຕານ ແດງ ຖ້າເປັນຫລາຍກິ່ງຈະແຫ້ງຕາຍ ແລະຕົ້ນຕາຍໄດ້ . | 1. ປ້ອງກັນດ້ວຍການທາຕົ້ນ ຫລືກິ່ງໃຫຍ່ໆ ດ້ວຍຢາກັນຣາ ຫລື ປູນແດງ .<br>2. ບ່ອນທີ່ຊີ້ກັບຮອຍບາດ ແຜ ໃຫ້ຖາກເປືອກອອກແລ້ວ ທາດ້ວຍຢາກັນຣາ ເຊັ່ນ ເບນ ເລດ, ໄດເທນ ເອັມ 45 , ໄດ ຟໍລາເທນ . |
| | | 3.ພະຍາດຣາ ແປ້ງ | - ພົບເຊື້ອຣາເປັນຜົງສີຂາວຄ້າຍກັບ ແປ້ງທີ່ຊໍ່ດອກແລະກິ່ງອ່ອນເຮັດໃຫ້ຊໍ່ ດອກແຫ່ວແຫ້ງ, ລົ່ນຖ້າເປັນຢູ່ໝາກ ເຮັດໝາກລົ່ນຫລືເກີດມີຮອຍທີ່ໝາກ . | 1. ສີດພົ່ນດ້ວຍມາດຜົງຊະ ນິດລະລາຍນ້ຳໄດ້ຕັ້ງແຕ່ໄລ ຍະແທງຊໍ່ດອກ .<br>2. ການສີດພົ່ນຢາປ້ອງກັນ ພະຍາດແອນແທຣກໂນສ ຈະຊ່ວຍປ້ອງກັນພະຍາດ ນີ້ໄດ້. |
| | | 4. ພະຍາດຣາ ດຳ | - ເຊື້ອຣາເປັນສີດຳໆ ປົກຄຸມຊໍ່ ດອກ ແລະໃບຈົນດຳ ໂຕຣາເອງບໍ່ໄດ້ທຳ ລາຍແຕ່ປົກຄຸມເທົ່ານັ້ນ ຖ້າເກີດຫລາຍ ຈະເຮັດໃຫ້ການສັງເຄາະແສງໜ້ອຍລົງ ແລະເຮັດໃຫ້ເປື້ອນເປິ . | 1. ເຊື້ອຣາເຕີບໂຕດ້ວຍ ການອາໄສນ້ຳຫວານຈາກ ດອກໄມ້ແລະສິ່ງທີ່ແມງຂັບ ຖ່າຍອອກມາ ຈຶ່ງປ້ອງກັນກຳ ຈັດໂດຍການສີດພົ່ນຢາຂ້າ ແມງດ້ວຍ .<br>2. ພວກຢາທີ່ສີດປ້ອງກັນ ພະຍາດແອນແທຣກໂນສ ຈະ ທຳລາຍເຊື້ອຣາດຳໄດ້ . |

| | | | | |
|---|---|---|---|---|
| 5. | ໝາກຫຸ່ງ | 1. ພະຍາດ ໃບດ່າງ ເຫລືອງ . | - ເກີດໄດ້ທັງຕົ້ນອ່ອນະແລະ ແກ່ໂດຍໃບຈະມີອາການດ່າງ ເຫລືອງເພີ່ມຂຶ້ນເລື້ອຍໆໃບທີ່ອອກມາ ໃໝ່ຈະມີຂະໜາດນ້ອຍລົງເລື້ອຍໆ, ຍອດນ້ອຍລົງມີອາການດ່າງເຫລືອງ ບິດບ້ຽວຊີ້ຕັ້ງ ,ໝາກມີຂະໜາດນ້ອຍ ບານສຸກ ແລະ ແຂງມີລາຍກົມໆ ທີ່ ໝາກ . | 1. ເພັຍອ່ອນເປັນຕົວນຳເຊື້ອ ຄວນກຳຈັດເພັຍອ່ອນ .<br>2. ຕັດຕົ້ນທີ່ເປັນຖິ້ມ . |
| | | 2. ພະຍາດຮາກ ເໜົ່າຕົ້ນເໜົ່າ | - ຕົ້ນອ່ອນ ຫລືຕົ້ນກ້າຈະເປັນພະຍາດ ນີ້ໄດ້ຮຸນແຮງກ່ວາຕົ້ນແກ່ ຖ້າເປັນໃນ ຕົ້ນກ້າໃບຈະເຫລືອງ, ໃບລົ່ນ, ຕົ້ນບໍ່ ເຕີບໂຕ, ຮາກເນົ່າ ບໍລິເວນໃກ້ໆກັບ ຕົ້ນຕິດຜິວດິນ, ຕົ້ນຫັກພັບລົງແຫ້ງ ຕາຍຈົນເຫລືອແຕ່ຍອດເທິງສຸດ ແລະ ຍືນຕົ້ນຕາຍໃນທີ່ສຸດ . | 1 ດິນທີ່ຈະໃຊ້ກ້າເບ້ຍຄວນ ປາສະຈາກເຊື້ອ .<br>2. ຫລີກລ້ຽງປູກໃນບ່ອນທີ່ ເຄີຍລະບາດພະຍາດນີ້ມາ ກ່ອນ ເພາະເປັນພະຍາດທີ່ຢູ່ ໃນດິນປ່ອງກັນຍາກ. |
| 6. | ໝາກລຳ ໃຍ | 1. ພະຍາດ ຍອດໄມ້ ຍູກວາດ | - ເປັນພະຍາດທີ່ຮ້າຍແຮງແຕ່ບໍ່ພົບ ເຫັນຫລາຍ ອາການຂອງພະຍາດນີ້ຄື ໃບອ່ອນຍອດອ່ອນທີ່ແຕກໃນນັ້ນຈະ ຮຽວນ້ອຍ, ຂໍ້ປ້ອງຖີ່ສັ້ນ ເຮັດໃຫ້ຍອດ ອັດຕົວກັນແໜ້ນເໝືອນໄມ້ຍູກວາດ ຍອດທີ່ຈະບໍ່ອອກດອກ . | 1. ພະຍາດນີ້ເກີດຈາກເຊື້ອ ໄວຣັດໂດຍມີແມງເປັນຕົວ ນຳມາຖ້າພົບອາການດັ່ງກ່າວ ໃຫ້ຕັດກິ່ງທີ່ເປັນເຜົາໄຟຖິ້ມ. |
| 7 | ໝາກໄມ້ ຕະກຸນສົ້ມ | 1. ພະຍາດກຣີນ ນິງ (ພະຍາດໃບ ເຫຼືອງຕົ້ນຊຸດ ໂຊມ ) | - ໃບ, ຍອດອ່ອນ ມີຂະໜາດ ນ້ອຍ,ປາຍໃບຮຽວແຫລມຊີ້ຂຶ້ນ ເກີດ ອາການດ່າງເຫລືອງທີ່ໃບ ໝາກທີ່ແກ່ມີ ສີຂຽວດ່າງສະລັບເຫລືອງທົ່ວໝາກ, ຍອດແຫ້ງຕາຍເທື່ອລະກິ່ງຈົນໃບລົ່ນ ຍືນຕົ້ນຕາຍ .ສົ້ມຂຽວຫວານຈະມັກ ເປັນພະຍາດນີ້ . | 1. ໃຊ້ກິ່ງພັນທີ່ປອດພະຍາດ, ປ້ອງກັນພະຍາດແຕ່ທຳອິດ .<br>2. ແມງທີ່ເປັນຕົວນຳເຊື້ອຄື ເພັຍກະໂດດສົ້ມ.<br>3. ຂຸດຕົ້ນທີ່ເປັນເຜົາໄຟຖິ້ມ . |
| | | 2. ພະຍາດ ຕຣິດເຕຊາ (ພະຍາດຕົ້ນຊຸດ ໂຊມ ) | - ໃບເຫລືອງຊີດ ຄ້າຍຂາດທາດອາ ຫານ ສຸດທ້າຍໃບຈະເຫລືອງແຫ່ວໃບ ລົ່ນຊຸດໂຊມຢ່າງໄວ ຖ້າດຶງເປືອກໄມ້ ອອກຈະເຫັນຮູນ້ອຍໆທີ່ເນື້ອໄມ້ຫລວງ ຫລາຍຫລືເປັນຮ່ອງຍາວເປັນຂີດໆທີ່ ເນື້ອໄມ້ . ສົ້ມຂຽວຫວານຈະມັກເປັນ ສ່ວນສົ້ມໂອ ເປັນໜ້ອຍ . | 1. ໃຊ້ກິ່ງພັນທີ່ປອດພະຍາດ, ປ້ອງກັນພະຍາດແຕ່ທຳອິດ .<br>2. ແມງທີ່ເປັນຕົວນຳເຊື້ອຄື ເພັຍກະໂດດສົ້ມ.<br>3. ຂຸດຕົ້ນທີ່ເປັນເຜົາໄຟຖິ້ມ . |

| | | | | |
|---|---|---|---|---|
| | | 3. ພະຍາດແຄງເກີ (ພະຍາດຂີ້ທູດ) | - ເກີດບາດແຜທີ່ສ່ວນຕ່າງໆ ຂອງຕົ້ນ ແຜແກ່ເປັນສີນ້ຳຕານ ອາດລຸກລາມໄປເຊື່ອມເຂົ້າກັນເປັນແຜໃຫຍ່ ຖ້າເປັນຫລາຍໃບລົ່ນໄດ້ ກິ່ງແຫ້ງຕາຍ ເກີດມີຮອຍຕຳນິທີ່ແຜ. ມັກເກີດກັບສົ້ມເກືອບທຸກຊະນິດໂດຍສະເພາະໝາກນາວຈະເປັນຫລາຍທີ່ສຸດ | 1. ກິ່ງພັນຄວນປາສະຈາກພະຍາດ ໂດຍການແຊ່ນ້ຳຢາກ່ອນນຳໄປປູກ .<br>2. ຕັດສ່ວນທີ່ເປັນຖິ້ມ .<br>3. ກຳຈັດແມງພາຫະນະ ເຊັ່ນ ແມງກັດໃບ, ແມງຊອນໃບ ເປັນຕົ້ນ .<br>4. ຢາທີ່ໃຊ້ຄືພວກ ປະຕິຊີວະນະ ເຊັ່ນ : ສະເຕັບໂຕໄມຊິນ ໃນຮູບຂອງເກືອຊັລເຟດ . |
| | | 4. ພະຍາດຮາກເໜົ່າຫລືຕົ້ນເໜົ່າ | - ເມື່ອຂຸດເບິ່ງຮາກ ຈະພົບຮາກຝອຍເໜົ່າລຸກລາມເຂົ້າໂຄນຕົ້ນ ເປືອກຮາກເໜົ່າເປັນສີນ້ຳຕານແຕ່ບໍ່ເປື່ອຍຍຸ່ຍ ດຶງອອກເປັນເສັ້ນໄດ້ ເນື້ອໄມ້ຂອງຮາກຍັງຂາວຢູ່ ( ຖ້າຮາກເນົ່າຈາກນ້ຳຖ້ວມເປືອກຂອງຮາກຈະເນົ່າແລະເປື່ອຍເນື້ອຂອງໄມ້ເປັນສີນ້ຳຕານ ) ພະຍາດນີ້ອາດເກີດຂຶ້ນທີ່ດ້ານໂຄນຕົ້ນຕິດກັບດິນ ໂດຍບໍ່ເກີດທີ່ຮາກກໍ່ໄດ້ ຖ້າບາດແຜຍາວໄປອ້ອມຕົ້ນ ຕົ້ນຈະຕາຍ | 1. ຢ່າປ່ອຍໃຫ້ນ້ຳຖ້ວມຂັງ<br>2. ປັບປຸງດິນໃຫ້ມີຄວາມຜຸພຸ່ຍຢູ່ສະເໝີ<br>3. ບຳລຸງຕົ້ນໃຫ້ສົມບູນແຂງແຮງ .<br>4. ທາຢາທີ່ໂຄນຕົ້ນໄວ້ກ່ອນດ້ວຍປູນແດງ .<br>5. ບາດແຜທີ່ໂຄນຕົ້ນປ້ອງກັນດ້ວຍປູນແດງ .<br>6. ຂຸດຕົ້ນທີ່ຊຸດໂຊມຫລາຍນັ້ນເຜົາໄຟຖິ້ມ . |
| | | 5. ອາການຜິດປົກກະຕິຈາກການຂາດທາດອາຫານ | - ຕົ້ນສົ້ມມັກຈະສະແດງອາການຂາດທາດອາຫານໃຫ້ເຫັນຢູ່ສະເໝີ ເຊັ່ນ : ຂາດທາດສັງກະສີ,ແມງການີສ, ທາດເຫລັກ, ແມກນີຊຽມ ເປັນຕົ້ນ ເຮັດໃຫ້ເກີດອາການໃບດ່າງຕົ້ນບໍ່ຈະເລີນເຕີບໂຕຕິດໝາກໜ້ອຍ ໝາກມີຂະໜາດນ້ອຍແລະ ຂາດຄຸນນະພາບ . | - ດິນທີ່ຂາດທາດອາຫານ ມັກເປັນດິນກົດຫລືດ່າງເກີນໄປຈຶ່ງຕ້ອງປັບສະພາບຂອງດິນໃຫ້ເໝາະສົມລວມທັງການໃສ່ຝຸ່ນອິນຊີ ຈະຊ່ວຍໃນການແກ້ໄຂບັນຫາການຂາດທາດອາຫານເຫລົ່ານີ້ໄດ້ |
| 8 | ໝາກມັດ | 1. ພະຍາດຮາກເນົ່າ ຕົ້ນເນົ່າ | ໃບອອກສີແດງໆ ເຫລືອງໆ ກົກໃບເນົ່າດຶງຫລຸດອອກ ຫລືຫັກພັບລົງ ຖ້າເຊື້ອພະຍາດລຸກລາມໄປທີ່ຮາກກໍ່ຈະເຮັດໃຫ້ຮາກເປື່ອຍເປັນສີດຳຕົ້ນຕາຍໄປໃນທີ່ສຸດ | 1. ຢ່າປູກໃນຊ່ວງທີ່ມີຝົນຕົກໜັກ, ໜໍ່ທີ່ມາປູກຄວນລອກກາບລຸ່ມໆອອກໃຫ້ເຫັນຮາກ<br>2. ຂວ້ຳໜໍ່ຕາກແດດໄວ້ໄລຍະໜຶ່ງ ເພື່ອທຳລາຍເຊື້ອພະຍາດຫລືຈຸ່ມໜໍ່ໃນນ້ຳຢາກັນຮາ ເຊັ່ນ : ໄດຟໍລາເທນ, ແຄບແທນ ເປັນຕົ້ນ |

| | | | | |
|---|---|---|---|---|
| | | 2. ພະຍາດໝາກແຂງ . | ເນື້ອໝາກມີລັກສະນະແຂງ ພ່ອຍ ຣົດຊາດຈືດຊືດ, ເນື້ອມີສີນ້ຳຕານອ່ອນຫລືເປັນສີນ້ຳຕານເຂັ້ມເກືອບດຳ . | ຍັງບໍ່ຮູ້ສາເຫດແນ່ນອນ ຈະມັກເກີດອາການນີ້ຫລາຍຖ້າອາກາດຮ້ອນ ແລະ ຊຸ່ມ ການບຳລຸງຕົ້ນໃຫ້ແຂງແຮງຈະລຸດຜ່ອນອາການຂອງພະຍາດນີ້ດ້ວຍ . |

### 6.5.2 ແມງສັດຕູໄມ້ໃຫ້ໝາກ ແລະ ການປ້ອງກັນກຳຈັດ

**1. ຫລັກການປ້ອງກັນກຳຈັດແມງສັດຕູໄມ້ໃຫ້ໝາກ** :

- ໝັ່ນກວດກາເບິ່ງແຍງສວນຢູ່ສະເໝີ ຖ້າພົບເຫັນມີແມງໄມ້ລະບາດໃຫ້ຮີບປ້ອງກັນກຳຈັດ ຢ່າປ່ອຍຖິ້ມໄວ້ ລວມທັງການຈົດບັນທຶກຊ່ວງການລະບາດຂອງແມງໄມ້ຊະນິດຕ່າງໆ ເພື່ອຈະໄດ້ປ້ອງກັນໄດ້ທ່ວງທັນ ເຊັ່ນ : ເພ້ຍຈັກຈັ່ນຊໍ່ໝາກມ່ວງ ຈະລະບາດຫລາຍໃນຊ່ວງທີ່ແທງຊໍ່ດອກ,ໜອນຊອນໃບສົ້ມຈະລະບາດຫລາຍໃນຊ່ວງທີ່ໃບສົ້ມຍັງອ່ອນຢູ່ດັ່ງນີ້ເປັນຕົ້ນ.

- ການປະເມີນ ຄວາມເສຍຫາຍຈາກການທຳລາຍຂອງແມງໄມ້ ຫາກຍັງບໍ່ເຖິງຈຸດທີ່ຈະທຳຄວາມເສຍຫາຍຫລາຍ ກໍບໍ່ຄວນໃຊ້ສານເຄມີ ເພາະຈະບໍ່ຄຸ້ມຄ່າ ແລະ ຍັງເຮັດໃຫ້ເກີດມີຜົນເສຍຕາມມາດ້ວຍ. ຄວນໃຊ້ວິທີການຕັດແຕ່ງກິ່ງຖິ້ມ, ການໄລ່, ການລໍ້ແມງໄມ້ມາທຳລາຍດັ່ງນີ້ເປັນຕົ້ນ .

- ການປ້ອງກັນກຳຈັດພວກແມງທີ່ເປັນພາຫະນະ ເຊັ່ນ : ມົດ ຈະເປັນຕົວນຳພວກເພ້ຍແປ້ງ ເພ້ຍຫອຍ ໄປຍັງບ່ອນຕ່າງໆ ຂະນະດຽວກັນກໍ່ອາໄສສິ່ງທີ່ພວກເພ້ຍຂັບຖ່າຍອອກມາເປັນອາຫານ ດັ່ງນັ້ນ ການປ້ອງກັນກຳຈັດແມງສັດຕູ ຈຶ່ງຕ້ອງຄຳນຶງເຖິງພວກແມງທີ່ເປັນພາຫະນະດ້ວຍ .

- ການທຳຄວາມສະອາດໜານປູກ ເພື່ອບໍ່ໃຫ້ເປັນບ່ອນອາໄສຂອງແມງໄມ້ລວມທັງການທຳຄວາມສະອາດບໍລິເວນອ້ອມຮອບໜານປູກດ້ວຍ ກຳຈັດວັດສະພືດ ແລະພືດອາໄສອອກໃຫ້ໝົດ.ນອກນີ້ ພວກໃບໄມ້ທີ່ລົ່ນຕາມກ້ອງຕົ້ນ ກໍເກັບກວາດເຜົາໄຟຖິ້ມ.

- ການກຳຈັດຜົນຜະລິດທີ່ເສຍຫາຍ : ພວກໝາກໄມ້ທີ່ເໜົ່າລົ່ນຢູ່ຕາມກ້ອງຕົ້ນ ໃຫ້ເກັບລວມກັນເອົາໄປຝັງດິນ ເພາະອາດມີໄຂ່ ຫລືໜອນຂອງແມງໄມ້ຢູ່ .

2. ການປ້ອງກັນ ແລະ ກຳຈັດແມງໄມ້ : ຄວນໃຊ້ຫລາຍວິທີຮ່ວມກັນ ເຊັ່ນ :

- ການຈັບມາທຳລາຍ : ໃຊ້ມືຈັບພວກໜອນຕ່າງໆ, ໃຊ້ຫວິງຕັກແມງພວກແມງກະເບື້ອ, ມວນ ລຳໄຍເປັນຕົ້ນ ຫລືຣິນຕົ້ນໃຫ້ແມງລົ່ນລົງ ເຊັ່ນ ແມງຄ່ອມທອງ ( ຊ້າງຄ່ອມ ).

- ການລໍ້ໃຫ້ມາວາງໄຂ່ : ກອງຝຸ່ນຄອກຫລືກອງຂີ້ເຫຍື້ອໄວ້ເພື່ອລໍ້ໃຫ້ແມງປີກແຂງ ເຊັ່ນ : ດ້ວງແຮດ, ດ້ວງກຸຫລາບ, ດ້ວງໄຟ ໃຫ້ມາວາງໄຂ່ແລ້ວທຳລາຍຖິ້ມ .

- ການລໍ້ໂຕແກ່ມາທຳລາຍ ໃຊ້ເມທທິລຢູຈີນອລ ລໍ້ແມງວັນທອງໂຕຜູ້ມາທຳລາຍ, ການໃຊ້ໝາກໄມ້ສຸກລໍ້ແມງກະເບື້ອມວນຫວານໃຫ້ມາຕິດກັບ ຫລືປະສົມເຫຍື່ອພິດໃນອາຫານທີ່ໃຊ້ລໍ້ ເມື່ອແມງມາກິນກໍ່ຈະຕາຍໄປ .

- ການໃຊ້ແສງໄຟລໍ້ໂຕແກ່ຂອງແມງໃຫ້ມາຫລົ້ນໄຟແລ້ວຕົກລົງໄປໃນນ້ຳຫລືນ້ຳມັນທີ່ວາງໄວ້ ສຳລັບແສງໄຟ ແສງສະຫວ່າງຕ່າງໆ ນັ້ນສາມາດລໍ້ແມງໄດ້ຫລາຍຊະນິດ.

- ການໄລ່ໃຫ້ໜີໄປ : ໂດຍການຈູດໄຟສຸມຄວັນ,ການເຜົາສຢາງລົດເພື່ອໃຫ້ເກີດຄວັນເປັນຕົ້ນ .

- ການໃຊ້ນ້ຳສີດພົ່ນແຮງໆ ເພື່ອເຮັດໃຫ້ແມງສະເດັນອອກໄປໃຊ້ໄດ້ດີໃນພວກທີ່ບໍ່ຄ່ອຍບິນເຊັ່ນ : ເພ້ຍໄຟ, ເພ້ຍອ່ອນ ແລະ ເພ້ຍແປ້ງ ເປັນຕົ້ນ .

- ການປ້ອງກັນໂດຍການຫໍ່ໝາກ : ເຊັ່ນ ຫໍ່ໝາກກຽງ, ໝາກລຳໄຍ, ລີ້ນຈີ່, ໝາກມ່ວງ. ການຫໍ່ໝາກເພື່ອເປັນການປ້ອງກັນແມງແລ້ວຍັງເຮັດໃຫ້ໝາກມີຄວາມສວຍງາມອີກດ້ວຍ .

- ການປ້ອງກັນດ້ວຍຊີວະວິທີ : ໂດຍການບໍ່ທຳລາຍໂຕຫ້ຳ ແລະໂຕບຽນເຊິ່ງເປັນສັດຕູທຳມະຊາດຂອງພວກທີ່ທຳລາຍພືດ ແມງເຫລົ່ານັ້ນໄດ້ແກ່ ແມງປໍ, ແມງຊ້າງ, ດ້ວງເຕົ່າລາຍ, ແມງວັນຫົວບຸບ, ແມງວັນກົ້ນຂົນ, ຕໍ່, ແຕນ, ແຕນບຽນ ແມງພວກນີ້ຈະຄອຍຄວບຄຸມແມງສັດຕູຕ່າງໆ ບໍ່ໃຫ້ມີຫລສາຍເກີນໄປ

- ການໃຊ້ສານເຄມີຢ່າງມີປະສິດທິພາບ ໂດຍການໃຊ້ສານເຄມີໃຫ້ຖືກກັບຊະນິດຂອງແມງສັດຕູຫາກບໍ່ກົງກັນກໍ່ຈະເຮັດໃຫ້ເກີດຜົນໜ້ອຍ ຫລືບໍ່ເກີດເລີຍ . ການໃຊ້ສານເຄມີໃນຊ່ວງທີ່ແມງສັດຕູອ່ອນແອທີ່ສຸດເຊັ່ນ ຫລັງຈາກຟັກອອກມາຈາກໄຂ່ໃໝ່ໆ ຫລືຍັງເປັນຕົວອອ່ນຢູ່ຈະໄດ້ຜົນກ່ວາ ແລະ ການໃຊ້ຢາປະສົມລົງໃນຢາຂ້າແມງເພື່ອໃຫ້ຕິດໃບຫລາຍຂຶ້ນ . ນອກນີ້ການໃຊ້ສານເຄມີຍັງຕ້ອງລະມັດລະວັງໃນເລື່ອງຄວາມປອດໄພຂອງຜູ້ໃຊ້ ແລະ ຜູ້ບໍລິໂພກອີກດ້ວຍ .

- ການປ້ອງກັນກຳຈັດແມງສັດຕູຈຳເປັນຕ້ອງຮ່ວມມືກັນລະຫວ່າງຜູ້ປູກໄມ້ໃຫ້ໝາກດ້ວຍກັນ ເຊັ່ນ : ຊ່ວຍກຳຈັດຫຍ້າແລະ ແມງທີ່ຢູ່ຮອບໆ ໜານປູກ ການຊ່ວຍກັນໃຊ້ເຄື່ອງດັກຈັບແມງ , ເຄື່ອງລໍ້ແມງ ຕະຫລອດຈົນການສີດພົ່ນຢາຄວນເຮັດພ້ອມກັນເປັນຕົ້ນ ເຊິ່ງຈະໄດ້ຜົນດີຂຶ້ນ ຫາກຕ່າງຄົນຕ່າງເຮັດບໍ່ພ້ອມກັນ ຈະເຮັດໃຫ້ແມງສັດຕູຄື້ອນຍ້າຍໄປມາເຮັດໃຫ້ການກຳຈັດບໍ່ໄດ້ຜົນເຕັມທີ່ .

# ຕາຕະລາງທີ່ 4. ແມງສັດຕູໄມ້ໃຫ້ໝາກບາງຊະນິດ ແລະ ການປ້ອງກັນກຳຈັດ

| ລ/ດ | ຊື່ໄມ້ໃຫ້ໝາກ | ຊື່ພະຍາດ | ລັກສະນະອາການ | ການປ້ອງກັນກຳຈັດ |
|---|---|---|---|---|
| 1. | ໝາກກ້ວຍ | 1.ດ້ວງງວງເຈາະລຳຕົ້ນ ແລະດ້ວງງວງເຈາະເຫງົ້າກ້ວຍ. | - ເປັນຕົວດ້ວງປີກແຂງ ຕົວເຕັມໄວຈະເຈາະເຂົ້າເຫງົ້າແລະຕົ້ນເຮັດໃຫ້ອາຫານທີ່ສົ່ງໄປສ່ວນຍອດບໍ່ສະດວກເຮັດໃຫ້ຕົ້ນເຕີບໂຕຊ້າຜົນຜະລິດລຸດລົງຖ້າເປັນຫລາຍອາດຕາຍໄດ້ . . | 1. ບໍ່ຄວນປູກໃສ່ບ່ອນທີ່ເຄີຍເປັນ. 2.ທຳຄວາມສະອາດໜໍ່ກ້ວຍກ່ອນປູກ ຫລືແຊ່ໃນນ້ຳຢາຂ້າແມງເຊັ່ນ : ດີລດຣິນ 1 ຄືນກ່ອນປູກ . 3.ໃຊ້ຢາຂ້າແມງສີດພົ່ນຕາມກາບໃບ ແລະ ຮວາດອ້ອມຕົ້ນປ້ອງກັນການມາວາງໄຂ່ . |
| | | 2. ບົ້ງມ້ວນໃບຕອງ | - ໂຕບົ້ງມີຂະໜາດໃຫຍ່ ມີຝຸ່ນຜົງເປັນສີຂາວຫໍ່ຫຸ້ມໂຕ ກັດກິນໃບຕອງແລ້ວມ້ວນໃບຕອງຫໍ່ຫຸ້ມໂຕໄວ້ | ເກັບໃບຕອງທີ່ມ້ວນນັ້ນຝັງຫລືເຜົາໄຟ ສີດພົ່ນດ້ວຍສານເຄມີ ເຊັ່ນ ດີລດຣິນ |
| 2. | ໝາກມີ້ | 1. ບົ້ງຊອນລຳຕົ້ນ | -ໂຕບົ້ງເຈາະເຂົ້າໄປໃນເນື້ອໝາກເຮັດໃຫ້ບ່ອນທີ່ເຈາະເປັນບາດແຜແຫ້ງບິດບ້ຽວເປັນແປ້ວ . | 1. ສີດພົ່ນດ້ວຍຢາຂ້າແມງໃນຂະນະທີ່ໝາກອ່ອນປ້ອງກັນການວາງໄຂ່. 2. ແຍກໝາກຢ່າໃຫ້ຕິດກັນ ຫລືຕິດກັບລຳຕົ້ນ ເຊັ່ນ : ເອົາໄມ້ວາງຂັ້ນ . 3. ຖ້າພົບຫລາຍຄວນຫໍ່ດ້ວຍເຈ້ຍໜັງສືພິມຕັ້ງແຕ່ໝາກຍັງນ້ອຍຢູ່.. |
| | | 2. ບົ້ງເຈາະໝາກ. | - ໂຕບົ້ງເຈາະເຂົ້າໄປໃນຕົ້ນ ຫຼືກິ່ງໃຫຍ່ໆ ເບິ່ງເຫັນຢາງຂາວໆໄຫລອອກມາຕາມຮູທີ່ບົ້ງເຈາະ . | 1. ຖ້າເຈາະເຂົ້າໃນແລ້ວໃຫ້ໃຊ້ເຫລັກແຫລມແທງເຂົ້າໃນຮູ ຫລືໃຊ້ຢາຂ້າແມງສີດອັດເຂົ້າໃນຮູແລ້ວອັດປາກຮູດ້ວຍດິນນ້ຳມັນ . 2. ສີດຢາຂ້າແມງຕາມໂຄນຕົ້ນແລະກິ່ງໃຫຍ່ຫລືໃຊ້ປູນຂາວທາປ້ອງກັນໄວ້ກ່ອນ |

| | | | | |
|---|---|---|---|---|
| 3. | ໝາກຊຽບ | 1. ບົ້ງກິນໃບອ່ອນ ດອກອ່ອນ. | - ເປັນບົ້ງແມງກະເບື້ອ ມັກລະບາດໃນຊ່ວງທີ່ໝາກຊຽບກຳລັງແຕກໃບອ່ອນ ໂຕບົ້ງທີ່ກັດກິນໃບອ່ອນ, ດອກອ່ອນ ບາງຄັ້ງກໍ່ເຮັດໃຫ້ໃບລົ່ນທັງຕົ້ນ. | 1 ສີດພົ່ນດ້ວຍຢາຂ້າ ແມງເຊັ່ນ : ພາຣາໄທອອນ, ເຊຟວິນ ຊ່ວງແຕກໃບອ່ອນເມື່ອໃບແກ່ແລ້ວຈະໝົດບັນຫາ . |
| | | 2.ເພັຍອ່ອນ, ເພັຍແປ້ງ. | - ທຳລາຍໂດຍການດູດກິນນ້ຳລ້ຽງຈາກໃບ, ໝາກ ເຮັດໃຫຕົ້ນຊຸດໂຊມພາໃຫ້ຣາດຳປົກຄຸມເປັນຮອຍຕິທີໝາກ. | 1 ກຳຈັດມົດທີ່ເປັນພາຫະນະນຳແມງພວກນີ້ມາ<br>2 ຊີດນ້ຳແຮງໆໃຫ້ແມງສະເດັນອອກໄປ<br>3 ສີດພົ່ນດ້ວຍຢາຂ້າແມງເຊັ່ນ : ໄດອາຊິນອນ . |
| | | 3. ແມງວັນທອງ. | - ໂຕແມງວັນທອງຈະໃຊ້ກົ້ນແທງເຂົ້າທີ່ໝາກແລ້ວວາງໄຂ່ໂຕບົ້ງທີ່ຟັກຈາກໄຂ່ຈະກັດກິນຢູ່ພາຍໃນໝາກ ເຮັດໃຫ້ໝາກເໜົ່າແລະລົ່ນ . | 1. ເກັບໝາກທີ່ລົ່ນໄປຝັງເລິກໆ .<br>2. ຫໍ່ໝາກປ້ອງກັນແມງວັນທອງ . |
| 4. | ໝາກມ່ວງ | 1.ເພັຍຈັກຈັ່ນໝາກມ່ວງ. | - ມັກລະບາດຫລາຍໃນຊ່ວງທີ່ເລີ່ມແທງຊໍ່ທັງໂຕອ່ອນ ແລະ ຕົວເຕັມໄວດູດກິນນ້ຳລ້ຽງຈາກຊໍ່ດອກເຮັດໃຫ້ດອກ ໝາກອ່ອນລົ່ນແລະ ໂຕແມງເອງຍັງຂັບມູນອອກມາເປັນອາຫານຂອງຣາດຳເຮັດໃຫ້ຣາດຳເຕີບໂຕພາໃຫ້ຊໍ່ດອກແລະໃບດຳ . | 1. ການຂັບໄລ່ແມງໂດຍການສຸມຄວັນໄຟທີ່ກ້ອງຕົ້ນ.<br>2. ສີດຢາກຳຈັດຕັ້ງແຕ່ໄລຍະຕົວອ່ອນຈະກຳຈັດໄດ້ງ່າຍ ຢາທີ່ໃຊ້ຄື: ເອນດຣິນ, ມາລາໄທອອນ ເປັນຕົ້ນ. |
| | | 2. ບົ້ງກະທູ້ດອກ. | - ໂຕບົ້ງສີນ້ຳຕານຍາວປະມານ 2,5 ຊັງຕີແມັດ ສີເຫລືອງປົນນ້ຳຕານ ໂຕອ້ວນສັ້ນໂຕບົ້ງກັດກິນຊໍ່ດອກ ແລ້ວເຮັດຮັງຍາວທີ່ຊໍ່ດອກໂຕໜອນຢູ່ທາງໃນແລ່ນໄປມາໃນຮັງ | 1. ຈັບຕົວມາທຳລາຍ<br>2. ໃຊ້ໄຟລໂຕແມ່ແມງມາຫລົ້ນໄຟ<br>3. ຢາທີ່ໃຊ້ໄດ້ດີເຊັ່ນ : ພາລາໄທອອນ, ເອນດຣິນ ເປັນຕົ້ນ . |

| | | | | |
|---|---|---|---|---|
| | | 3. ເພ້ຍໄຟໝາກມ່ວງ | ໂຕສີເຫລືອງມີຂະໜາດ 2-3 ມີລີແມັດ ດູດກິນນ້ຳລ້ຽງທີ່ໃບອ່ອນ, ຍອດອ່ນ ແລະທີ່ສຳຄັນຄືທຳລາຍຕາດອກ, ຕາໃບ ແລະ ຊໍ່ດອກເຮັດໃຫ້ດອກລົ່ນບໍ່ຕິດໝາກຫລືຕິດ-ໜ້ອຍໝາກລົ່ນໄດ້ . | 1. ລະບາດໃນຊ່ວງອາກາດຮ້ອນແລະແລ້ງ ຖ້າພົບໜ້ອຍຄວນຕັດຍອດທີ່ເປັນເພຢາໄຟຖິ້ມ .<br>2. ສີດພົ່ນດ້ວຍ ໄດເມທໂທເອທ, ມາລາໄທອອນ, ເຊຟວິນ ເປັນຕົ້ນ . |
| | | 4. ເພ້ຍໄຟໝາກມ່ວງ | - ບົ້ງແມງກະເບື້ອຫລາຍຊະນິດທຳລາຍໃບມ່ວງ ແລະ ສ່ວນຫລາຍຈະທຳລາຍໃບອ່ອນກ່ວາໃບແກ່ເຊັ່ນບົ້ງຫໍ່ໃບກັດກິນໃບອ່ອນແລ້ວຫໍ່ໃບໃຫ້ຕິດກັນ . ( ບົ້ງຫານກິນໃບເຮັດໃຫ້ໃບແວ່ງ,ບົ້ງຂີນແຜງ ກປົດກິນໃບ | ຖ້າພົບຫລາຍສີດພົ່ນດ້ວຍຢາເຊຟວິນເປັນຕົ້ນ |
| 5. | ໝາກຫຸ່ງ | 1. ເພ້ຍຫອຍ | - ເປັນແມງຂະໜາດນ້ອຍບໍ່ຄ່ອຍເຄື່ອນຍ້າຍ ດູດກິນນ້ຳລ້ຽງຈາກສ່ວນຕ່າງໆ ເຊັ່ນ :ໝາກ,ລຳຕົ້ນ ແລະກ້ານໃບ . | 1. ຖ້າເປັນຫລາຍຄວນຕັດຕົ້ນ ຫລືສ່ວນທີ່ເປັນເຜົາໄຟຖິ້ມ .<br>ຢາຂ້າແມງທີ່ໃຊ້ໄດ້ຜົນດີເຊັ່ນ: ມາລາໄທອອນ, ໄດອາຊິນອນ . |
| | | 2.ເພ້ຍອ່ອນ | - ມັກດູດກິນນ້ຳລ້ຽງຈາກສ່ວນຕ່າງໆຂອງຕົ້ນເຊັ່ນ : ໃບອ່ອນ, ຍອດອ່ອນ ນອກນີ້ຍັງອາດນຳພະຍາດສູ່ຕົ້ນດ້ວຍເຮັດໃຫ້ຕົ້ນເກີດພະຍາດດ່າງເຫລືອງ . | 1. ໃຊ້ນ້ຳຊີດໃສ່ແຮງໆໃຫ້ເພ້ຍຫລຸດອອກໄປ .<br>2. ທຳລາຍມົດ ເຊິ່ງເປັນຕົວນຳເພ້ຍແປ້ງມາ .<br>3. ຢາທີ່ໃຊ້ໄດ້ດີເຊັ່ນ: ມາລາໄທອອນ, ໄດອາຊິນອນ ເປັນຕົ້ນ . |
| | | 3.ເພ້ຍແປ້ງ | - ເປັນແມງຂະໜາດນ້ອຍໂຕມີສີຂາວຄ້າຍແປ້ງທຳລາຍໂດຍການດູດນ້ຳລ້ຽງຈາກສ່ວນຕ່າງໆຂອງຕົ້ນເຊັ່ນ:ໃບ,ໝາກ,ກ້ານໃບ ແລະຍອດ | 1. ໃຊ້ນ້ຳຊີດໃຫ້ສພເດັນໄປ<br>2. ສີດພົ່ນດ້ວຍຢາຂ້າແມງເຊັ່ນ :ລິນເດນ,ໄທໂອດານ,ໄດອາຊິນອນເປັນຕົ້ນ |

| | | | | |
|---|---|---|---|---|
| | | 4.ໄຣແດງ ຫລື ແມງມຸມແດງ. | - ເປັນແມງມຸມຂະໜານນ້ອຍເບິ່ງເກືອບບໍ່ເຫັນ ໂຕສີແດງດູດກິນນ້ຳລ້ຽງທີ່ໃບ ເຮັດໃຫ້ໃບຊີດເປັນຈຸດໆ ຫືລເຫລືອງທັງໃບ, ໃບລົ່ນ ຖ້າດູດກິນນ້ຳລ້ຽງທີ່ໝາກເຮັດໃຫ້ໝາກປ່ຽນເປັນສີເທົາເຫລືອງແກ່ກ່ອນກຳນົດ ຣົດຊາດປ່ຽນໄປ . | 1. ຕັດໃບທີ່ພົບແມງມຸມແດງເຜົາໄຟຖິ້ມ ຊີດພົ່ນດ້ວຍຢາປ້ອງກັນກຳຈັດໄຣ ໂດຍສະເພາະ ເຄລເທນ |
| 6. | ໝາກລະມຸດ | 1.ໜອນເຈາະກິ່ງເຈາະຕົ້ນ. | -ໂຕໜອນຊອນເຂົ້າໄປໃນກິ່ງໃຫຍ່ໆ ຫລືລຳຕົ້ນ ຮູຂອງໜອນເບິ່ງເຫັນໄດ້ຍາກສ່ວນໃຫຍ່ຈະພົບໃນຕົ້ນລະມຸດທີ່ອາຍຸຫລາຍແລ້ວ ແລະຂາດການເອົາໃຈໃສ່ . | 1. ເມື່ອໂຕໜອນເຈາະເຂົ້າໄປແລ້ວ ໃຫ້ໃຊ້ຢາຂ້າແມງຊີດອັດເຂົ້າໃນຮູ ອັດຮູດ້ວຍດິນນ້ຳມັນ ຫລືໃຊ້ຢາທາໂຄນຕົ້ນໄວ້ .<br>2. ຊີດຢາຂ້າແມງຕາມກິ່ງໃຫຍ່ ແລະ ໂຄນຕົ້ນ . |
| | | 1. ໜອນເຈາະໝາກ | -ໂຕໜອນຈະເຈາະເຂົ້າໃນໝາກເຮັດໃຫ້ໝາກລົ່ນຫລືເຈາະເຂົ້າໄປຈົນເຖິງເມັດກັດກິນເມັດດ້ວຍໝາກລະມຸດຈະລົ່ນ ຫລືບໍ່ກໍ່ໄດ້ | 1. ຊີດຢາຂ້າແມງ ເຊັ່ນ: ເຊຟວິນ, ມາລາທອອນ ໃນຊ່ວງທີ່ໝາກກຳລັງເຕີບໂຕປະມານ 15 ວັນ/ຄັ້ງ ໃນກໍລະນີພົບເຫັນເລື້ອຍ ໆ . |
| 7. | ໝາກລີ້ນຈີ່ | 1. ໜອນຄືບກິນໃບ. | - ໂຕໜອນກັດກິນໃບອ່ອນ ລະບາດຫລາຍໃນຊ່ວງໃນຊ່ວງລີ້ນຈີ່ແຕກໃບອ່ອນ ບາງຄັ້ງສ້າງຄວາມເສຍຫາຍຫລາຍເຊັ່ນກັນຄືກັດກິນໃບອ່ອນ,ຍອດອ່ອນທີ່ແຕກໃໝ່ຈົນໝົດ . | 1. ຫິ່ນກິ່ງໂຕໜອນຈະຕົກລົງມາແລ້ວເກັບກວາດຖິ້ມ .<br>2. ສີດພົ່ນດ້ວຍຢາຂ້າແມງໄມ້ ເຊຟວິນ, ມາລາໄທອອນ ໃນຊ່ວງທີ່ແທງຍອດອ່ອນ ຫລື ພົບວ່າລະບາດຫລາຍ |
| | | 2. ໜອນເຈາະຂົ້ວນໝາກ | -ໂຕໜອນຈະເຈາະເຂົ້າທີ່ຂົ້ວນ ເຮັດໃຫ້ໝາກລົ່ນ ເຂົ້າທຳລາຍຫລາຍໃນຊ່ວງທີ່ໝາກໃກ້ຈະແກ່ ແລະ ຍັງຕິດມາກັບໝາກຈົນເຖິງຜູ້ບໍລິໂພກອີກດ້ວຍ . | 1. ເກັບໝາກທີ່ລົ່ນໄປຝັງ .<br>2. ຊ່ວງໝາກໃກ້ຈະແກ່ ສີດພົ່ນດ້ວຍຢາຂ້າແມງທີ່ມີອາຍຸການສະລາຍຕົວສັ້ນ |
| | | 3. ໄຣລີ້ນຈີ່ | - ເປັນພວກໄຣ ຫລືແມງມຸມ ໂຕມີຂະໜາດນ້ອຍທຳລາຍໂດຍການດູດກິນນ້ຳລ້ຽງທີ່ໃບອ່ອນເຮັດໃຫ້ໃບຊີດເຫຼືອງ, ລົ່ນ ແລະ ຍັງທຳລາຍດອກ ແລະໝາກດ້ວຍ ລະບາດຫລາຍໃນຊ່ວງອາກາດຮ້ອນ ແລະແຫ້ງແລ້ງ | 1. ສີດພົ່ນດ້ວຍຢາປ້ອງກັນກຳຈັດໄຣ ເຊ່ນ : ເຄລເທນ ຫລື ໄດເມທໂທເອທ ເປັນຕົ້ນ . |

| | | | | |
|---|---|---|---|---|
| 8. | ໝາກລຳໃຍ | 1. ເພ້ຍອ່ອນ,ເພ້ຍຫອຍ, ເພ້ຍແປ້ງ | - ບໍ່ຄ່ອຍລະບາດ ແມງເຫລົ່ານີ້ດູດກິນນ້ຳລ້ຽງຈາກຍອດອ່ອນເຮັດໃຫ້ຍອກງິກບໍ່ອອກດອກໝາກໄດ້ . | 1. ຖ້າບໍ່ຫລາຍຄວນຕັດກິ່ງທີ່ມີແມງໄມ້ເຜົາໄຟຖີ້ມ .<br>2. ສີດພົ່ນດ້ວຍຢາຂ້າແມງໄມ້ ດັ່ງທີ່ໄດ້ກ່າວມາແລ້ວ . |
| | | 2. ໜອນເຈາະກິ່ງເຈາະຕົ້ນ | - ອາດເປັນໜອນຂອງດ້ວງປີກແຂງຫລືໜອນແມງກະເບື້ອກໍ່ໄດ້ ໂຕໜອນຈະຊອນເຂົ້າໄປພາຍໃນກິ່ງກັດກິນເນື້ອໄມ້ເຮັດໃຫ້ກິ່ງແຫ້ງຕາຍຢ່າງໄວ . | ຖ້າພົບຂວຍທີ່ໂຕໜອນຂັບອອກມາ ໃຫ້ໃຊ້ເຫຼັກແຫຼມແທງເຂົ້າໃນຮູແລ້ວອັດຮູດ້ວຍດິນນ້ຳມັນ |
| | | 3. ໜອນຊອນກິ່ງ | ໂຕໜອນມີຂະໜາດນ້ອຍກ່ວາໜອນເຈາະກິ່ງ ໂຕແມ່ວາງໄຂ່ຕາມເປືອກທີ່ລຳຕົ້ນແລະກິ່ງ ໂຕໜອນຈະຊອນເຂົ້າກັດກິນຢູ່ລະຫວ່າງເປືອກກັບເນື້ອໄມ້ ຖ້າເປັນຫລາຍຈະເຮັດໃຫ້ຕົ້ນຊຸດໂຊມໄວກ່ວາປົກກະຕິ . | 1 ທາກິ່ງດ້ວຍປູນແດງ, ປູນຂາວ ປ້ອງກັນການວາງໄຂ່ .<br>2. ຖ້າພົບຫລາຍໃຫ້ຖາກເປືອກບາງໆ ແລ້ວໃຊ້ຢາຂ້າແມງ ເຊັ່ນ : ດິນດຣິນ, ເຂັ້ມຂຸ້ນສີດເຂົ້າໄປທີ່ຕົ້ນແລະ ກິ່ງ |
| 9. | ໝາກໄມ້ຕະກຸນສົ້ມ | 1. ໜອນຊອນໃບສົ້ມ | - ໂຕໜອນມີຂະໜາດນ້ອຍສີຂາວເຫລືອງທຳລາຍໂດຍການຊອນເຂົ້າໃຕ້ຜິວໃບເຫັນເປັນຍທາງສີຂາວທັ້ງໃບ ລະບາດຫລາຍໃນຊ່ວງແຕກໃບອ່ອນສ້າງຄວາມເສຍຫາຍແກ່ໃບອ່ອນ ເຮັດໃຫ້ໃບຍິກງໍໃຝບແຫ້ງ ແລະຍັງພະຍາດແຄງເກີໄດ້ອີກດ້ວຍ . | 1. ຕັດກິ່ງທີ່ພົບເຫັນເຜົາໄຟຖີ້ມ .<br>2. ໃຊ້ໄຟລໍ້ໂຕແມ່ແທງກະເບື້ອມາຫລົ້ນໄຟ<br>3. ສີດພົ່ນດ້ວຍຢາຂ້າແມງໄມ້ຊ່ວງແຕກໃບອ່ອນ ເຊັ່ນ : ໄດເມທໂທເອທ, ຊູບີຊີດີນ. |
| | | 2. ໜອນແກ້ວສົ້ມ | - ເປັນໜອນຂະໜາດໃຫຍ່ ໂຕສີຂຽວ ກັດກິນໃບອ່ອນ ຍອດອອ່ນ ຖ້າລະບາດຫລາຍເຮັດໃຫ້ເກີດຄວາມເສຍຫາຍຫລາຍ. | 1. ຈັບໂຕມາທຳລາຍເພາະເຫັນໄດ້ງ່າຍ.<br>2. ສີດພົ່ນດ້ວຍຢາຂ້າແມງເຊັ່ນ : ທາມາລອນ, ທີໂອດານ ເປັນຕົ້ນ. |
| | | 3. ເພ້ຍອ່ອນ, ເພ້ຍໄຟ,ເພ້ຍແປ້ງ. | - ດູດກິນນ້ຳລ້ຽງຕາມສ່ວນຕ່າງໆ ເຊັ່ນ : ໃບ, ຍອດ, ກິ່ງ ເຮັດໃຫ້ໝາກມີຮອຍຕີມີຄາບດຳຕິດທີ່ໝາກ | ສ່ວນໃຫຍ່ຈະບໍ່ຄ່ອຍມີບັນຫາໂດຍສະເພາະໃນສ່ວນທີ່ສີດພົ່ນສານເຄມີທຳລາຍສັດຕູອື່ນໆເປັນປະຈຳພວກນີ້ກໍ່ຈະຖືກທຳລາຍໄປດ້ວຍ. |

| | | | | |
|---|---|---|---|---|
| | | 4. ເພັຍຫອຍ | - ທຳລາຍໂດຍການດູດກິນນ້ຳລ້ຽງ ຕາມກິ່ງ,ໃບ ເຮັດໃຫ້ແຫ່ວເກີດຮອຍຕິ ເກີດຣາດຳຂຶ້ນຫລາຍ ເຮັດໃຫ້ໝາກມີຮອຍຕິດຳໆ ດ່າງໆ | 1. ຖ້າພົບຫລາຍຄວນຕັດກິ່ງເຜົາໄຟຖິ້ມ .<br>2. ຢາຂ້າແມງທີ່ໃຊ້ ຄື : ໄວທອຍ (ຖ້າສີດພົ່ນໄວທອຍແລ້ວບໍ່ຄວນສີດແຄບແທນພາຍໃນ 3 ເດືອນ ບໍ່ຄວນສີດພວກກຳມະຖັນພາຍໃນໜຶ່ງເດືອນເພາະຈະເກີດອັນຕະລາຍແກ່ສົ້ມໄດ້ ). |
| | | 5. ແມງກະເບື້ອມວນຫວານ | - ເປັນແມງກະເບື້ອກາງຄືນຂະໜາດໃຫຍ່ ທຳລາຍໂດຍໃຊ້ປາກແທງເຂົ້າໄປໃນໝາກ ເຮັດໃຫ້ໝາກເນົ່າລົ່ນ | 1. ໃຊ້ຫວິງຈັບໂຕມາທຳລາຍ<br>2. ໃຊ້ກົງລໍ້ໃຫ້ມາຕິດກັບ ຫລືໃຊ້ໄຟລໍ້<br>3. ໃຊ້ເຍື່ອພິດເຊັ່ນ : ໃຊ້ໝາກນັດຈຸ່ມຢາເຊຟວິນຫ້ອຍໄວ້ໃຫ້ແມງມາກິນ . |
| | | 6. ແມງວັນທອງ | - ໂຕແມ່ວາງໄຂ່ໃນໝາກແລ້ວຟັກເປັນໂຕໜອນເຈາະເຂົ້າຂ້າງໃນ ເຮັດໃຫ້ໝາກເນົ່າ ແລະ ລົ່ນ | 1. ເກັບໝາກທີ່ເນົ່າລົ່ນຕາມພື້ນຝັງໃຫ້ເລິກ .<br>2. ໃຊ້ກັບດັກແມງວັນທອງໂຕຜູ້ໂດຍໃຊ້ສານ ເມທິລຢູຈີນອລ ເປັນສານລໍ້ສີດພົ່ນດ້ວຍຢາຂ້າແມງພວກ ໄພເຣທຣອຍ . |
| 10. | ໝາກສີດາ | ແມງວັນທອງ | ໂຕແມ່ຈະໃຊ້ກົ້ນແທງເຂົ້າທີ່ໝາກແລ້ວວາງໄຂ່ ໂຕບົ້ງທີ່ຟັກອອກມາຈາກໄຂ່ຈະກັດກິນພາຍໃນໝາກ ເຮັດໃຫ້ໝາກເໜົ່າແລະລົ່ນ. | 1. ເກັບໝາກທີ່ລົ່ນຝັງເລິກໆ<br>2. ຫໍ່ໝາກປ້ອງກັນແມງວັນທອງ ແລະ ເຮັດໃຫ້ໝາກມີຄຸນນະພາບ. |

# ບົດທິດສະດີທີ 7
# ການເກັບໝາກ ແລະ ການປະຕິບັດຫລັງການເກັບໝາກ

**ຈຸດປະສົງການສອນ**

1. **ອະທິບາຍເຖິງການສຸກຂອງໝາກໄມ້ທັງສອງແບບ**
2. ອະທິບາຍຄວາມແກ່ຂອງໝາກ
3. ບອກຕົວບົ່ງຊີ້ຄວາມແກ່ຂອງໝາກ
4. ອະທິບາຍວິທີການເກັບໝາກທີ່ຖືກຕ້ອງ
5. ບອກວິທີການຄັດໝາກອອກ ແລະ ການທຳຄວາມສະອາດໝາກໄມ້ກ່ອນຈຳໜ່າຍ
6. ອະທິບາຍວິທີການປ້ອງກັນກຳຈັດພະຍາດ ແລະ ແມງໄມ້ທີ່ຕິດມາກັບໝາກໄມ້
7. ບອກວິທີການບົ່ມໝາກໄມ້ບາງຊະນິດ
8. ບອກວິທີການເກັບຮັກສາໝາກໄມ້ຫລັງຈາກບົ່ມສຸກແລ້ວ
9. ບອກວິທີການບັນຈຸຫີບຫໍ່ ແລະ ການຂົນສົ່ງ.

## ເນື້ອໃນ

### 7.1 ການເກັບໝາກ

ການເກັບໝາກໄມ້ເປັນຂັ້ນຕອນໜຶ່ງທີ່ສຳຄັນ ທີ່ຈະຕ້ອງປະຕິບັດໃຫ້ຖືກຕ້ອງ ແລະ ລະມັດລະວັງ ເພາະຈະມີຜົນຕໍ່ຄຸນນະພາບຂອງຜົນຜະລິດເປັນເບື້ອງຕົ້ນ ກ່ອນທີ່ຈະຜ່ານຂະບວນການຕ່າງໆ ຈົນກະທັ້ງເຖິງຜູ້ບໍລິໂພກ ໃນການເກັບກ່ຽວໝາກໄມ້ມີສິ່ງທີ່ຄວນຮູ້ ດັ່ງນີ້ :

#### 7.1.1 ການສຸກຂອງໝາກ

ໝາກໄມ້ທົ່ວໄປນັ້ນຫລັງຈາກທີ່ເກັບອອກມາຈາກຕົ້ນແລ້ວ ພໍຈະແບ່ງອອກຕາມສະພາບການຫາຍໃຈ ການປ່ຽນແປງພາຍໃນຂອງໝາກ ຫລືເອີ້ນວ່າການສຸກຂອງໝາກ ໄດ້ເປັນ 2 ພວກໃຫຍ່ ໆດັ່ງນີ້ :

1. ພວກໝາກໄມ້ທີ່ສາມາດບົ່ມໃຫ້ສຸກໄດ້ : ໝາກໄມ້ພວກນີ້ ເມື່ອເກັບມາຈາກຕົ້ນແລ້ວອັດຕາການຫາຍໃຈຂອງໝາກຈະລຸດລົງເລື້ອຍໆຈົນກະທັ້ງເຖິງຈຸດໆໜຶ່ງອັດຕາການຫາຍໃຈຈະກັບສູງເພີ່ມຂຶ້ນຄືເລີ່ມ ມີການສຸກເກີດການປ່ຽນແປງຕ່າງໆ ພາຍໃນໝາກໄປເລື້ອຍໆ ຈົນກະທັ້ງໝາກສຸກງອມ ແລະ ເໜົ່າໄປໃນທີ່ສຸດ.ໄມ້ໃຫ້ໝາກພວກນີ້ ສາມາດເກັບໝາກໄດ້ ຕັ້ງແຕ່ໝາກຍັງບໍ່ທັນແກ່ຈັດ ຈົນກະທັ້ງສຸກຄາຕົ້ນ .

2. ພວກໝາກໄມ້ທີ່ບົ່ມໃຫ້ສຸກບໍ່ໄດ້ ຫລືບົ່ມບໍ່ສຸກ : ໄມ້ໃຫ້ໝາກພວກນີ້ ເມື່ອເກັບຈາກຕົ້ນແລ້ວ ອັດຕາການຫາຍໃຈຂອງໝາກຈະລຸດລົງເລື້ອຍໆ ແລະ ບໍ່ມີການສູງຂຶ້ນອີກ. ການປ່ຽນແປງຕ່າງໆພາຍໃນໝາກມີໜ້ອຍຫລາຍ. ດັ່ງນັ້ນ, ການເກັບຄວນເກັບໃນໄລຍະທີ່ໝາກຢູ່ໃນໄລຍະແກ່ຈັດແລ້ວ ຫລືມີຄຸນນະພາບທີ່ຕະຫລາດຕ້ອງການເທົ່ານັ້ນ .

**7.1.2 ຄວາມແກ່ຂອງໝາກ**

ຄວາມແກ່ຂອງໝາກເປັນສິ່ງສຳຄັນອີກຢ່າງໜຶ່ງໂດຍສະເພາະພວກທີ່ສາມາດບົ່ມໄດ້ ຖ້າເກັບອ່ອນເກີນໄປ ກໍ່ຄົງສະພາບຢູ່ຄືແນວນັ້;ນ ຈະສົ້ມເພາະບໍ່ມີການປ່ຽນແປງພາຍໃນໝາກອີກແລ້ວຫລືມີກໍ່ໜ້ອຍຫລາຍ . ສ່ວນພວກທີ່ບົ່ມໄດ້ຖ້າເກັບອ່ອນເກີນໄປ ແມ້ຈະເອົາບົ່ມໃຫ້ສຸກໄດ້ແຕ່ຄຸນນະພາບບໍ່ດີ ເຊັ່ນ : ໝາກແຫ່ວ, ສີບໍ່ງາມ, ຣົດຊາດບໍ່ດີ ເປັນຕົ້ນ ແລະ ຖ້າເກັບແກ່ເກີນໄປໝາກກໍ່ຈະເນົ່າເສຍງ່າຍ . ດັ່ງນັ້ນ, ການເກັບໝາກຕ້ອງເກັບໃນໄລຍະທີ່ເໝາະສົມທີ່ສຸດເຊິ່ງຂຶ້ນຢູ່ກັບປັດໃຈຫລາຍຢ່າງເຊັ່ນ ຄວາມໃກ້-ໄກຂອງຕະຫລາດ, ສະພາບການຂົນສົ່ງ, ການເກັບຮັກສາ, ການແປຮູບ ຕະຫລອດຈົນການສະພາບການປູກ ແລະ ພະຍາດແມງໄມ້ອີກດ້ວຍ .

**7.1.3 ຕົວບົ່ງຊີ້ຄວາມແກ່ຂອງໝາກແລະວິທີການເກັບໝາກໄມ້ບາງຊະນິດ**

1. ກ້ວຍ : ຈະສັງເກດເຫັນລ່ຽມທີ່ໝາກຫາຍໄປ ໝ!ກຕຶ່ງ, ກົມຈະເກັບເມື່ອອາຍຸ 55 ວັນ ຫລັງຕັດໝາກປີກໍ່ໄດ້ ເຊິ່ງຈະມີຄວາມແກ່ 75 ເປີເຊັນ ຈະສຸກພາຍໃນ 3 ອາທິດ ເໝາະສຳລັບສົ່ງໄປໄກ ແຕ່ຖ້າເອົາໄວ້ບໍລໂພກເອງ ຫລືໃກ້ຕະຫລາດຄວນປະໃຫ້ແກ່ເຕັມທີ່ ປະມານ 70 ວັນຫລັງຈາກຕັດໝາກປີ .

2. ໝາກມີ້ : ໝາກທີ່ແກ່ສັງເກດໄດ້ງ່າຍ ເຊັ່ນ ໜາມຈະແຍກຫ່າງກັນອອກໄປ ໃບສຸດທ້າຍທີ່ຢູ່ກ້ານໝາກຈະເປັນສີເຫລືອງ ຫລືສີສົ້ມແກ່ຫລາຍຂຶ້ນ ຢາງທີ່ກ້ານຂົ້ວນມີລັກສະນະຂຸ້ນ ຖ້າແກ້ຈັດ ຈະມີກິ່ນຫອມ ອາດເກັບເມື່ອໝາກ ເລີ່ມອ່ອນຕົວກໍ່ໄດ້ ແຕ່ຖ້າສົ່ງໄປໄກຄວນເກັບເວລາໝາກຍັງແຂງຢູ່ .

3. ໝາກທຸລຽນ : ສັງເກດຄື ນອກຈາກອາຍຸຂອງໝາກແລ້ວ ຍັງອາໄສການຟັງສຽງ ຮ່ອງໜາມເລີ່ມແຍກຕົວ ເບິ່ງບໍ່ເຫັນຊັດເຈນ ສີຂອງໝາກປ່ຽນແປງອອກສີຂາວນວນຂຶ້ນເຫລືອງ ຫລືນ້ຳຕານຫລາຍຂຶ້ນ ກ້ານຂົ້ວນມີຮອຍແຕກ. ທຸລຽນ ຄວນເກັບກ່ອນທີ່ກ້ານຂົ້ວນຈະລຸດອອກ .

4. ໝາກມ່ວງ : ໝາກທີ່ແກ່ແລ້ວຈະມີນວນທີ່ໝາກໜາເປັນມັນວາວ ໝາກຕຶ່ງ ຫລືຖ້ານຳໄປແຊ່ນ້ຳໝາກຈະຈົມປະມານເຄິ່ງໜ່ວຍ . ການເກັບໝາກຄວນລະວັງຢ່າໃຫ້ໝາກຊ້ຳບູມ ແລະ ຢ່າໃຫ້ນວນທີ່ຜິວໝາກລຸດອອກຫລາຍຈະບໍ່ສວຍງາມ .

5. ໝາກຫຸ່ງ : ຖ້າເປັນໝາກທີ່ປູກໄວ້ບໍລິໂພກເອງ ຄວນປະໄວ້ໃຫ້ເປັນສີເຫລືອງ ຫລືແດງຫລາຍກ່ອນຈຶ່ງເກັບ ຖ້າຈະສົ່ງໄປໄກຄວນໃຫ້ເກັບເມື່ອດ້ານກົ້ນໝາກ ເລີ່ມປ່ຽນສີເປັນແຖວຍາວ ໝາກດັ່ງກ່າວຈະສຸກພາຍໃນ 7- 10 ມື້ .

6. ລຳໄຍ, ລິ້ນຈີ່ : ພວກນີ້ຈະເກັບກັນທັງຊໍ່ ( ພົ້ວ ) ຈຶ່ງຕ້ອງຖ້າໃຫ້ທັງພົ້ວແກ່ສະໝ່ຳສະເໝີເສຍກ່ອນ ໝາກທີ່ແກ່ຈະຕຶ່ງ , ສີຂອງໝາກປ່ຽນໝາກລຳໄຍມີສີນ້ຳຕານອ່ອນ ລິ້ນຈີ່ມີສີແດງເຂັ້ມ ຫລືທົດສອບດ້ວຍການຊິມເບິ່ງ .

7. ພວກສົ້ມ : ໃຊ້ວິທີນັບອາຍຸ ແລະ ວິທີອື່ນໆປະກອບກັນ ພວກສົ້ມໂອ ສີຂອງໝາກຈະຈາງລົງຜິວສີອອກເຫລືອງ ຫລືຊຽວອົມເຫລືອງ ສົ້ມຊຽວຫວານ ສີອາດປ່ຽນເປັນເຫລືອງເຂັ້ມ, ສີສົ້ມ, ສີເຫລືອງປົນແດງ ຄວາມແຂງຂອງໝາກລຸດລົງ ເມື່ອບິດໝາກຈະລຸດຈາກຂົ້ວນໄດ້ງ່າຍ.ການເກັບໝາກຄວນໃຊມີດຕັດອອກມາທັງກ້ານໝາກລົງມາກ່ອນແລ້ວຈຶ່ງເດັດອອກຕາມຫລັງ ຈະເຮັດໃຫ້ບໍ່ຊ້ຳບູມ.

## 7.2 ການປະຕິບັດຫລັງຈາກການເກັບໝາກ

### 7.2.1 ການຄັດໝາກອອກ ແລະ ການທຳຄວາມສະອາດ

ໝາກທີ່ເກັບມາແລ້ວຄວນມີການຄັດອອກເພື່ອເອົາໜ່ວຍທີ່ບໍ່ດີອອກເຊັ່ນ :ໜ່ວຍທີ່ນ້ອຍເກີນໄປ, ໜ່ວຍທີ່ບໍ່ສົມບູນ ມີຮອຍຕີຈຶ່ງໄວ້ແຕ່ໜ່ວຍທີ່ໄດ້ມາດຖານເພື່ອຈະຈຳໜ່າຍໄດ້ດີ. ນອກນີ້ໄມ້ໃຫ້ໝາກບາງຊະນິດ ຈຳເປັນຕ້ອງທຳຄວາມສະອາດເພື່ອໃຫ້ມີຄວາມສວຍງາມ.

### 7.2.2 ການຄັດຂະໜາດ

ເພື່ອໃຫ້ໄດ້ຜົນຜະລິດທີ່ມີມາດຖານດຽວກັນ ສະດວກໃນການຂົນສົ່ງ ແລະ ການຈຳໜ່າຍ ການຄັດຂະໜາດຂອງໝາກອາດໃຊ້ຂະໜາດຄວາມກ້ວາງ,ຍາວຂອງໝາກ ຫລືໃຊ້ນ້ຳໜັກຂອງໝາກກໍ່ໄດ້ຕາມມາດຖານຂອງໝາກໄມ້ແຕ່ລະຊະນິດທີ່ປະຕິບັດກັນມາ .

### 7.2.3 ການປ້ອງກັນກຳຈັດພະຍາດ - ແມງໄມ້ທີ່ຕິດມາກັບໝາກ

ມີພະຍາດ ແລະ ແມງໄມ້ບາງຊະນິດ ທີ່ຕິດມາກັບໝາກ ແລະ ລະບາດສ້າງຄວາມເສຍຫາຍລະຫວ່າງການຂົນສົ່ງ ຫລືການເກັບຮັກສາ ຈຶ່ງຈຳເປັນຕ້ອງກຳຈັດອອກເສຍກ່ອນໂດຍສະເພາະຕະຫລາດຕ່າງປະເທດຈະເຂັ້ມງວດເລື່ອງນີ້ ເພາະບໍ່ຕ້ອງການໃຫ້ພະຍາດ ແລະ ແມງໄມ້ໄປລະບາດໃນປະເທດຂອງເຂົາ. ການປ້ອງກັນອາດເຮັດໄດ້ຫລາຍວິທີ ເຊັ່ນ : ການຣົມຄວັນ, ການເຄືອບຜິວ, ການແຊ່ນ້ຳຮ້ອນ, ການຈຸ່ມສານເຄມີ, ການສາຍລັງສີ ເປັນຕົ້ນ. ເຊິ່ງແຕ່ລະວິທີຕ້ອງໄດ້ສຶກສາເຖິງຄວາມຍອມຮັບຂອງລູກຄ້າອີກດ້ວຍ. ສານເຄມີທີ່ໃຊ້ໄດ້ຜົນກັບພະຍາດຕ່າງໆ ທີ່ຕິດມາກັບໝາກ ເຊັ່ນ : ບີໂນມິລ, ເບນເລດ ເຊິ່ງປ້ອງກັນພະຍາດເໜົ່າຂອງໝາກມ່ວງ, ໝາກຫຸ່ງ ແລະ ກ້ວຍ .

### 7.2.4 ການບົ່ມໝາກໄມ້ບາງຊະນິດ

ໝາກໄມ້ບາງຊະນິດຈຳເປັນຕ້ອງບົ່ມເພື່ອໃຫ້ສຸກພ້ອມໆ ກັນຫລືໃຫ້ມີສີສວຍງາມຊວນຊື້ ການບົ່ມອາດວາງໄວ້ໃນຫ້ອງທຳມະດາ ຫລືໃນຫ້ອງທີ່ປິດແຈບດີ ແຕ່ຖ້າຈະໃຫ້ຜົນດີຄວນມີຕົວຊ່ວຍບົ່ມເພື່ອເລັ່ງການສຸກ ເຊັ່ນ : ໃຊ້ຖ່ານຫີນ ວາງໄວ້ໃນບ່ອນທີ່ບົ່ມ .

### 7.2.5 ການເກັບຮັກສາໝາກໄມ້ຫລັງຈາກບົ່ມໃຫ້ສຸກແລ້ວນັ້ນ

ຫລັງຈາກທີ່ບົ່ມສຸກແລ້ວຄວນມີການຮັກສາເພື່ອ ໃຫ້ໝາກໄມ້ນັ້ນບໍ່ເກີດຄວາມເສຍຫາຍດ້ວຍ ເກັບຮັກສາໄວ້ໃນບ່ອນທີ່ມີອຸນຫະພູມທີ່ແຕກຕ່າງກັນເຊັ່ນ : ໝາກມ່ວງ ຈະເກັບໄວ້ໃນບ່ອນທີ່ມີອຸນຫະພູມປະມານ 10 ອົງສາເຊລຊຽດສ ແຕ່ຖ້າເຢັນຈົນເຖິງ 7 ອົງສາເຊລຊຽດສ ໝາກມ່ວງບາງພັນຈະໄດ້ຮັບຄວາມເສຍຫາຍ .

### 7.2.6 ການບັນຈຸຫີບຫໍ່ ແລະ ການຂົນສົ່ງ

ໝາກໄມ້ຫລາຍຊະນິດທົນທານຕໍ່ການຂົນສົ່ງໄດ້ດີ ເພາະມີເປືອກທີ່ໜາ ບໍ່ຊ້ຳນູນໄດ້ງ່າຍ ຈຶ່ງບໍ່ຈຳເປັນບັນຈຸໃນຫີບຫໍ່ກໍ່ໄດ້ ເຊັ່ນ : ໝາກເງາະ, ໝາກນັດ, ທຸລຽນ, ສົ້ມໂອ ຢ່າງໃດກໍ່ຕາມການຂົນສົ່ງ ກໍ່ບໍ່ຄວນໃຫ້ໜີບເຕັງກັນຫລາຍເກັນໄປ. ສຳລັບພວກໝາກໄມ້ມີເປືອກບາງຊ້ຳນູນງ່າຍ ຄວນມີການບັນຈຸຫີບຫໍ່ກ່ອນຂົນສົ່ງ ເພື່ອໃຫ້ໝາກໄມ້ມີສະພາບທີ່ດີຈົນເຖິງປາຍທາງ.

# ບົດທົດສະດີທີ 8
# ເທັກນິກກະສິກຳຍືນນານໃນການປູກໄມ້ກິນໝາກ

**ຈຸດປະສົງການສອນ**

1. ອະທິບາຍວິທີການເຮັດນ້ຳສະກັດຊີວະພາບ
2. ອະທິບາຍວິທີການເຮັດຝຸ່ນຊີວະພາບແຫ້ງ
3. ອະທິບາຍວິທີການວິທີການເຮັດນ້ຳໝັກຊີວະພາບຮໍໂມນພືດ
4. ອະທິບາຍວິທີການຄວບຄຸມສັດຕູພືດແບບກະສິກຳຍືນນານ
5. ອະທິບາຍວິທີການຄວບຄຸມສັດຕູພືດໂດຍຊີວະວິທີ
6. ບອກວິທີການໃຊ້ຝຸ່ນ ຫລືວັດຖຸທຳມະຊາດກັບຕົ້ນໄມ້ໃຫ້ໝາກ
7. ບອກວິທີການອານຸລັກ ແລະ ນຳໃຊ້ປະໂຫຍດຂອງຕົ້ນໄມ້ໃຫ້ໝາກພື້ນເມືອງ

## ເນື້ອໃນ

ການປູກໄມ້ກິນໝາກ ສາມາດນຳໃຊ້ເທັກນິກບາງຢ່າງທີ່ເປັນພູມປັນຍາທ້ອງຖິ່ນ ຫລືເທັກນິກທີ່ບໍ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ, ຜູ້ຜະລິດ ແລະ ສິ່ງແວດລ້ອມຈະເຮັດໃຫ້ຊາວກະສິກອນ ສາມາດຫຼຸດຜ່ອນຕົ້ນທຶນ ແລະ ຜະລິດໝາກໄມ້ປອດສານພິດເປັນຜົນດີຕໍ່ສຸຂະພາບຜູ້ບໍລິໂພກ.

## 8.1 ຝຸ່ນຊີວະພາບ

ຝຸ່ນຊີວະພາບທີ່ນິຍົມໃຊ້ໃນການປູກໃມ້ກິນໝາກມີ 3 ຊະນິດ ຄື :

### 8.1.1 ຝຸ່ນຊີວະພາບນ້ຳ

ຝຸ່ນຊີວະພາບນ້ຳ ຫຼືບາງຄົນເອີ້ນວ່ານ້ຳສະກັດຊີວະພາບ ຫລືນ້ຳບີອີ (Bio - Extract BE) ເປັນການນຳເອົາພືດຜັກ ຫລືໝາກໄມ້ສົດ 3 ກິໂລກຼາມ ບົ່ມກັບນ້ຳຕານ ຫລືກາກນ້ຳຕານ1 ກິໂລກຼາມ ໃນຖັງ ໂດຍບໍ່ໃຫ້ອາກາດເຂົ້າ , ບົ່ມປະໄວ້ເປັນເວລາ 7 - 10 ມື້ ກໍຈະໄດ້ຂອງແຫຼວສີນ້ຳຕານ ເອີ້ນວ່ານ້ຳສະກັດຊີວະພາບ. ເຮົາສາມາດນຳມາໃຊ້ ໂດຍນຳເອົາ ນ້ຳສະກັດ 1 ລິດ ຕໍ່ 100 - 200 ລິດນ້ຳ ມາປະສົມເຂົ້າກັນ ແລ້ວທົດລົງໃນດິນໄລຍະກຽມດິນ ປູກຝັງ ໃນເນື້ອທີ່ 1 ໄລ່ ຈະເປັນການເພີ່ມຈຸລິນຊີໃນດິນເຮັດໃຫ້ມີການຍ່ອຍລະລາຍອິນຊີວັດຖຸເຮັດໃຫ້ພືດຈະເລີນງອກງາມເພີ່ມຜົນຜະລິດ ຫລືອາດສີດໃສ່ພືດໂດຍກົງ ເດືອນລະ 1 - 2 ເທື່ອ ກໍໄດ້ຜົນເຊັ່ນດຽວກັນ.

### 8.1.2 ຝຸ່ນຊີວະພາບແຫ້ງ

ເປັນການນຳໃຊ້ຝຸ່ນຊີວະພາບນ້ຳ ທີ່ໄດ້ສະເໜີຂ້າງເທິງ (8.1.1) ໄປເຮັດຝຸ່ນບົ່ມ ໂດຍໃຊ້ຂີ້ສັດແຫ້ງ 1 ສ່ວນ ໃສ່ຮຳພໍສົມຄວນ ເພື່ອເປັນອາຫານໃຫ້ຈຸລິນຊີ ຫລືອາດຈະໃຊ້ແປ້ງເຂົ້າຈຳນວນພໍເໝາະສົມກໍ່ໄດ້ ປະສົມນ້ຳຊີວະພາບໝັກໄວ້ໃຫ້ຊຸ່ມ ແລ້ວໃຊ້ຜ້າຢາງບົກຄຸມໄວ້ 7- 10 ມື້ ເມື່ອຄວາມຮ້ອນຫຼຸດລົງແລ້ວ ເປີດຜ້າອອກແລ້ວຕາກລົມໄວ້ໃຫ້ເຢັນ ແລ້ວນຳໄປໃຊ້ ໂດຍອັດຕາ 200 ກິໂລກຼາມຕໍ່ ໄຮ່.

### 8.1.3 ນ້ຳໝັກຊີວະພາບຮໍໂມນພືດ

ນ້ຳຫມັກຊີວະພາບໃຊ້ໝາກກ້ວຍສຸກ 1 ກິໂລກຼາມ, ໝາກຮຸ່ງສຸກ 1 ກິໂລກຼາມ, ໝາກອຶສຸກ 1 ກິໂລກຼາມ ຝັກໃຫ້ໝຸ່ນສົມຄວນໝົດທັງແກ່ນ ໝັກກັບນ້ຳຕານ ຫຼືກາກນ້ຳ ຕານ 1 ກິໂລກຼາມ ປະໄວ້ 10 - 15 ມື້ ລັກສະນະຄ້າຍຄືຝຸ່ນຊີວະພາບນ້ຳຈາກໝາກໄມ້ ສິດນ້ຳໝັກທີ່ໄດ້ຈະປະກອບໄປດ້ວຍແຮ່ທາດຫຼາຍ ທີ່ເປັນປະໂຫຍດ ຄື : ວິຕາມິນ ແລະຮໍໂມນພືດ. ໃຊ້ນ້ຳໝັກຮໍໂມນ ນີ້ 2 ບ່ວງແກງ ຕໍ່ນ້ຳ 10 ລິດ ສີດໃນໄລຍະໃບຍອດແກ່ຈັດ ເພື່ອເລັ່ງຕາດອກ ໂດຍສີດອາທິດລະເທື່ອຈົນເຖິງໄລຍະອອກດອກ ເພື່ອເຮັດໃຫ້ມີອັດຕາການຕິດໝາກຫຼາຍ ແລະ ບໍ່ຫຼົ່ນ ແລະຍັງສາມາດໃຊ້ໃນການແຊ່ແກ່ນ ເພື່ອເຮັດໃຫ້ແກ່ນແຕກງອກໄດ້ດີ ໂດຍໃຊ້ນ້ຳໝັກຊີວະພາບ 1 ບ່ວງແກງ ຕໍ່ ນ້ຳ 1 ລິດ ກ່ອນກ້າແກ່ນ.

## 8.2 ການຄວບຄຸມສັດຕູພືດແບບກະສິກຳຍືນນານ

### 8.2.1 ການນຳໃຊ້ຕົ້ນຕໍພືດພື້ນເມືອງ

ເປັນຕົ້ນແມ່ນ ໝາກມ່ວງ, ໝາກໄຟ, ຖົ່ວລຽນ ຖ້າເຮົາໃຊ້ຕົ້ນຕໍພັນພື້ນເມືອງ ຈະເຮັດ ໃຫ້ມີຄວາມຕານທານໃນລະບົບຮາກໄດ້ດີ, ເຮັດໃຫ້ຕົ້ນໄມ້ ມີຄວາມຈະເລີນເຕີບໂຕໄດ້ດີ ແລະ ອາຍຸຍືນ.

### 8.2.2 ການໃຊ້ສານສະກັດຈາກພືດ

ການໃຊ້ຢາຂ້າແມງໄມ້ ຄວນສຶກສາລະອຽດໃນປື້ມກ່ຽວຂ້ອງກັບເລື້ອງນີ້ເພາະຈະມີລາຍລະອຽດຄົບຖ້ວນ. ແຕ່ນີ້ ຈະຂໍແນະນຳສານສະກັດທີ່ນິຍົມໃຊ້ຄື ໝາກເຜັດສຸກ 200 ກຼາມ, ຕຳໝຸ່ນ ລະລາຍໃນນ້ຳ 10 ລິດ ແລ້ວຕອງເອົາກາກອອກໃຫ້ໝົດ ສີດຂ້າໜອນ ຫຼືເພັ້ຍໄດ້ດີ ລວມທັງແມງໄມ້ປີກແຂງ, ໃບຂົມກະເດົາ ໃຊ້ໃບສົດ 5 ກິໂລກຣາມ ຫຼືແກ່ນແຫ້ງ 1 ກິໂລກຼາມ ຕຳໝຸ່ນໃສ່ນ້ຳ 10 ລິດ ຕອງເອົາກາກອອກໃຫ້ໝົດ ແລ້ວນຳໄປສີດ ຈະເຮັດໃຫ້ໜອນ ແລະ ດ້ວງບໍ່ລອກຄາບ, ບໍ່ກິນອາຫານ ແລະ ຕາຍໃນທີ່ສຸດ ເຊິ່ງເປັນຢາຂ້າແມງໄມ້ໂດຍກົງ.

### 8.2.3 ການກຳຈັດແມງໄມ້ໝາກໄມ້ ( Fruit - Fly)

ແມງໄມ້ໝາກໄມ້ຖືວ່າແມ່ນສັດຕູສຳຄັນຊະນິດໜຶ່ງເພາະຈະວາງໄຂ່ໃນໝາກ ໄມ້ ເມື່ອໝາກໄມ້ສຸກຈະເປັນຕົວໜອນເຈາະໝາກໄມ້ ເຮັດໃຫ້ໝາກໄມ້ເໜົ່າເສຍບໍ່ສາມາດນຳມາ

ບໍລິໂພກໄດ້. ຮໍໂມນ ຢຸຈິນອລ (Eugenal) ເຊິ່ງເປັນ ຮໍໂມນດຶງດູດທາງເພດລໍ່ຖ້າໃຫ້ໂຕຜູ້ເຂົ້າມາໃນກັບດັກ ແລ້ວຂ້າໃຫ້ຕາຍເທັກນິກນີ້ເຮົາຍັງໃຊ້ພືດພື້ນເມືອງບາງຊະນິດແທນສານ Eugenal ໄດ້, ເປັນຕົ້ນໃບພູປ່າ,ດອກສະເລເຕ ກໍ່ສາມາດລໍ້ແມງໄມ້ໄດ້ ຫຼືສັງເກດພືດອື່ນ ໆໃນທ້ອງຖິ່ນທີ່ມີແມງໄມ້ມັກຈັບ ຫຼືຕອມ ກໍສາມາດນຳມາໃຊ້ໄດ້ຄືກັນ.ການເຮັດກັບດັກ ນິຍົມໃຊ້ກວດຢາງຕັດຄໍກວດສູບປາກເຂົ້າໄປທາງໃນ ເມື່ອເຮົາໃຊ້ສານລໍ້ໃນກວດແກ້ວແລ້ວແມງໄມ້ຈະເຂົ້າໄປ ແລະອອກບໍ່ໄດ້. ຈາກນັ້ນ, ຈຶ່ງນຳໄປຂ້າຖິ້ມ.

## 8.3 ການຄວບຄຸມສັດຕູພືດໂດຍຊີວະວິທີ

ເປັນການນຳເອົາສິ່ງມີຊີວິດ ຫຼືຈຸລິນຊີ ເຂົ້າໄປປ້ອງກັນກຳຈັດສິ່ງມີຊີວິດທີ່ເປັນພະຍາດ ຫລື ສັດຕູພືດ.

### 8.3.1 ການນຳເອົາຈຸລິນຊີໄປປ້ອງກັນພະຍາດໄມ້ໃຫ້ໝາກ

ວິທີການນີ້ ປະຈຸບັນກຳລັງນິຍົມໃຊ້ ເປັນຕົ້ນແມ່ນການສີດຈຸລິນຊີ EM ຫຼືນ້ຳໝັກຊີວະພາບເປັນປະຈຳໃນທຸກອາທິດ ການໃຊ້ເຊື້ອຣາ ( Ketonium ) ປ້ອງກັນພະຍາດຮາກເໜົ່າ, ກົກເໜົ່າ ການໃຊ້ເຊື້ອຈຸລິນຊີ ບີທີ ( BT ) ກຳຈັດໂຕບົ້ງ.

### 8.3.2 ການໃຊ້ໂຕຫ້ຳໂຕບຽນ

ແມງໄມ້ທີ່ເອີ້ນວ່າ ໂຕຫ້ຳ ຄືເປັນແມງໄມ້ທີ່ກິນແມງໄມ້ ຫຼື ບົ້ງທີ່ເປັນສັດຕູພືດເປັນອາຫານເປັນຕົ້ນ ແມ່ນ : ແຕນ, ຕໍ່. ແມງໂຕບຽນ ເປັນແມງໄມ້ນ້ອຍໆ ທີ່ຄອຍລົບກວນ ຫຼືເປັນພະຫະນະນຳເຊື້ອພະຍາດໃຫ້ແກ່ແມງໄມ້ທີ່ເປັນສັດຕູພືດ.

### 8.3.3 ຂີ້ກະເດືອນຝອຍ

ຂີ້ກະເດືອນຝອຍ ເປັນ ຂີ້ກະເດືອນທີ່ນ້ອຍທີ່ສຸດບໍ່ສາມາດເບິ່ງເຫັນດ້ວຍຕາເປົ່າສ່ວນຫຼາຍຈະເປັນໂທດ ເຮັດໃຫ້ເກີດພະຍາດກັບຮາກພືດ ເຮັດໃຫ້ຕົ້ນໄມ້ບໍ່ຈະເລີນງອກງາມ ແລະຕາຍໃນທີ່ສຸດ. ແຕ່ບາງຊະນິດມັນຈະເປັນສັດຕູຄອຍກິນຂີ້ກະເດືອນຝອຍທີ່ເປັນໂທດ. ດັ່ງນັ້ນ, ນັກວິຊາການຈະເອົາຂີ້ກະເດືອນຝອຍທີ່ເປັນປະໂຫຍດມາເພາະພັນໃຊ້ກຳຈັດຂີ້ກະເດືອນຝອຍທີ່ເປັນໂທດເຮັດໃຫ້ເກີດພະຍາດໃນຮາກພືດ.

## 8.4 ການໃຊ້ຝຸ່ນ ຫຼື ວັດຖຸທຳມະຊາດໃນໄມ້ໃຫ້ໝາກ

ມີຝຸ່ນທຳມະຊາດ ແລະ ວັດຖຸທຳມະຊາດບາງຊະນິດສາມາດນຳໄປໃຊ້ໃນການປູກໄມ້ໃຫ້ໝາກເຮັດໃຫ້ໝາກໄມ້ມີຄຸນນະພາບ ແລະ ລົດຊາດດີ.

### 8.4.1 ຂີ້ເຈຍ

ເປັນອາຈົມຂອງເຈຍຊະນິດທີ່ກິນແມງໄມ້ເປັນອາຫານ, ເປັນເຈຍຂະໜາດ ນ້ອຍທີ່ອາໃສໃນຖ້ຳຫີນປູນຈຳນວນຫຼວງຫຼາຍ. ຂີ້ເຈຍເຫລົ່ານີ້ຈະຖືກສາສົມໃນຖ້ຳດົນຫຼາຍຮ້ອຍ ປີບາງ

ເທື່ອມີລັກສະນະຄ້າຍຄືກ້ອນຫີນ ຈະມີປະລິມານທາດອາຫານຂອງພືດຢ່າງຫລວງຫຼາຍ ໂດຍສະເພາະ ທາດຟອສຟໍຣັດ ( P ) ແລະ ໂປແຕັສຊຽມ ( K ) ອາດຈະມີເຖິງ 20 ເປີເຊັນ ຂື້ນໄປ ໃນໄລຍະໝາກໄມ້ກໍາລັງແກ່ ຫລືກ່ອນເກັບກ່ຽວປະມານ 1 ເດືອນ. ການໃຊ້ຂີ້ເຈຍ 1 ກິໂລກຼາມ ຕໍ່ຄວາມກ້ວາງຂຸມພຸ່ມ 1 ແມັດ ແລະ ຫົດນໍ້າຢ່າງສະໝໍ່າສະເໝີ ເພື່ອເຮັດໃຫ້ມີຄວາມຊຸ່ມເຮັດໃຫ້ໝາກໄມ້ມີໜ່ວຍໃຫ່ຍເປືອກງາມຣົດຊາດດີ, ກອບ ເພາະສິດທິຜົນຂອງທາດໂປແຕັສຊຽມ.

### 8.4.2 ຫີນຟອສເຟສ

ເປັນຫີນທໍາມະຊາດທີ່ມີສູດຝຸ່ນ 0 - 3 - 0 ຄືມີທາດ ຟອສຟໍຣັສ ເປັນຕົວຊ່ວຍບໍາລຸງຮາກ ແລະ ຫຼຸດຜ່ອນຄວາມເປັນກົດຂອງດິນ. ຫີນຟອສເຟດ ຈິ່ງນິຍົມນໍາມາໃຊ້ເປັນວັດຖຸຮອງກົ້ນຂຸມປູກ ເພື່ອເຮັດໃຫ້ຮາກລົງເລິກ, ທົນແລ້ງໄດ້. ໃນໄລຍະທີ່ກົກໄມ້ເປັນໝາກຫຼືກຽມອອກດອກ ນິຍົມໃຊຟອສເຟສ 1 - 2 ກິໂລກຼາມ ຕໍ່ຂຸມ ພູ່ມກ້ວາງ 1 - 2 ແມັດ ເພື່ອເຮັດໃຫ້ໝາກໄມ້ສົມບູນດີ .

### 8.4.3 ໂດໂລໄມດ໌

ເປັນຫີນປູນຊະນິດທີ່ມີຄວາມເປັນກາງ ແຕ່ບໍ່ເທົ່າປູນຂາວ ໃຫ້ແຄລຊຽມແກ່ຕົ້ນໄມ້ ເພື່ອເຮັດໃຫ້ໝາກໄມ້ແຂງແຮງດີ ເຊິ່ງມີຈຸດພິເສດ ຄື : ທາດ ແມັກນີຊຽມ( Mg ),ແມັກການນິດ(Mn)ຢູ່ນໍາເຮັດໃຫ້ພືດສ້າງຄຣໍໂລຟິນໄດ້ດີມີສີຂຽວເຂັ້ມ.ໃນການກຽມໜອງປາກໍ່ຈະໃຊ້ ໂດໂລໄມ໌ ເພາະເກີດນໍ້າຂຽວໄດ້ດີ.

### 8.4.4 ດິນ ຫຼືຫີນພູເຂົາໄຟ

ໃນບໍລິເວນພູເຂົາໄຟເກົ່າເປັນຕົ້ນແມ່ນເຂດທ່າແຕງເມືອງປາກຊ່ອງໃນພາກໃຕ້ ດິນເຫລົ່ານີ້ ມີທາດອາຫານທີ່ຈໍາເປັນສໍາລັບພືດສູງ ໂດຍສະເພາະແມ່ນ ທາດຊິລີກາ ທີ່ຢູ່ໃນຮູບທີ່ພືດສາມາດດູດເຂົ້າໄປໃນຈຸລັງໄດ້ງ່າຍ ເຮັດໃຫ້ພືດມີຈຸລັງແຂງແຮງຕ້ານກັບພະຍາດໄດ້ດີ. ແຮ່ທາດເຫລົ່ານີ້ຈະສາມາດ ເຮັດໃຫ້ພືດແຂງແຮງ ແລະ ຈະເລີນເຕີບໂຕໄດ້ດີ. ຫີນພູເຂົາໄຟ ທີ່ມີປະໂຫຍດຈະມີສີແດງ ຫຼື ຂາວມົ່ນ, ນໍ້າໜັກເບົາ, ມີຮູອາກາດນ້ອຍ ໆ ຢູ່ໃນກ້ອນຫີນຢ່າງຫຼວງຫຼາຍ ແຕ່ຈະບໍ່ມີການປະຕິກິລິຍາກັບກົດ ຕົວຢ່າງ : ຖ້າເອົານໍ້າລີ້ມ ຫຼືໝາກໝາວໃສ່ຈະບໍ່ມີຟອດເກີດຂື້ນ ຖ້າມີຟອດເກີດຂື້ນສະແດງວ່າເປັນຫີນປູນບໍ່ແມ່ນດິນຫີນພູເຂົາໄຟ ເຂດດິນພູເຂົາໄຟເໝາະສົມສໍາລັບໄມ້ໃຫ້ໝາກ ຫຼືອາດນໍາເອົາດິນນນີ້ໄປໃຊ້ຄືກັນກັບຫີນຟອສເຟດ.

### 8.4.5 ກະດູກສັດ

ກະດູກສັດ ໃຫ້ທາດ ແຄລຊຽມ (Ca) ແລະ ຟອສເຟດ (P) ໄດ້ເປັນຢ່າງດີ ໂດຍນໍາມາເຜົາ, ຕໍາໃຫ້ມຸ່ນ ນໍາໃຊ້ເປັນຝຸ່ນທໍາມະຊາດ ໃຫ້ທາດ ແຄລຊຽມ(Ca) ແລະ ຟອສເຟດ (P) ແລະ ແຮ່ທາດ ອີກຫຼາຍຊະນິດ. ວິທີໃຊ້ຄືກັນກັບຫີນຟອສເຟດ.

## 8.5 ການອະນຸລັກ ແລະ ນໍາໃຊ້ປະໂຫຍດໄມ້ໃຫ້ໝາກພື້ນເມືອງ

ໃນປະຈຸບັນປະເທດລາວ ເປັນປະເທດທີ່ມີຄວາມຫຼາກຫຼາຍທາງກຳມະພັນແຫ່ງໜຶ່ງຂອງໂລກ ເຮົາຈຶ່ງຄວນມີການອານຸລັກ ແລະ ນຳໃຊ້ປະໂຫຍດຄື :

**8.5.1 ກ້ວຍ**

ກ້ວຍໃນປະເທດເຮົາ ມີເປັນຈຳນວນຫລວງຫລາຍຊະນິດ ທີ່ສາມາດນຳມາພັດທະນາເປັນຜະລິດຕະພັນໝາກໄມ້ສົດ, ແປຮູບ, ເສັ້ນໃຍ ນຳໃຊ້ເຂົ້າໃນຫັດຖະກຳ, ໃບຕອງ ນຳມາໃຊ້ປະໂຫຍດໄດ້ຫຼາຍຢ່າງ. ນອກຈາກນັ້ນ, ປີກ້ວຍ ກໍ່ເປັນອາຫານ, ສ່ວນຢວກກ້ວຍ, ຕົ້ນກ້ວຍ ແລະ ສ່ວນອື່ນໆ ກໍ່ເປັນອາຫານສັດໄດ້ດີບາງຊະນິດກໍ່ນຳມາເປັນພືດສວຍງາມ ຫຼືໄມ້ປະດັບຢ່າງດີທາງເສດຖະກິດ.ດັ່ງນັ້ນ,ນັກວິຊາການຄວນມີການພັດທະນາໝາກໄມ້ພື້ນເມືອງຢ່າງກ້ວາງຂວາງ ເພື່ອຈຸດປະສົງພັດທະນາໃຫ້ເປັນໄມ້ເສດຖະກິດຕໍ່ໄປ.

**8.5.2 ໝາກມ່ວງ**

ຖືວ່າເປັນໝາກໄມ້ພື້ນເມືອງທີ່ສຳຄັນຂອງລາວ ມີຄວາມສຳຄັນຄື :

1. ໝາກມ່ວງປ່າ ເປັນກົກໄມ້ໃຫຍ່ໄວ ສາມາດພັດທະນາເປັນໄມ້ສວນເສດຖະກິດໄດ້.

2. ໝາກມ່ວງບ້ານ : ຄວນນຳມາເປັນຕົ້ນຕໍ ເພື່ອຜະລິດໝາກມ່ວງແຕ່ບໍ່ຄວນໃຊ້ໝາກມ່ວງປ່າມາເປັນຕົ້ນຕໍ ເພາະມັກມີກິ່ນຂິວ. ຄວນມີການຄັດເລືອກປະສົມພັນ ເພື່ອຍົກຄຸນນະພາບໃຫ້ມີຄ່າທາງເສດຖະກິດ.

**8.5.3 ໝາກໄຟ**

ເປັນໝາກໄມ້ປ່າຊະນິດນຶ່ງ ທີ່ມີຄວາມເປັນໄປໄດ້ໃນການຄັດເລືອກເອົາຕົ້ນທີ່ມີຣົດຊາດດີ, ໝາກໃຫຍ່, ສີໝາກງາມ ນຳມາຂະຫຍາຍພັນເປັນໄມ້ໃຫ້ໝາກເສດຖະກິດ.

**8.5.4 ໝາກເຟືອງ**

ເປັນໝາກໄມ້ກຳລັງມີຊື່ສຽງໃນຢູໂລບ ເພາະວ່າໝາກ ມີຮູບຮ່າງທີ່ສວຍງາມ ເຊິ່ງຢູໂລບເອີ້ວ່າ ( Star fruit ) ເພາະວ່າຫາກຜ່າຕັດລວງຈະເຫັນເປັນລັກສະນະຮູບດາວປະເທດມາເລເຊຍສາມາດຜະລິດເປັນໝາກໄມ້ສົ່ງອອກ ໝາກເຟືອງມີທັງສົ້ມ ແລະຫວານແຕ່ລົດທີ່ຄົນຕ່າງປະເທດມັກຄືລົດສົ້ມຫວານນັກວິຊາການຄວນມີການຄັດເລືອກແນວພັນເພື່ອສ້າງໃຫ້ເປັນ ໄມ້ໃຫ້ໝາກເສດຖະກິດຕໍ່ໄປ, ໝາກເຟືອງສົ້ມກໍ່ສາມາດນຳມາຜະລິດນ້ຳສົ້ມໄດ້ດີ

**8.5.5 ໝາກໄມ້ພື້ນເມືອງອື່ນໆ**

ມີໝາກໄມ້ຫຼາຍຊະນິດຂອງລາວ ທີ່ມີຄວາມອາສາມາດພັດທະນາເປັນໄມ້ເສດຖະກິດຂອງລາວ ເຊັ່ນ ໝາກຈອງນ້ອຍ ເປັນໝາກທີ່ມີສານເຍື່ອໃຍສູງ. ສາມາດນຳໄປຜະລິດເປັນສານອາຫານຫຼຸດຄວາມອ້ວນທີ່ບໍ່ມີຜົນຂ້າງຄຽງ ເຊັ່ນ : ໝາກເໜົ້າ, ຫວ້າ ແປຮູບເປັນນ້ຳໝາກໄມ້, ເຫຼົ້າວາຍ ມີລົດຊາດດີ ແລະ ອາດຈະມີໝາກໄມ້ອື່ນໆອີກ ເພາະຍັງບໍ່ທັນມີການຄົ້ນຄ້ວາ. ດັ່ງນັ້ນ, ຄວນຈະຄວນຈະສຶກສາຄົ້ນຄ້ວາພັນໄມ້ພື້ນເມືອງຕື່ມອີກ.

# ເອກະສານອ້າງອີງ


1. ກະຊວງກະສິກຳ ແລະປ່າໄມ້. 1993. ເອກະສານປະກອບການສິດສອນ ວິຊາການປູກ ໄມ້ໃຫ້ໝາກ. ຫລັກສູດເອກະພາບສຳລັບ 4 ໂຮງຮຽນກະສິກຳຊັ້ນກາງ ໂດຍການ ຊ່ວຍເຫລືອ ແລະ ຮ່ວມມືຈາກ ອົງການຊິດເຊ ແລະ ສະຖາບັນ ເຕັກໂນໂລຍີລາຊ ມົງຄົລ ປະເທດໄທ. ພິມທີ່ສະຫວັນນະເຂດ. 50 ນ.
2. ສະຖານີ ກະສິກຳຫາດດອກແກ້ວ. 1996. ຄູ່ມືກ່ຽວກັບໄມ້ໃຫ້ໝາກ. ກົມປູກຝັງ ແລະ ສົ່ງ ເສີມການກະເສດ.ກະຊວງກະສິກຳ - ປ່າໄມ້. 128 ນ.
3. ສົມລິດ ເຟື່ອງຈັນ. ພສ 2523. ຫລັກໄມ້ຜົນ. ຄະນະກະເສດສາດ ມະຫາວິທະຍາໄລ ຂອນແກ່ນ. 122 ນ.
4. ວັດທະນາ ສະວັນຍາທິປັດ. ພສ 2536. ການປູກໄມ້ຜົນ. ສຳນັກງານສົ່ງເສີມ ແລະ ຝຶກອົບຮົມ ມະຫາວິທະຍາໄລກະເສດສາດ. ນ 4 - 97.